ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

MRLG MEKONG REGION LAND GOVERNANCE

ກໍລະນີສຶກສາ

ການຄຸ້ມຄອງປ່າໄມ້ຕາມປະເພນີ ຂອງແມ່ຍິງໃນ ສປປ ລາວ:

ກໍລະນີສຶກສາກ່ຽວກັບສິດຂອງແມ່ຍິງໃນການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງຕາມປະເພນີ ເມືອງ ໃໝ່, ແຂວງ ຜົ້ງສາລີ, ສປປ ລາວ

ເພັດສາຄອນ ສົມຟອງບຸດຕະຂັນ

ພຶດສະພາ 2022

ກໍລະນີສຶກສາ

ການຄຸ້ມຄອງປ່າໄມ້ຕາມປະເພນີ ຂອງແມ່ຍິງໃນ ສປປ ລາວ:

ກໍລະນີສຶກສາກ່ຽວກັບສິດຂອງແມ່ຍິງໃນການເຂົ້າເຖິງ,
ນຳໃຊ້ ແລະ ຄຸ້ມຄອງຕາມປະເພນີ
ເມືອງ ໃໝ່, ແຂວງ ຜົ້ງສາລີ, ສປປ ລາວ

ເພັດສາຄອນ ສົມຟອງບຸດຕະຂັນ

ພຶດສະພາ 2022

ຄຳຂອບໃຈ

ກໍລະນີສຶກສານີ້ດຳເນີນໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (Land Information Working Group - LIWG) ໂດຍການຮ່ວມມືກັບຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ແລະ ໄດ້ຮັບການສະໜັບສະໜູນ ທຶນຈາກໂຄງການ ບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (Mekong Region Land Governance - MRLG). LIWG ຂໍຂອບໃຈໃນການສະໜັບສະໜູນຈາກ MRLG ແລະ ຂໍສະແດງຄວາມຂອບໃຈມາຍັງຄະນະນິຕິສາດ-ລັດຖະສາດ ທີ່ອານຸມັດໃນການດຳເນີນກໍລະນີສຶກສານີ້ ແລະ ການແຕ່ງຕັ້ງພະນັກງານເຂົ້າຮ່ວມໃນການເກັບກຳຂໍ້ມູນພາກສະໜາມ.

ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງສູງຕໍ່ການຮ່ວມມືຈາກພະນັກງານລັດ ໃນເມືອງ ໃໝ່ ແຂວງ ຜົ້ງສາລີ ທີ່ໄດ້ໃຊ້ເວລາໃນການໃຫ້ຂໍ້ມູນ, ແບ່ງປັນວິທີການເຮັດວຽກຕົວຈິງ, ແລກປ່ຽນທັດສະນະ ແລະ ປະສົບການກ່ຽວກັບ ສິດຄອບຄອງທີ່ດິນຕາມປະເພນີໃນພື້ນທີ່ສຶກສາ ແລະ ເຂົ້າຮ່ວມເກັບກຳຂໍ້ມູນ ພາກສະໜາມ. ພວກເຮົາຂໍຂອບໃຈເປັນພິເສດມາຍັງ ອົງການ ຫ່ວງໂຍຮ່ວມໃຈພັດທະນາ (World Renew) ທີ່ໃຫ້ການສະໜັບສະໜູນໃນການປະສານງານ, ແນະນຳບ້ານທີ່ໄປສຶກສາ ແລະ ລົງສະໜາມກັບພວກເຮົາ.

ຂໍຂອບໃຈມາຍັງທ່ານ Dr. James R. Chamberlain ທີ່ຊ່ວຍຜູ້ນຳທີມໃນການສຶກສາ ແລະ ຂຽນບົດ ຄົດເຖິງບັນຫາທີ່ຊັບຊ້ອນທີ່ຫຼີກລ່ຽງບໍ່ໄດ້ໃນການສຶກສາປະເພດນີ້.

ສຸດທ້າຍນີ້ພວກເຮົາຂໍສະແດງຄວາມຂອບໃຈຢ່າງສຸດຊຶ້ງມາຍັງຜູ້ທີ່ມີສ່ວນຮ່ວມໃນການສຶກສາທຸກທ່ານທັງແມ່ຍິງ ແລະ ຜູ້ຊາຍ ໃນບ້ານທີ່ສະລະເວລາ, ໃຫ້ຄວາມເຊື່ອໃຈ, ມິດຕະພາບ ແລະ ການຕ້ອນຮັບອັນອົບອຸ່ນແກ່ທີມງານພວກເຮົາ, ການສຶກສາຄັ້ງນີ້ບໍ່ສາມາດປະສົບຜົນສຳເລັດລົງໄດ້ໂດຍປາສະຈາກພວກເຂົາ.

ຜູ້ທົບທວນ ສະບັບພາສາອັງກິດ: Natalie Y. Campbell and Violaine Fourile

ຜູ້ກວດແກ້ ສະບັບພາສາອັງກິດ: Jan Taylor

ຜູ້ຖ່າຍພາບ: ເພັດສາຄອນ ສົມຝອງບຸດຕະຂັນ

ອອກແບບ: Watcharapol Isarangkul Na Ayuthaya

ການຂຽນອ້າງອີງ: ເພັດສາຄອນ ສົມຝອງບຸດຕະຂັນ. (2022). *ການຄຸ້ມຄອງປ່າໄມ້ຕາມປະເພນີ ຂອງແມ່ຍິງໃນ ສປປ ລາວ.* ກໍລະນີສຶກສາຂອງ MRLG ສະບັບທີ # 5. ວຽງຈັນ: LIWG, MRLG.

ການສຶກສານີ້ເປັນລິຂະສິດຂອງ Creative Commons Attribution-NonCommercial-ShareAlike 4.0 International License

ຂອບເຂດຄວາມຮັບຜິດຊອບ

ທັດສະນະ, ຄວາມຄິດເຫັນ ແລະ ການແປຄວາມໝາຍທີ່ສະແດງອອກໃນສິ່ງພິມນີ້ ແມ່ນຂອງຜູ້ຂຽນ ແລະ ຜູ້ມີສ່ວນຮ່ວມ ແລະ ບໍ່ຄວນຖືว່າເປັນຕົວແທນຄວາມຄິດເຫັນ ທີ່ເປັນທາງການ ຫຼື ບໍ່ເປັນທາງການ ຂອງ ອົງການເພື່ອການພັດທະນາ ແລະ ການຮ່ວມມື ຂອງປະເທດ ສະວິດເຊີແລນ, ອົງການຮ່ວມມືສາກົນ ຂອງປະເທດເຢຍລະມັນ ແລະອົງການຊ່ວຍເຫຼືອ ແລະ ພັດທະນາ ແຫ່ງ ຣາຊະອານາຈັກ ລຸກຊໍາບວກ

ຮູບໜ້າປົກ: ແມ່ຍິງ ເຜົ່າ ເຄີ ຈາກບ້ານ ສົມໄຊ ເມືອງ ຍອດອູ, ແຂວງ ຜົ້ງສາລີ ກຳລັງເປຍຝ້າຍ

ສາລະບານ

ລາຍການອັກສອນຫຍໍ້ **6**

1. ບົດນຳ **7**

2. ວິທີການ ແລະ ຈັນຍາບັນການຄົ້ນຄວ້າ **8**

2.1. ວິທີການ 8

2.2. ຈັນຍາບັນການຄົ້ນຄວ້າ 9

2.3. ຂໍ້ຈຳກັດ 9

3. ກອບແນວຄິດໃນການເຮັດວຽກ **10**

3.1. ການນິຍາມກົດລະບຽບຕາມປະເພນີ: ຕາມທັດສະນະຂອງປະຊາຊົນໃນບ້ານ 10

3.2. ກອບແນວຄິດສຳລັບການເຮັດວຽກ 10

4. ການຄອບຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຕາມປະເພນີໃນເຂດສຶກສາ **12**

4.1. ບ້ານ ຫາດຈາ ແລະ ບ້ານ ຝົນຫໍ 12

4.2. ການຮັບຮູ້ກ່ຽວກັບສິດທີ່ດິນຕາມປະເພນີ 16

4.3 ການປະຕິບັດກຳມະສິດຕາມປະເພນີຂອງແມ່ຍິງຕໍ່ກັບປ່າໄມ້ 17

4.4. ບົດບາດຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ 19

5. ຂໍ້ແນະນຳສຳລັບບາດກ້າວຕໍ່ໜ້າ **24**

6. ສະຫຼຸບ **26**

ເອກະສານອ້າງອິງ **27**

ເອກະສານຊ້ອນທ້າຍ 1: ລາຍຊື່ຜູ້ໃຫ້ການສຳພາດ **28**

ເອກະສານຊ້ອນທ້າຍ 2: ຈັນຍາບັນການຄົ້ນຄວ້າ **29**

ເອກະສານຊ້ອນທ້າຍ 3: ລາຍການ ແລະ ເສັ້ນສະແດງການນຳໃຊ້ຊັບພະຍາກອນປ່າໄມ້ **30**

ລາຍການອັກສອນຫຍໍ້

CAW	ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ
DAFO	ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
DoNRE	ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
IFAD	ກອງທຶນສາກົນສຳລັບການພັດທະນາກະສິກຳ
LIWG	ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
LFNC	ແນວລາວສ້າງຊາດ
LWU	ສະຫະພັນແມ່ຍິງລາວ
PLUP	ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ
PRA	ການປະເມີນຊົນນະບົດແບບມີສ່ວນຮ່ວມ
NGO	ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດ
NTFP	ເຄື່ອງປ່າຂອງດົງ
VFMP	ແຜນຄຸ້ມຄອງປ່າໄມ້ບ້ານ

1. ບົດນຳ

ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ມີຊາຍແດນຕິດກັບປະເທດຫວຽດນາມ, ໄທ, ຈີນ, ກຳປູເຈຍ ແລະ ມຽນມ້າ. ໂດຍພາບລວມ ພູມສັນຖານຂອງປະເທດ ປະກອບດ້ວຍເຂດທົ່ງພຽງ ແລະ ພູເຂົາ ແລະ ພື້ນທີ່ປົກຄຸມດ້ວຍປ່າໄມ້. ສຳລັບປ່າໄມ້ໃນເຂດພູເຂົາມີຄວາມຫຼາກຫຼາຍດ້ານຊີວະນາໆພັນ ແລະ ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ. ເຂດນີ້ຍັງເປັນບ່ອນຢູ່ອາໃສຂອງປະຊາຊົນຫຼາຍຊົນເຜົ່າ ທີ່ຕ້ອງອາໃສປ່າໄມ້ໃນການດຳລົງຊີວິດຕາມປະເພນີ, ເປັນວັດສະດຸເພື່ອປຸກສ້າງເຮືອນ, ພົດສະໝຸນໄພ ແລະ ຍັງມີຊັບພະຍາກອນທຳມາຊາດອີກຫຼາຍຢ່າງ ທີ່ຖືກນຳໃຊ້ໃນການປະກອບພິທີກຳທາງວັດທະນາທຳ ທີ່ເປັນສ່ວນສຳຄັນໃນລະບົບຄວາມເຊື່ອໃນສັງຄົມທ້ອງຖິ່ນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດໃນການດຳລົງຊີວິດ.

ຄວາມເຂົ້າໃຈຕໍ່ກັບຄຸນຄ່າ ແລະ ຄວາມເຊື່ອຂອງຊຸມຊົນໃນທ້ອງຖິ່ນ, ໂດຍສະເພາະຕໍ່ການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ນ້ຳ ເປັນສິ່ງສຳຄັນສຳຫຼັບໂຄງການພັດທະນາ ທີ່ມີເປົ້າໝາຍໃນການປັບປຸງຄວາມຢູ່ດີ-ກິນດີຂອງຊຸມຊົນ ເປັນຕົ້ນແມ່ນ ການເນັ້ນໃສ່ ເລື່ອງສິດທິຂອງແມ່ຍິງ, ຄວາມເທົ່າທຽມທາງເພດ ແລະ ການປ່ຽນແປງດ້ານຄວາມສະເໝີພາບລະຫວ່າງ ຍິງ-ຊາຍໃນທາງທີ່ດີຂຶ້ນ. ຈາກການທົບທວນເອກະສານກ່ຽວກັບບັນຫານີ້ ຍັງເຫັນວ່າ ການບັນທຶກເລື່ອງສິດຕາມປະເພນີໃນການຄຸ້ມຄອງທີ່ດິນໃນເຂດປ່າໄມ້ ແລະ ຊັບພະຍາກອນທຳມະຊາດແມ່ນຍັງມີໜ້ອຍຫລາຍຢູ່ໃນລາວ.

ຈາກການສຶກສາຂອງ ສົມຟອງບຸດຕະຂັນ (Somphongbountha-kanh) ແລະ ແຊນເບີເຈັນ (Sandbergen) (2020) ໃນມໍ່ໆມານີ້ໃນດ້ານການຮັບຮູ້ກຳມະສິດທີ່ດິນຂອງແມ່ຍິງຕາມປະເພນີ ໄດ້ເຫັນວ່າໃນຊົນເຜົ່າທີ່ໃຊ້ພາສາ ຕະກຸນ ລາວ-ໄຕ ແມ່ນມີການເຄົາລົບ ແລະ ຍອມຮັບສິດການນຳໃຊ້ທີ່ດິນຂອງແມ່ຍິງຕາມປະເພນີ ໃນສັງຄົມ, ໃນຂະນະດຽວ ກັນກໍ່ພົບວ່າ ຊົນເຜົ່າທີ່ໃຊ້ພາສາຕະກຸນ ມອນ-ຂະແມ, ມົ້ງ-ອີວ-ມ້ຽນ ແລະ ຊິໂນ-ທິເບດ ແມ່ຍິງຍັງບໍ່ທັນໄດ້ຮັບສິດເຫຼົ່ານີ້. ເຫດຜົນທີ່ພາໃຫ້ມີຄວາມແຕກຕ່າງ ຍ້ອນລະບົບໂຄງສ້າງທາງສັງຄົມໃນການສືບທອດມໍຣະດົກຜ່ານແມ່ສູ່ລູກສາວ ແລະ ສັງຄົມທີ່ສືບທອດມໍຣະດົກຈາກ ພໍ່ສູ່ລູກຊາຍ. ເຖິງຢ່າງໃດກໍ່ຕາມ ກ່ອນຈະສະຫຼຸບຕາມການຄົ້ນພົບດັ່ງກ່າວ, ຄວນມີການສຶກສາລາຍລະອຽດໃນການປະຕິບັດ ຕາມປະເພນີຂອງແຕ່ລະຊົນເຜົ່າກ່ອນ. ປົກກະຕິແລ້ວ ຊົນເຜົ່າທີ່ໃຊ້ ພາສາ ຕະກຸນ ລາວ-ໄຕ ຈະເປັນສັງຄົມທີ່ໃຫ້ການນັບຖືທັງສອງລະບົບໂຄງສ້າງ, ເຮັດໃຫ້ສະຖານະຂອງທັງສອງເພດ (ຍິງ-ຊາຍ) ມີຄວາມສະເໝີພາບຫຼາຍ ຫຼື ໜ້ອຍເທົ່າໆກັນ. ຍົກຕົວຢ່າງ ຊົນເຜົ່າ ໄຕ-ຢວນ ທີ່ຢູ່ທາງພາກເໜືອຂອງປະເທດໄທ, ຫຼາຍຄົນອາດເຫັນວ່າເປັນສັງຄົມແບບໃຫ້ຄວາມສຳຄັນໃນການສືບເຄືອຍາດຜ່ານທາງແມ່ ເຊິ່ງບາງຄົນບອກວ່າແມ່ຍິງສາມາດຕັດສິນໃຈໄດ້ຫຼາຍກວ່າ, ແຕ່ລະບົບການສືບເຊື້ອສາຍ ເຮົາບໍ່ສາມາດເຂົ້າໃຈໄດ້ວ່າແມ່ນການສືບສາຍຍາດຜ່ານຜູ້ຊາຍ ຫຼື ແມ່ຍິງ. ນອກຈາກນີ້ພວກເຮົາຕ້ອງເຂົ້າໃຈອີກວ່າ ຄຳວ່າ ການນັບຖືເຊື້ອສາຍທາງແມ່ ຫຼື ເຊື້ອສາຍທາງພໍ່ ເປັນພຽງແຕ່ອຸດົມຄະຕິເທົ່ານັ້ນ ແລະ ໃນທາງປະຕິບັດບໍ່ຈຳເປັນຕ້ອງເປັນແນວນັ້ນສະເໝີໄປ ໂດຍສະເພາະກ່ຽວກັບກຳມະສິດທີ່ດິນຕາມປະເພນີ.

ໃນ ສປປ ລາວ, ກົດໝາຍว่าด้ວຍທີ່ດິນສະບັບເກົ່າ (2003) ໄດ້ລະບຸຢ່າງຈະແຈ້ງເຖິງສິດຂອງແມ່ຍິງໃນການເຂົ້າເຖິງທີ່ດິນ, ຈຶ່ງຖືເປັນພື້ນຖານ ໃນການເພີ່ມຄວາມໝັ້ນຄົງຕໍ່ທີ່ດິນໃຫ້ແກ່ແມ່ຍິງ. ເຖິງຢ່າງໃດກໍ່ຕາມ, ກົດໝາຍว่าด้ວຍທີ່ດິນສະບັບປັບປຸງໃໝ່ (2019) ແລະ ກົດໝາຍว่าด้ວຍປ່າໄມ້ (2019) ຍັງບໍ່ໄດ້ເວົ້າເຖິງເລື່ອງການປະຕິບັດຕາມປະເພນີ, ຮີດຄອງປະເພນີ ແລະ ຄຸນຄ່າ ແລະ ບໍ່ໄດ້ໃຫ້ຄວາມສຳຄັນໃນເລື່ອງການເຂົ້າເຖິງລະບົບເຫຼົ່ານີ້ຂອງແມ່ຍິງເທື່ອ (MRLG & LIWG, 20201). ຍົກຕົວຢ່າງ ກົດໝາຍว่าด้ວຍທີ່ດິນ (2019), ບໍ່ໄດ້ເວົ້າເຖິງບັນຫາສິດຂອງແມ່ຍິງທີ່ຈະຮັບປະກັນການຄອບຄອງທີ່ດິນ, ເຊິ່ງແຕກຕ່າງຈາກກົດໝາຍທີ່ດິນປີ 2003 ທີ່ໄດ້ເວົ້າເຖິງຜູ້ຍິງ ແລະ ການມີຊື່ຮ່ວມໃນການອອກໃບຕາດິນ. ໃນສ່ວນຂອງການນຳໃຊ້ທີ່ດິນຕາມປະເພນີ, ມາດຕາ 130 ຂອງກົດໝາຍว่าด้ວຍທີ່ດິນ ໄດ້ລະບຸໄວ້ว่า ການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີແມ່ນກຳນົດຈາກການນຳໃຊ້ທີ່ດິນຕໍ່ເນື່ອງກັນເປັນເວລາ 20 ປີ ໂດຍບໍ່ມີຂໍ້ຂັດແຍ່ງໃດໆ. ເຖິງວ່າສິ່ງນີ້ຈະເປັນບາດກ້າວໜຶ່ງ ໃນການຍອມຮັບ ການນຳໃຊ້ທີ່ດິນຕາມປະເພນີຫຼາຍຂຶ້ນ, ແຕ່ຄຳว่า 'ການໃຊ້' ທີ່ດິນຍັງບໍ່ຈະແຈ້ງ ແລະ ບໍ່ໄດ້ຖືກນິຍາມ, ແລະ ມັກສັນນິຖານว่าแม่นการใช้ดิน 'ພາຍໃຕ້ການທຳການຜະລິດ'. ການໃຫ້ຄຳນິຍາມ ຫຼື ການແປຄວາມໝາຍແບບນີ້ຈະເຮັດໃຫ້ສິດຕໍ່ກຳມະສິດທີ່ດິນ ໃນການເຮັດໄຮ່ໝູນວຽນບໍ່ຖືກຍອມຮັບ ເພາະວ່າຊຸມຊົນສ່ວນຫຼາຍເຮັດກະສິກຳໄຮ່ໝູນວຽນຕາມປະເພນີ ໂດຍ 'ນຳໃຊ້' ດິນ ຄັ້ງໜຶ່ງແລ້ວປະໃຫ້ດິນຫວ່າງ ແລະ ເກີດປ່າຄືນໃໝ່ໃນໄລຍະເວລາຫຼາຍກວ່າ 20 ປີ ຈຶ່ງກັບມາບ່ອນເກົ່າ. ຖ້າການແປຄວາມໝາຍຕາມກົດໝາຍ ທີ່ແປว่าการปะไว้เท่ากับบ่ำใช้ ເຮັດໃຫ້ປະຊາຊົນ ທີ່ເຮັດໄຮ່ໝູນວຽນ ໃນຊຸມຊົນຊົນເຜົ່າຈະສູນເສຍທີ່ດິນຂອງເຂົາເຈົ້າເປັນຈຳນວນຫຼາຍ, ເຊິ່ງມີໂອກາດເປັນໄປໄດ້ว่า ການດຳລົງຊີວິດຂອງພວກເຂົາແມ່ນຂຶ້ນກັບໄລຍະເວລາຂອງຮອບວຽນນີ້. ການເຮັດກະສິກຳຕາມປະເພນີຄວນຖືກນຳມາພິຈາລະນາໃນການຈັດຕັ້ງປະຕິບັດກົດໝາຍ. ຄວນຈະມີການອະທິບາຍລະອຽດກ່ຽວກັບບັນຫານີ້ ໃນນິຕິກຳລຸ່ມກົດໝາຍ ຫຼື ຂໍ້ແນະນຳທີ່ກ່ຽວຂ້ອງເພື່ອໃຫ້ມີຄວາມຈະແຈ້ງຂຶ້ນກວ່າເກົ່າ ເພື່ອຮັບປະກັນว่าสิดการนำใช้ที่ดินຂອງແມ່ຍິງບໍ່ຖືກມອງຂ້າມ, ບໍ່ດັ່ງນັ້ນ ອາດຈະເປັນອຸປະສັກຕໍ່ກັບຊຸມຊົນ ແລະ ອາດສົ່ງຜົນກະທົບທາງເສດຖະກິດ-ສັງຄົມໃນດ້ານລົບ.

ດັ່ງນັ້ນ, ເຖິງว่าจะมีความก้าวหน้าในการเรัดให้เกิดการรับรู้ການປະຕິບັດຕາມປະເພນີໃນກົດໝາຍທີ່ດິນ, ແຕ່ກົດລະບຽບນີ້ຍັງບໍ່ໄດ້ເວົ້າເຖິງສິດຂອງແມ່ຍິງໃນການຄອບຄອງທີ່ດິນໂດຍລວມ, ອາດເຮັດໃຫ້ແມ່ຍິງບາງກຸ່ມຄົນທີ່ຢູ່ພາຍໃຕ້ລະບົບສືບທອດມໍລະດົກຜ່ານທາງພໍ່ສູ່ລູກຊາຍ ເສຍຜົນປະ�โຫຍດຢ່າງຊັດເຈນ.

ສ່ວນໃຫຍ່ແລ້ວ ທີ່ດິນແມ່ນໜຶ່ງໃນຊັບສິນທີ່ມີຄ່າຫຼາຍສຳຫຼັບຜູ້ຊາຍ ແລະ ແມ່ຍິງ, ທີ່ດິນຍັງເປັນສູນກາງຂອງການດຳລົງຊີວິດໃນຮູບແບບເປັນບ່ອນທຳການຜະລິດປູກຝັງ, ລ້ຽງສັດ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານໂດຍລວມ ເຊິ່ງສ່ວນໃຫຍ່ແລ້ວວຽກເຫຼົ່ານີ້ຈະເປັນກົດຈະກຳທີ່ກ່ຽວຂ້ອງກັບແມ່ຍິງ. ລະບົບດັ່ງກ່າວມີວິວັດທະນາການມາຫຼາຍຊົ່ວອາຍຸຄົນ ແລະ ມີການປັບປ່ຽນມາຢ່າງຕໍ່ເນື່ອງຢ່າງມີເອກະລັກ ເຊິ່ງພວກເຮົາເອີ້ນว่า ການປະຕິບັດຕາມປະເພນີ. ກໍລະນີສຶກສາສະບັບນີ້ແມ່ນເພື່ອສ້າງຄວາມກະຈ່າງແຈ້ງໃນບັນຫາທີ່ກ່ຽວຂ້ອງກັບການເຂົ້າເຖິງສິດຄອບຄອງທີ່ດິນ ແລະ ປ່າໄມ້ຂອງແມ່ຍິງໃນລະບົບການປະຕິບັດຕາມປະເພນີ.

ໃນບົດລາຍງານກໍລະນີສຶກສາສະບັບນີ້ ແມ່ນການສະເໜີຜົນໄດ້ຮັບຈາກການສຶກສາໃນສອງບ້ານຢູ່ເມືອງໃໝ່ ແຂວງຜົ້ງສາລີ. ຕອນຕົ້ນຂອງບົດລາຍງານ ແມ່ນສະເໜີກ່ຽວກັບ ການຮັບຮູ້ຂອງຊຸມຊົນ ໃນສອງບ້ານຕໍ່ການຄອບຄອງທີ່ດິນຕາມປະເພນີ. ຈາກນັ້ນຈະສະແດງໃຫ້ເຫັນເຖິງ ການຄອບຄອງທີ່ດິນຕາມປະເພນີຂອງແມ່ຍິງໃນບ້ານ ແລະ ການສຶກສາລະອຽດເລື່ອງບົດບາດຂອງແມ່ຍິງໃນການຄຸ້ມຄອງທີ່ດິນ ແລະ ປ່າໄມ້. ສຸດທ້າຍແມ່ນຂໍ້ແນະນຳ ແລະ ແນວທາງໃນການເພີ່ມການຮັບຮູ້ສິດການຄອບຄອງທີ່ດິນຕາມປະເພນີສຳລັບແມ່ຍິງ.

2. ວິທີການ ແລະ ຈັນຍາບັນການຄົ້ນຄວ້າ

2.1. ວິທີການ

ກໍລະນີສຶກສານີ້ ໄດ້ດຳເນີນຢູ່ສອງບ້ານ ໃນເມືອງໃໝ່ ແຂວງ ຜົ້ງສາລີ ທາງພາກເໜືອຂອງ ສປປ ລາວ. ບ້ານໜຶ່ງເປັນບ້ານຂອງຊົນເຜົ່າ ກົມມຸ-ອູ (ມອນ-ຂະແມ) ແລະ ອີກບ້ານໜຶ່ງເປັນບ້ານຂອງຊົນເຜົ່າໄຕຂາວ (ລາວ-ໄຕ). ການເຮັດວຽກ ພາກສະໜາມເລີ່ມໃນທ້າຍເດືອນ ມັງກອນ ຫາ ຕົ້ນເດືອນ ກຸມພາ ປີ 2021.

ກໍລະນີສຶກສາໄດ້ນຳໃຊ້ຫຼາຍວິທີການປະສົມປະສານກັນ ເຊັ່ນ: ທົບທວນເອກະສານທີ່ກ່ຽວຂ້ອງ, ເກັບກຳຂໍ້ມູນເບື້ອງຕົ້ນໂດຍໃຊ້ເຄື່ອງມື ການປະເມີນຊົນນະບົດແບບມີສ່ວນຮ່ວມ ລວມທັງການສຳພາດ ອຳນາດການປົກຄອງບ້ານ, ຜູ້ເຖົ້າ ຜູ້ແກ່ໃນບ້ານທັງແມ່ຍິງ ແລະ ຜູ້ຊາຍ, ສົນທະນາແຍກກຸ່ມຜູ້ຍິງ ແລະ ຜູ້ຊາຍ ທີ່ເປັນຕົວແທນຈາກສະຖານະທາງສັງຄົມຕ່າງກັນ[1]. ການເຮັດວຽກພາກສະໜາມແມ່ນ ລວມທັງການໃຊ້ເວລາໃນຊຸມຊົນ ແລະ ເຮັດກິດຈະກຳປະຈຳວັນ ຮ່ວມກັບປະຊາຊົນ ພ້ອມທັງການຍ່າງສຳຫຼວດບ້ານ ແລະ ສັງເກດການຜູ້ເຂົ້າຮ່ວມ.

ໃນລະຫວ່າງການສຶກສາ, ໄດ້ມີການສ້າງແບບສອບຖາມ ແລະ ປຶກສາຫາລືກັບສະມາຊິກຄະນະກຳມະການ ການສຶກສາ[2], ສຳລັບເງື່ອນໄຂໃນການເລືອກບ້ານ[3]. ແມ່ນໄດ້ຕົກລົງກັນລ່ວງໜ້າກ່ອນການສຶກສາ. ກ່ອນລົງເຮັດວຽກຢູ່ບ້ານ ທີມງານໄດ້ເຂົ້າພົບຕົວແທນຫ້ອງການທີ່ມີໜ້າທີ່ຮັບຜິດຊອບໂດຍກົງໃນຫົວຂໍ້ການສຶກສານີ້ ແລະ ລວມທັງວິຊາການທີ່ຈະເຂົ້າຮ່ວມເກັບກຳຂໍ້ມູນພາກສະໜາມ. ຜູ້ເຂົ້າຮ່ວມການປະຊຸມໄດ້ແກ່ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານວິຊາການຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO), ຫ້ອງການຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ (DoNRE), ແນວລາວສ້າງຊາດ (LFNC), ສະຫະພັນແມ່ຍິງ (LWU) ແລະ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ (CAW) ຂັ້ນເມືອງ. ການເຂົ້າພົບຄັ້ງນີ້ແມ່ນເພື່ອສຳພາດເກັບກຳຂໍ້ມູນທີ່ກ່ຽວຂ້ອງ ແລະ ປຶກສາຫາລືເຖິງ ວິທີການໃນການຄົ້ນຄວ້າ.

ຄຳອະທິບາຍ: ການແຕ້ມແຜນທີ່ປ່າໄມ້ບ້ານກັບກຸ່ມແມ່ຍິງ ບ້ານ ຫາດຈາ

1 ເບິ່ງຈຳນວນຜູ້ໃຫ້ການສຳພາດໃນເອກະສານຊ້ອນທ້າຍ 1.

2 ສະມາຊິກຄະນະກຳມະການ ການສຶກສາ ປະກອບດ້ວຍຕົວແທນຈາກ LIWG, MRLG ແລະ CARE ທີ່ມີປະສົບການໃນການເຮັດວຽກກ່ຽວກັບທີ່ດິນ, ປ່າໄມ້ ແລະ ບົດບາດຍິງ-ຊາຍ.

3 ເງື່ອນໄຂການເລືອກບ້ານຄື: (1) ເປັນບ້ານດັ້ງເດີມທີ່ປະຊາຊົນຍັງເຮັດໄຮ່; (2) ຍັງຮັກສາຮີດຄອງປະເພນີ; (3) ບ້ານທີ່ເຮັດນາ ແລະ ໃຊ້ດິນຫຼາຍຮູບແບບ; (4) ຊົນເຜົ່າຕ່າງກັນ (ກຳລະນີສຶກສານີ້ແມ່ນບ້ານທີ່ເປັນເຜົ່າໃນຕະກຸນພາສາ ມອນ-ຂະແມ ແລະ ລາວ-ໄຕ); (5) ບ້ານຢູ່ໃນເຂດຊົນນະບົດ ແລະ ມີປ່າໄມ້; (6) ບ້ານໜຶ່ງໄດ້ເຮັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແລ້ວ ແລະ ອີກບ້ານໜຶ່ງບໍ່ໄດ້ເຮັດກິດຈະກຳ PLUP; (7) ບ້ານອ້ອມຮອບໄປດ້ວຍປ່າດົງດິບ ແລະ ຄຸ້ມຄອງໂດຍປະຊາຊົນ.

ສຳລັບຂັ້ນບ້ານ, ທີມງານໃຊ້ເວລາ 4 ມື້ 3 ຄືນໃນແຕ່ລະບ້ານ. ຂະບວນການເກັບກຳຂໍ້ມູນດຳເນີນດັ່ງນີ້: ມື້ທີ່ນຶ່ງ ແມ່ນເລີ່ມ ຈາກການສົນທະນາກັບອຳນາດການປົກຄອງ ແລະ ເຖົ້າແກ່ແນວໂຮມບ້ານ ກ່ຽວ ກັບການນຳໃຊ້ທີ່ດິນ ແລະ ປ່າໄມ້ໂດຍລວມ, ລວມທັງດ້ານເສດຖະກິດ-ສັງຄົມ, ບົດບາດ ຍິງ-ຊາຍ ແລະ ຂໍ້ມູນກ່ຽວກັບການພັດທະນາໃນບ້ານ. ຫຼັງຈາກນັ້ນ, ໄດ້ໂອ້ລົມກັບຜູ້ອາວຸໂສທັງຜູ້ຊາຍ ແລະ ແມ່ຍິງ ເພື່ອຮຽນຮູ້ກ່ຽວກັບວັດທະນະທຳ, ຄວາມເຊື່ອ ແລະ ຄວາມສຳພັນຂອງເຂົາເຈົ້າກັບທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ. ເພື່ອໃຫ້ເຂົ້າໃຈກ່ຽວ ກັບຫົວຂໍ້ທີ່ພວກເຮົາສຶກສາຢ່າງເລິກເຊິ່ງ, ທີມງານໄດ້ແຍກການເກັບຂໍ້ມູນກັບກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ ໃນມື້ທີສອງ ແລະ ມື້ທີສາມ ໂດຍນຳໃຊ້ວິທີການ ການປະເມີນຊົນນະບົດແບບມີສ່ວນຮ່ວມ (Participatory Rural Assessment - PRA), ເຄື່ອງມືການວິເຄາະບົດບາດຍິງ-ຊາຍ, ການສຳພາດໂດຍການໃຊ້ແບບສອບຖາມ, ຍ່າງສຳຫຼວດບ້ານ ແລະ ປ່າໄມ້ ແລະ ແຫລ່ງອາຫານຕາມປ່າ. ພວກເຮົາໄດ້ສຳພາດບຸກຄົນທີ່ເປັນພໍ່ແມ່ລ້ຽງດ່ຽວ (ຣ້ານ-ໝ້ານ) ແລະ ບຸກຄົນທີ່ຈັດຢູ່ໃນຄອບຄົວ 'ທຸກຍາກ' ໂດຍອຳນາດການປົກຄອງບ້ານ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບຄວາມຫຼາກຫຼາຍທາງດ້ານສັງຄົມ-ວັດທະນະທຳໃນບ້ານ. ໃນມື້ທີສີ່ຂອງການລົງເຮັດວຽກພາກສະໜາມໃນແຕ່ລະບ້ານ ພວກເຮົາໄດ້ຈັດກອງປະຊຸມບ້ານເພື່ອແລກປ່ຽນຂໍ້ມູນທີ່ເກັບກຳໄດ້ ແລະ ເພື່ອກວດສອບຄວາມຖືກຕ້ອງຂອງຂໍ້ມູນກ່ອນອອກຈາກບ້ານ.

ຂໍ້ມູນທີ່ໄດ້ຈາກສອງບ້ານໄດ້ຖືກນຳມາສົນທະນາຢ່າງລະອຽດກັບສະມາຊິກທີມພາກສະໜາມ ແລະ ພະນັກງານເມືອງ ກ່ອນກັບມາຫ້ອງການເພື່ອຂຽນລາຍງານ. ຂໍ້ມູນທີ່ໄດ້ທັງໝົດ 4 ຂໍ້ໃຫຍ່ ແມ່ນອີງຕາມຄຳຖາມຫຼັກຂອງການຄົ້ນຄວ້າຄັ້ງນີ້. ການນຳ ສະເໜີ ຂໍ້ມູນ ແມ່ນໄດ້ວິເຄາະຮ່ວມກັນທັງສອງບ້ານສຳລັບຂໍ້ມູນມີຄວາມຄ້າຍຄືກັນ ແລະ ແຍກໃຫ້ເຫັນສຳລັບຂໍ້ມູນທີ່ຕ່າງກັນ ດັ່ງຈະສະເໜີເປັນແຕ່ລະກໍລະນີຕໍ່ໄປນີ້.

2.2. ຈັນຍາບັນການຄົ້ນຄວ້າ

ສະມາຊິກທີມງານສຶກສາໄດ້ປະຕິບັດຕາມຫຼັກການທາງຈັນຍາບັນຢ່າງເຂັ້ມງວດ ໃນລະຫວ່າງການລົງເຮັດວຽກພາກສະໜາມເພື່ອຫຼີກເວັ້ນການປະຕິບັດທີ່ເປັນຜົນລົບ ລະຫວ່າງສະມາຊິກໃນທີມເອງ ແລະ ຕໍ່ກັບຜູ້ເຂົ້າຮ່ວມໃນການຄົ້ນຄວ້າ. ແມ່ຍິງທີ່ມີລູກຫຼາຍຄົນ, ຜູ້ພິການ, ຄອບຄົວ "ທຸກຍາກ" ແລະ ແມ່ໝ້າຍ ແມ່ນຖືກປະຕິບັດເປັນພິເສດ ດ້ວຍຄວາມເຄົາລົບສິດທິຂອງເຂົາເຈົ້າເປັນຢ່າງສູງ. ພວກເຮົາໄດ້ຂໍອະນຸຍາດກ່ຽວກັບການເຫັນດີຍິນຍອມ ໃນການ ໃຫ້ຂໍ້ມູນ, ລວມທັງການຖ່າຍຮູບເວລາເຮັດກິດຈະກຳກຸ່ມ, ບຸກຄົນ ແລະ ສະຖານທີ່ສັກສິດ[4].

2.3. ຂໍ້ຈຳກັດ

ເນື່ອງຈາກຂໍ້ຈຳກັດທາງດ້ານທຶນ ແລະ ການປະສານງານໃນລະດັບທ້ອງຖິ່ນ, ກໍລະນີສຶກສານີ້ດຳເນີນຢູ່ພຽງແຕ່ສອງບ້ານຂອງຊົນເຜົ່າທີ່ມີລັກສະນະການປະຕິບັດທາງສັງຄົມການສືບທອດມໍລະດົກຈາກພໍ່ສູ່ລູກຊາຍ. ດັ່ງນັ້ນຈຶ່ງບໍ່ໄດ້ມີຂໍ້ມູນກ່ຽວກັບຊຸມຊົນທີ່ມີລະບົບການສືບມໍລະດົກຜ່ານແມ່ສູ່ລູກສາວ ຫຼື ທັງສອງລະບົບ. ເວລາທີ່ໃຊ້ໃນແຕ່ລະບ້ານບໍ່ພຽງພໍທີ່ຈະເກັບກຳຂໍ້ມູນໄດ້ຢ່າງກວ້າງຂວາງ ແລະ ລະອຽດໃນການສຶກສາແບບນີ້. ການບັນທຶກ ແລະ ເອກະສານທີ່ມີລັກສະນະວິທະຍາສາດ ກ່ຽວກັບລະບົບການຄອບຄອງທີ່ດິນຕາມປະເພນີຂອງແມ່ຍິງໃນ ສປປ ລາວ ເພື່ອມາສະໜັບສະໜູນການວິເຄາະຍັງມີຈຳກັດ. ອຸປະສັກທາງພາສາ ແລະ ຄວາມອ່ອນໄຫວທາງວັດທະນະທຳ ສົ່ງຜົນກະທົບຕໍ່ຄຸນນະພາບການເກັບກຳຂໍ້ມູນ, ລວມທັງການໄດ້ຮັບຄວາມໄວ້ວາງใจจากสะมาชิกในชุมชน ເມື່ອສົນທະນາກ່ຽວກັບຄວາມເຊື່ອ ແລະ ການປະຕິບັດພິທີກຳທາງສາດສະໜາຂອງພວກເຂົາ. ການສຶກສາຕໍ່ໜ້າຄວນເອົາໃຈໃສ່ເພື່ອແກ້ໄຂບັນຫາຂໍ້ຈຳກັດເຫຼົ່ານີ້.

ແຜນທີ່ກ່ຽວກັບທີ່ດິນ, ການນຳໃຊ້ ແລະ ບົດບາດຍິງ-ຊາຍ, ຜົນໄດ້ຈາກກິດຈະກຳແບບມີສ່ວນຮ່ວມໃນບ້ານ ຝົນຫໍ. ກຸ່ມແມ່ຍິງ



ແຜນທີ່ກ່ຽວກັບທີ່ດິນ, ການນຳໃຊ້ ແລະ ບົດບາດຍິງ-ຊາຍ, ຜົນໄດ້ຈາກກິດຈະກຳແບບມີສ່ວນຮ່ວມໃນບ້ານ ຝົນຫໍ. ກຸ່ມຜູ້ຊາຍ

4 ເບິ່ງ 'ກິດລະບຽບຫຼັກ' ໃນເອກະສານຊ້ອນທ້າຍ 2.

3. ກອບແນວຄິດໃນການເຮັດວຽກ

ໃນພາກນີ້ຈະໄດ້ກວດສອບແນວຄິດ ຄວາມເຂົ້າໃຈດ້ານບົດບາດຍິງ-ຊາຍ ຂອງປະຊາຊົນ ເປັນຕົ້ນກ່ຽວກັບບັນທັດຖານທາງສັງຄົມ ແລະ ທຳນຽມທີ່ກ່ຽວຂ້ອງກັບການຄອບຄອງທີ່ດິນຕາມປະເພນີ ແລະ ນອກຈາກນັ້ນ ຈະສະເໜີຄຳນິຍາມ ແລະ ຄຳສັບທີ່ໃຊ້ໃນການວິເຄາະສຳລັບການສຶກສາຄັ້ງນີ້.

3.1. ການນິຍາມກົດລະບຽບຕາມປະເພນີ: ຕາມທັດສະນະຂອງປະຊາຊົນໃນບ້ານ

ໂດຍທົ່ວໄປແລ້ວ, ຄຳນິຍາມຂອງທຳນຽມ ແລະ ຂໍ້ຍົກເວັ້ນ (ໝາຍເຖິງ 'ກົດລະບຽບ' ທີ່ໃຊ້ໃນການສຶກສານີ້) ແມ່ນອີງຕາມກົດປະເພນີ ຫຼື ການປະຕິບັດຕາມວັດທະນະທຳດັ້ງເດີມ. Qrebech (2005) ໄດ້ອ້າງເຖິງນິຍາມຂອງ 'ຮີດຄອງ' ຈາກ Visto (2003) ໄວ້ດັ່ງນີ້:

> *... ໝາຍເຖິງຊຸດຂອງການສ້າງຮູບແບບພຶດຕິກຳ ການປະຕິສຳພັນລະຫວ່າງມະນຸດ, ເຊິ່ງອາດຢືນຢັນໄດ້ຢ່າງເປັນຮູບປະທຳໃນສະພາບສັງຄົມສະເພາະໃດໜຶ່ງ, ຍ້ອນວ່າພຶດຕິກຳເຫຼົ່ານີ້ຖືກນຳມາໃຊ້ໃນການດຳລົງຊີວິດປະຈຳວັນ ... ກົດໝາຍຕາມປະເພນີ (ກົດລະບຽບ) ເປັນແນວທາງປະຕິບັດທີ່ເປັນພຶດຕິກຳຂອງສັງຄົມ ເຊິ່ງມີສິ່ງທີ່ເຮັດໄດ້ ແລະ ຫ້າມເຮັດ ອີງຕາມບັນທັດຖານ, ການປະຕິບັດ ແລະ ນຳໃຊ້ ແລະ ມີກົນໄກຄວບຄຸມໃນການປະຕິບັດ ເຊັ່ນ ຂໍ້ຫ້າມ ຫຼື ການຂະລຳ, ການປະຈານ-ລົງໂທດ, ພິທີກຳທາງສັງຄົມ, ວັດທະນະທຳ, ທ່າທາງໃນພື້ນທີ່ສາທາລະນະ ແລະ ຈັນຍາບັນຂອງບຸກຄົນ. ດັ່ງນັ້ນ, ບັນທັດຖານເຫຼົ່ານີ້ເຮັດໃຫ້ຮູບແບບຂອງພຶດຕິກຳຍັງຄົງຢູ່ ແລະ ຄວບຄຸມສັງຄົມ, ວັດທະນະທຳ ແລະ ສາດສະໜາໃນບຸກຄົນ ແລະ ຄອບຄົວ.* (Visto, 2003)

ຊາວບ້ານ ໃນບ້ານທີ່ສຶກສານີ້ ໃຫ້ຄຳນິຍາມກ່ຽວກັບ ລະບຽບຕາມປະເພນີ ຄ້າຍຄືກັບນິຍາມທີ່ກ່າວມາຂ້າງເທິງ. ດັ່ງແມ່ຍິງໄຕຂາວ, ອາຍຸ 55 ປີ, ອະດີດສະຫະພັນແມ່ຍິງບ້ານ ຈາກບ້ານ ຝົນຫໍ ກ່າວກັບທີມງານວ່າ: *'ກົດລະບຽບຕາມປະເພນີແມ່ນສິ່ງທີ່ເຮົາປະຕິບັດໃນຊີວິດປະຈຳວັນ, ແມ່ນການຮຽນຮູ້ຈາກຜູ້ເຖົ້າຜູ້ຊາຍທີ່ເຮົາເຄົາລົບ, ເຊິ່ງທຸກຄົນຕ້ອງປະຕິບັດຕາມ. ຖ້າຫາກພວກເຮົາບໍ່ປະຕິບັດຕາມ ລະບຽບ, ຄົນອື່ນກໍ່ຈະບໍ່ເຄົາລົບເຮົາ.'*

ລຽງ ຊຽງຮຸ່ງ, ອາຍຸ 81 ປີ, ຊົນເຜົ່າ ກົມມຸ-ອູ ຈາກບ້ານ ຫາດຈາ ກ່າວວ່າ: *'ກົດລະບຽບຕາມປະເພນີແມ່ນສິ່ງທີ່ປະຕິບັດຕາມຮີດຄອງ, ເປັນຫຼັກການໃນການດຳລົງຊີວິດຮ່ວມກັນຢ່າງສະຫງົບສຸກ ແລະ ສົ່ງຜ່ານໄປແຕ່ລະຮຸ່ນຄົນ. ກົດລະບຽບຕາມ ປະເພນີນີ້ ຖືກສ້າງຂຶ້ນໂດຍກຸ່ມຜູ້ຊາຍ ຜູ້ທີ່ປະຊາຊົນພາຍໃນບ້ານເຄົາລົບນັບຖື ແລະ ຜູ້ຄົນເຫຼົ່ານີ້ຍັງເປັນທີ່ນັບຖືຂອງຍາດພີ່ນ້ອງຈາກບ້ານໃກ້ຄຽງນຳອີກ.'*

ນອກຈາກນີ້, ທັງຜູ້ຊາຍ ແລະ ແມ່ຍິງຈາກສອງບ້ານໃຫ້ຄວາມເຫັນຄ້າຍຄືກັນວ່າ: ກົດລະບຽບຕາມປະເພນີແມ່ນຫຼັກການ ຊີ້ນຳພຶດຕິກຳ, ເພື່ອຮັບປະກັນວ່າປະຊາຊົນທຸກຄົນໃນບ້ານເຮັດຄືກັນເພື່ອ ຄວາມເອກະພາບ, ຄວາມສຸກ ແລະ ນັບຖືເຊິ່ງກັນ ແລະ ກັນ ໂດຍຜ່ານການເຮັດພິທີກຳ ແລະ ຮັກສາຄວາມເຊື່ອເພື່ອຄວາມສຸກຂອງທຸກຄົນ. ຜູ້ຊາຍ ແລະ ແມ່ຍິງມີລະບຽບ ແລະ ບັນທັດຖານທາງສັງຄົມ ໂດຍອີງຕາມເພດຂອງໂຕເອງ - ຍົກຕົວຢ່າງ ຄວາມເຊື່ອຕາມປະເພນີທີ່ວ່າ ຜູ້ຊາຍ ຫຼື ຜົວແມ່ນຫົວໜ້າຄອບຄົວ ຫຼື ເປັນຜູ້ນຳຊຸມຊົນ, ພວກເຂົາແມ່ນຜູ້ທີ່ຕັດສິນຊີ້ຂາດກ່ຽວກັບບັນຫາໃນຄອບຄົວ ຫຼື ຊຸມຊົນ. ໃນອີກດ້ານໜຶ່ງກັບເຊື່ອວ່າ ແມ່ຍິງເປັນຜູ້ປະຕິບັດຕາມ, ເປັນຜູ້ເບິ່ງແຍງຄວາມລະອຽດຂອງສະມາຊິກໃນຄອບຄົວ, ອ່ອນນ້ອມຖ່ອມຕົນ ແລະ ຟັງຄຳເວົ້າຂອງຫົວໜ້າຄອບຄົວທີ່ເປັນຜູ້ຊາຍ. ຫາກຝ່າຍໃດໜຶ່ງບໍ່ສາມາດປະຕິບັດຕາມມາດຖານ ແລະ ພຶດຕິກຳທີ່ກຳນົດເຫຼົ່ານີ້ໄດ້ ກໍ່ສາມາດເປັນສາເຫດເຮັດໃຫ້ເສຍໜ້າ ຫຼື ອັບອາຍ ແລະ ອາດຖືກລົງໂທດໄດ້, ເຊິ່ງໃນກໍລະນີຮ້າຍແຮງອາດຖືກຕັດອອກຈາກເຄືອຍາດ ຫຼື ເຖິງຂັ້ນໄລ່ອອກຈາກຊຸມຊົນ.

3.2. ກອບແນວຄິດສຳລັບການເຮັດວຽກ

ຄວາມເປັນເຈົ້າຂອງທີ່ດິນ ມີສອງລັກສະນະເຊັ່ນ: ເປັນສັບສິນບັດຂອງບຸກຄົນ ຫຼື ສ່ວນລວມ. ສິດໃນທີ່ດິນຖືກຮັບຮູ້ໃນສອງຮູບແບບໄດ້ແກ່: ແບບບໍ່ເປັນທາງການ *(ໂດຍທາງປະຕິບັດຕາມປະເພນີ)* ແລະ ແບບທາງການ *(ຕາມກົດໝາຍ)*. Larson (2012. p. 27) ໄດ້ອະທິບາຍວ່າ ສິດໃນທີ່ດິນແບບບໍ່ເປັນທາງການ ຫຼື ສິດໃນທີ່ດິນຕາມປະເພນີແມ່ນ *'ຮູບແບບຂອງການປະຕິສຳພັນທີ່ເກີດຂຶ້ນນອກຂອບເຂດຂອງກົດໝາຍ. ມັນແມ່ນຊຸດຂອງກົດ ແລະ ລະບຽບຂອງຊຸມຊົນທີ່ສືບທອດມາແຕ່ປູ່ຍ່າຕາຍາຍ ແລະ ຖືກຍອມຮັບ, ຖືກແປຄວາມໝາຍໃໝ່ ແລະ ຖືກບັງຄັບໃຊ້ໂດຍຊຸມຊົນ, ແຕ່ອາດຈະຮັບຮູ້ ຫຼື ບໍ່ຮັບຮູ້ຈາກລັດ'*. ສິດໃນທີ່ດິນຢ່າງເປັນທາງການ, ຫຼື *'ໂດຍກົດໝາຍ, 'ແມ່ນຊຸດຂອງກົດລະບຽບທີ່ຖືກສ້າງຂຶ້ນ ແລະ ປົກປ້ອງໂດຍລັດ'.*

ໃນ ສປປ ລາວ, ສິດໃນທີ່ດິນຂອງແມ່ຍິງມັກຖືກເບິ່ງຂ້າມ ແລະ ຈາກການສຶກສາເຫັນວ່າ ການປະຕິບັດຕາມປະເພນີ ພາຍໃນບ້ານມີຄວາມຊັບຊ້ອນ ແລະ ເຊື່ອມໂຍງເຊິ່ງກັນ ແລະ ກັນ. ເນື່ອງຈາກລາວເປັນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ສິ່ງແວດ ລ້ອມ ແຕ່ການສຶກສາເພື່ອເຂົ້າໃຈ ການປະຕິບັດໃນການຄອບຄອງທີ່ດິນຂອງແມ່ຍິງ ແລະ ສິດຕ່າງໆ ຂອງແມ່ຍິງໃນ ສປປ ລາວ ພາຍໃຕ້ຄວາມຫຼາກຫຼາຍຍັງມີໜ້ອຍຫຼາຍ, ສະນັ້ນ ການສຶກສາຫົວຂໍ້ນີ້ເພີ່ມເຕີມ ມັນຈະເປັນປະໂຫຍດຫຼາຍໃນອະນາຄົດ.

ບໍ່ວ່າດິນຈະເປັນກຳມະສິດຂອງບຸກຄົນ ຫຼື ຂອງສ່ວນລວມ, ແມ່ຍິງອາດບໍ່ໄດ້ຮັບອະນຸຍາດໃຫ້ຄຸ້ມຄອງທີ່ດິນຂອງໂຕເອງ, ລວມທັງການມີຊື່ໃນໃບຕາດິນ ຫຼື ສືບທອດມໍລະດົກທີ່ດິນ. ຕາມວັດທະນະທຳແລ້ວ ແມ່ຍິງມັກໃຫ້ນິຍາມລັກສະນະຂອງໂຕເອງຕາມຄວາມສຳພັນກັບຜູ້ຊາຍ (ຕົວຢ່າງ ກັບຜົວ, ກັບຄູ່ຮ່ວມຊີວິດ, ພໍ່ ຫຼື ອ້າຍ) ແລະ ຖານະທາງສັງຄົມຂອງພວກເຂົາ (ຕົວຢ່າງ ໂສດ, ແຕ່ງງານ ຫຼື ເປັນໝ້າຍ) ມີຜົນຕໍ່ເຂົາເຈົ້າ. ຈາກປັດໃຈທີ່ຊັບຊ້ອນນີ້ ສາມາດສົ່ງຜົນກະທົບຕໍ່ສິດໃນທີ່ດິນ ແລະ ປ່າໄມ້ ຂອງແມ່ຍິງ ແລະ ເຮັດໃຫ້ການດຳລົງຊີວິດຂອງເຂົາເຈົ້າຂຶ້ນກັບຜູ້ຊາຍ (Larson 2012). ອີງຕາມບ້ານທີ່ໄດ້ດຳ ເນີນການສຶກສາ, ມັນເປັນສິ່ງຈຳເປັນທີ່ຈະ

ເນັ້ນໜັກເພື່ອເຂົ້າໃຈ ປັດໃຈທາງວັດທະນະທຳທີ່ຍັງມີຊ່ອງว่างอันใหญ่ຫລວງ ແລະ ປັດໃຈເຫຼົ່ານີ້ ໄດ້ສົ່ງຜົນໃຫ້ມີການປ່ຽນແປງວັດທະນາທຳຂອງຊຸມຊົນທີ່ກຳນົດໄວ້ ເຊິ່ງໃນຂະນະດຽວກັນ ແນວທາງປະຕິບັດໃນທາງວັດທະນະທຳ ທີ່ມີເຈດຕະນາດີສ່ວນຫຼາຍເຮົາຍັງບໍ່ຮູ້.

ກໍລະນີສຶກສານີ້ມີເປົ້າໝາຍເພື່ອເຂົ້າໃຈສິດທາງດ້ານປະເພນີຂອງແມ່ຍິງຕໍ່ກັບທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ໂດຍສະເພາະສິດໃນການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງ. ຜູ້ຂຽນບໍ່ສາມາດກຳນົດກອບການເຮັດວຽກສະເພາະທີ່ກ່ຽວຂ້ອງກັບການຄອບຄອງທີ່ດິນຂອງແມ່ຍິງໄດ້, ດັ່ງນັ້ນກອບການເຮັດວຽກທີ່ໃຊ້ແມ່ນຮັບມາຈາກໜັງສື 'Understanding Property Rights' (ເຂົ້າໃຈສິດໃນຊັບສິນ) ທີ່ຈັດພິມໂດຍ ສະຖາບັນຄົ້ນຄວ້ານະ�โยบายด้านอาหารสากล (CAPRi 2010). ການວິເຄາະກຸ່ມສິດທີ່ຄັດເລືອກມາວິເຄາະ ແມ່ນນຳໃຊ້ແນວຄິດທາງມະນຸດວິທະຍາສະຕິນິຍົມ ແລະ ເນັ້ນໃສ່ການວິເຄາະຄວາມສຳພັນທາງອຳນາດລະຫว่างๆ ແມ່ຍິງ ແລະ ຜູ້ຊາຍ ໃນການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ຕາຕະລາງທີ 1 ແມ່ນລາຍລະອຽດກ່ຽວກັບສາມສິດທີ່ຄັດເລືອກມາໄດ້ແກ່ ສິດໃນການເຂົ້າເຖິງ, ສິດໃນການຄັດສັນມາໃຊ້ ແລະ ສິດໃນການຄຸ້ມຄອງ.

ຕາຕະລາງ 1: ບັນດາສິດຕ່າງໆທີ່ຄັດເລືອກມາໃຊ້ໃນການວິເຄາະ

ສິດໃນການນຳໃຊ້		ສິດໃນການຕັດສິນໃຈ
ການເຂົ້າເຖິງ	**ການຄັດສັນມາໃຊ້**	**ການຄຸ້ມຄອງ**
ສິດໃນການເຂົ້າປ່າດ້ວຍໂຕເອງໃນເຂດຂອງໂຕເອງເພື່ອຄວາມມ່ວນຊື່ນ	ສິດໃນການເອົາ ແລະ ນຳໃຊ້ດິນເຂດປ່າ ແລະ ຊັບພະຍາກອນປ່າໄມ້ເພື່ອບໍລິໂພກ ແລະ ນຳໃຊ້ໃນທາງເສດຖະກິດ	ສິດໃນການອອກລະບຽບເພື່ອໃຊ້ພາຍໃນ ແລະ ປ່ຽນແປງດິນເຂດປ່າ ແລະ ຊັບພະຍາກອນປ່າໄມ້ໂດຍການປັບປຸງ ສິດໃນການກຳນົດວ່າແມ່ນໃຜຈະມີສິດເຂົ້າເຖິງ, ຖອດຖອນສິດ ແລະ ກຳນົດວ່າສິດອາດຈະຖືກໂອນຍ້າຍແນວໃດ ສິດໃນການຂາຍ ຫຼື ໃຫ້ເຊົ່າທີ່ດິນບາງສ່ວນ ຫຼື ທັງໝົດ

4. ການຄອບຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມປະເພນີໃນເຂດສຶກສາ

ຫົວຂໍ້ນີ້ຈະອະທິບາຍຜົນໄດ້ຮັບຈາກການສຶກສາ ໂດຍແບ່ງອອກເປັນສີ່ພາກຄື: ພາກທີໜຶ່ງ (4.1) ແມ່ນການແນະນຳກ່ຽວກັບໝູ່ບ້ານໂດຍຫຍໍ້ ເຊິ່ງລວມທັງປະຫວັດຄວາມເປັນມາ, ໂຄງສ້າງທາງສັງຄົມ, ບັນຫັດຖານ, ຄວາມເຊື່ອ ແລະ ຮູບແບບການສືບທອດມໍຣະດົກ. ພາກທີ່ສອງ (4.2) ຄວາມເຂົ້າໃຈຂອງປະຊາຊົນພາຍໃນບ້ານກ່ຽວກັບສິດຕາມປະເພນີ ແລະ ຄວາມເປັນເຈົ້າຂອງຕໍ່ທີ່ດິນປ່າໄມ້. ພາກທີສາມ (4.3) ກ່ຽວກັບ ສິດຕາມປະເພນີຂອງແມ່ຍິງຕໍ່ທີ່ດິນເຂດປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໂດຍເບິ່ງບັນດາສິດທີ່ກ່ຽວຂ້ອງກັບການເຂົ້າເຖິງ, ການນຳໃຊ້ ແລະ ຄຸ້ມຄອງ. ພາກນີ້ຍັງຈະນຳສະເໜີຜົນປະໂຫຍດຂອງການປະຕິບັດລະບຽບຕາມປະເພນີທີ່ມີຕໍ່ແມ່ຍິງ, ການດຳລົງຊີວິດຂອງຊຸມຊົນ ແລະ ເສດຖະກິດແບບເພິ່ງພາໂຕເອງ. ໃນພາກສຸດທ້າຍ (4.4) ຈະອະທິບາຍການມີສ່ວນຮ່ວມຂອງແມ່ຍິງ ແລະ ການຮ່ວມຕັດສິນໃຈໃນການຄຸ້ມຄອງປ່າໄມ້ຕາມປະເພນີ, ການມີສ່ວນຮ່ວມໃນການວາງແຜນນຳໃຊ້ທີ່ດິນ (PLUP) ແລະ ການວາງແຜນຄຸ້ມຄອງປ່າໄມ້ບ້ານ (VFMP), ພາກສ່ວນນີ້ ເປັນເລື່ອງທີ່ມີຄວາມຊັບຊ້ອນສຳລັບການເຂົ້າເຖິງການຄອບຄອງທີ່ດິນຂອງແມ່ຍິງ ຈະແມ່ນໃນຮູບແບບການຄຸ້ມຄອງຕາມ ປະເພນີ ແລະ ການຮັບຮູ້ສິດຕາມປະເພນີໃນຮູບແບບທີ່ເປັນທາງການ ເຊິ່ງການປະຕິບັດບາງຄັ້ງຍັງມີຂໍ້ຈຳກັດ ແລະ ອາດກີດກັ້ນແມ່ຍິງອອກຈາກການຄຸ້ມຄອງທີ່ດິນປ່າໄມ້.

4.1. ບ້ານ ຫາດຈາ ແລະ ບ້ານ ຝົນຫໍ

4.1.1. ບ້ານ ຫາດຈາ: ການປະຕິບັດຕາມປະເພນີ ແລະ ຄວາມເຊື່ອ

ໝຶ່ງໃນພື້ນທີ່ສຶກສາຂອງພວກເຮົາແມ່ນ ບ້ານ ຫາດຈາ, ເມືອງ ໃໝ່, ແຂວງ ຜົ້ງສາລີ ເຊິ່ງເປັນແຂວງທີ່ຢູ່ເໜືອສຸດໃນ ສປປ ລາວ. ບ້ານ ຫາດຈາ ອ້ອມຮອບໄປດ້ວຍປ່າໄມ້ ແລະ ອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ. ບ້ານບໍ່ໄດ້ຢູ່ໃນເຂດສາມປະເພດປ່າຕາມການຈັດປະເພດປ່າ ຂອງ ສປປ ລາວ (ປ່າຜະລິດ, ປ່າປ້ອງກັນ, ປ່າສະຫງວນ). ພື້ນທີ່ດັ່ງດ່າວເປັນບ່ອນອາໃສຂອງຊຸມຊົນເຜົ່າກຶມມຸ-ອູ[5], ຊື່ຂອງບ້ານແມ່ນຕັ້ງໂດຍຫົວໜ້າເຜົ່າ ກຶມມຸ-ອູ ທີ່ພາຍາດພີ່ນ້ອງຍ້າຍມາຈາກ ເມືອງ ງອຍ ແຂວງຫຼວງພະບາງ ມາຕັ້ງຖິ່ນຖານຢູ່ນີ້ຫຼາຍກວ່າຮ້ອຍປີ. *ຫາດ* ໝາຍເຖິງ ພື້ນທີ່ຣາບພຽງ*ແຄມແມ່ນ້ຳ ຫຼື ສັນຊາຍ* ເຊິ່ງໃນທີ່ນີ້ໝາຍເຖິງພື້ນທີ່ລຽບແຄມແມ່ນ້ຳອູ. ການລິດລົງຂອງລະດັບນ້ຳໃນແມ່ນ້ຳອູ ແລະ ການເກີດພະຍາດໃນລະດູໝາວ ເຮັດໃຫ້ຊາວບ້ານຍ້າຍບ້ານມາຢູ່ເທິງພູເຂົາ ເຊິ່ງເປັນບ່ອນທີ່ຊຸມຊົນອາໃສຢູ່ໃນປະຈຸບັນ. ບ້ານ ຫາດຈາ ເປັນບ້ານນ້ອຍ, ມີປະຊາກອນພຽງແຕ່ 155 ຄົນ (ແມ່ຍິງ 77 ຄົນ), ໝົດບ້ານມີ 31 ຄົວເຮືອນ ແລະ 35 ຄອບຄົວ. ທຸກຄົນພາຍໃນບ້ານເປັນເຜົ່າກຶມມຸ-ອູ, ຍົກເວັ້ນແມ່ຍິງຈາກເຜົ່າ ລາວ-ໄຕ ໝຶ່ງຄົນທີ່ແຕ່ງງານເຂົ້າມາໃນບ້ານ. ປະຊາຊົນຢູ່ບ້ານ ຫາດຈາ ນັບຖືຜີ ແລະ ປະສົມປະສານກັບສາດສະໜາພຸດ. ປະຊາຊົນເຊື່ອວ່າມີວິນຍານ-ສິ່ງສັກສິດປົກປ້ອງພວກເຂົາທຸກມື້, ລວມໄປເຖິງວິນຍານທີ່ສັກສິດຈາກບັນພະຊົນ ແລະ ສິ່ງສັກສິດ ຕາມທຳມະຊາດທັງຢູ່ໃນຕົ້ນໄມ້, ປ່າໄມ້, ທີ່ດິນ ແມ່ນ້ຳ ແລະ ຊັບພະຍາກອນທຳມະຊາດອື່ນໆ.

ອີງຕາມການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ຜ່ານມານໍ່ໆ ນີ້, ບ້ານ ຫາດຈາ ມີເນື້ອທີ່ທັງໝົດ 2,635 ເຮັກຕາ, ໃນນັ້ນ 1,635 ເຮັດຕາ (75.52%) ແມ່ນດິນກະສິກຳ ແລະ 461 ເຮັກຕາ (21.29%) ດິນເຂດປ່າໄມ້ຂອງບ້ານ[6], ປ່າໄມ້ບ້ານແບ່ງອອກເປັນ 3 ປະເພດ ໄດ້ແກ່: ປ່າຜະລິດ, ປ່າອະນຸລັກ ແລະ ປ່າປ້ອງກັນ. ຄະນະກຳມະການຄຸ້ມຄອງປ່າໄມ້ບ້ານ ເປັນຜູ້ຈັດຕັ້ງປະຕິບັດ ແລະ ເບິ່ງແຜນລວມໃນການຄຸ້ມຄອງປ່າໄມ້, ຄະນະດັ່ງກ່າວປະກອບດ້ວຍຜູ້ຊາຍສອງຄົນ ເຊິ່ງເປັນຜູ້ກວດກາລາດຕະເວນປ່າເປັນປະຈຳ ເພື່ອ

ຫົວຫັດກ່ອນຕາເວັນຂຶ້ນ, ບ້ານ ຫາດຈາ

5 ກຶມມຸແມ່ນຊົນເຜົ່າໃນຕະກຸນ ມອນ-ຂະແມ ຫຼື ໝວດຊົນເຜົ່າ Austroasiatic, ເຊິ່ງເປັນກຸ່ມຊົນເຜົ່າທີ່ຫຼາຍທີ່ສຸດໃນປະເທດເມື່ອທຽບກັບຊົນເຜົ່າອື່ນ ທີ່ບໍ່ນອນໃນກຸ່ມເຜົ່າທີ່ໃຊ້ພາສາ ລາວ-ໄຕ. ເຜົ່າກຶມມຸ ມີຢູ່ສອງປະເພດ ຄື ກຸ່ມຕາເວັນອອກ ແລະ ກຸ່ມຕາເວັນຕົກ, ກຸ່ມຕາເວັນອອກມີຢູ່ສາມກຸ່ມຍ່ອຍ ຄື ອູ, ແອມ ແລະ ເຈືອງ. ກຶມມຸກຸ່ມຕາເວັນຕົກມີກຸ່ມຍ່ອຍ ຫຼື ທານອຍ ທີ່ຮູ້ກັນໃນນາມ ກຶມມຸລີ້ , ກຶມມຸຣອກ, ກຶມມຸກວົນ ແລະ ກຶມມຸຢວນ. ພາສາສາຍຕາເວັນຕົກມີສຳນຽງຂຶ້ນລົງ ແຕ່ ກຸ່ມຕາເວັນອອກບໍ່ມີສຳນຽງແບບນີ້. ເຖິງວ່າຈະມີຄວາມແຕກຕ່າງທາງສຳນຽງແຕ່ທັງສອງສາຍສາມາດສື່ສານກັນເຂົ້າໃຈ.

6 ໃນ ສປປ ລາວ, ແບ່ງປ່າໄມ້ອອກເປັນສາມປະເພດຫຼັກໄດ້ແກ່: ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ. ປ່າໄມ້ທີ່ບໍ່ໄດ້ຢູ່ໃນສາມປະເພດເຊັ່ນ 'ປ່າໄມ້ບ້ານ', ເຊິ່ງກໍ່ມີແຜນໃນການຄຸ້ມຄອງຢູ່ແຕ່ລະບຽບບໍ່ເຄັ່ງຄັດຫຼາຍ.

ແມ່ຍິງເຜົ່າ ກຶມມູ ຊື່ ນາງ ຈາກ ບ້ານ ຫາດຈາ, ໃນເວລາເກັບກຳຂໍ້ມູນ.

ລາຍງານສະພາບຂອງປ່າໃຫ້ບ້ານ ແລະ ເມືອງ. ຜູ້ຊາຍ ແລະ ແມ່ຍິງພາຍໃນບ້ານ ຕ່າງກໍ່ຮັບຮູ້ລະບຽບການຈັດເຂດທີ່ດິນ ແລະ ປ່າໄມ້ທີ່ທາງເມືອງວາງອອກ, ແຕ່ພວກເຂົາກໍ່ຍັງຄົງສືບຕໍ່ການດຳລົງຊີວິດດ້ວຍການເຮັດໄຮ່ໝູນວຽນຕາມປະເພນີ ເພາະມັນເປັນສິ່ງຈຳເປັນໃນການຢູ່ລອດ.

ການປະຕິບັດຕາມປະເພນີໃນບ້ານ ແມ່ນປະຕິບັດຕາມລະບົບສັງຄົມການສືບສາຍຕະກຸນຜ່ານທາງພໍ່ຢ່າງເຄັ່ງຄັດ, ການແຕ່ງດອງໃນບ້ານບໍ່ຄ່ອຍແຕ່ງກັບຄົນນອກກຸ່ມເຊື້ອສາຍສັງຄົມໂຕເອງ ຫຼື (exogamous)[7]. ເມື່ອພໍ່ເສຍຊີວິດ, ຊັບສິນບັດຂອງຄອບຄົວຈະຖືກສືບໂອນຜ່ານຫາສາຍຍາດຜູ້ຊາຍ ຫຼື ຊັບສິນດັ່ງກ່າວຈະຖືກນຳໄປຫາຄອບຄົວໃໝ່ໃນຮູບແບບຂອງຄ່າສິນສອດຈາກຄອບຄົວຝ່າຍເຈົ້າສາວ, ເຊິ່ງແມ່ຍິງຈະກາຍເປັນເຈົ້າຂອງຊັບສິນ. ຖ້າຫາກການແຕ່ງດອງສິ້ນສຸດລົງ ຍ້ອນມີການຢ່າຮ້າງ, ຊັບສິນເຫຼົ່ານີ້ກໍ່ຈະຖືກສົ່ງຄືນໃຫ້ຄອບຄົວເຈົ້າສາວ. ໃນກໍລະນີມີການຢ່າຮ້າງ ແມ່ຍິງສາມາດເລືອກໄດ້ວ່າລາວຕ້ອງການກັບໄປຢູ່ໃນຄອບຄົວທີ່ໂຕເອງເກີດ ຫຼື ຢູ່ກັບລູກທີ່ມີເຮືອນເປັນຂອງໂຕເອງແລ້ວ. ແມ່ຍິງຍັງສາມາດສ້າງເຮືອນຕົນເອງໃນທີ່ດິນຂອງຄອບຄົວແບ່ງໃຫ້ ແລະ/ຫຼື ໃນທີ່ດິນລວມຂອງບ້ານທີ່ອະນຸຍາດໃຫ້ປຸກສ້າງເຮືອນ. ຂໍ້ມູນນີ້ພວກເຮົາໄດ້ຈາກຜູ້ເຖົ້າຜູ້ຊາຍສອງສາມຄົນ, ດັ່ງນັ້ນ ຈຶ່ງບໍ່ສາມາດສະຫຼຸບວ່າເປັນສິ່ງທີ່ປະຕິບັດໂດຍທົ່ວໄປທັງໝົດໃນບ້ານແທ້ບໍ່. ສິ່ງນີ້ຄວນມີການຄົ້ນຄວ້າເພີ່ມຕົ່ມໃນກຸ່ມຊົນເຜົ່າດຽວກັນ ຫຼື ຕ່າງກັນ ເພື່ອເຂົ້າໃຈການປະຕິບັດຕາມປະເພນີໃຫ້ຈະແจ້ງຂຶ້ນ. ສຳລັບເດັກຊາຍ ບາງຄົນໄປບວດເປັນຈົວ ຫຼື ຄູບາ ເພື່ອຮຽນໜັງສືຢູ່ວັດໃນເມືອງ ຫຼື ຢູ່ນະຄອນຫຼວງວຽງຈັນ, ເມື່ອບວດແລ້ວ ແລະ ສິກກັບຄືນມາ ຄອບຄົວຈະຮັກສາ ແລະ ມອບດິນໃຫ້ກັບລາວ.

ແຕ່ກ່ອນ, ເດັກຍິງ ແລະ ເດັກຊາຍ ແຕ່ງດອງ ເມື່ອອາຍຸ ປະມານ 14-16 ປີ. ທຸກມື້ນີ້ຫຼາຍຢ່າງປ່ຽນໄປ ແລະ ຜູ້ຊາຍທີ່ບໍ່ເຂົ້າໂຮງຮຽນອາດແຕ່ງດອງໃນຊ່ວງອາຍຸ 16-18. ແຕ່ຜູ້ທີ່ຮຽນຕໍ່ອາດຈະແຕ່ງດອງຊ້າລົງ ໃນຊ່ວງອາຍຸ 19-21 ປີ. ແມ່ຍິງສ່ວນຫຼາຍໃນບ້ານບໍ່ໄດ້ຮຽນຮອດຊັ້ນມັດທະຍົມ ຍ້ອນເຫດຜົນວ່າ ຜູ້ຊາຍເມື່ອໃຫຍ່ຂຶ້ນຈະກາຍເປັນຜູ້ນຳບ້ານ ດັ່ງນັ້ນການສຶກສາສູງຈຶ່ງຈຳເປັນສຳລັບພວກເຂົາຫຼາຍກວ່າ. ຈາກການຄົ້ນຄວ້າ, ການສົນທະນາກຸ່ມຜູ້ຊາຍ ແລະ ແມ່ຍິງ ເຫັນວ່າການສຶກສາຂອງເດັກຍິງກໍ່ສຳຄັນ ແຕ່ການສຶກສາຂອງເດັກຊາຍແມ່ນສຳຄັນກວ່າ.

ເຫດຜົນທີ່ຊາວບ້ານແລກປ່ຽນ ກ່ຽວກັບຂໍ້ຈຳກັດໃນການສຶກສາຂອງເດັກຍິງ ຍ້ອນບໍ່ມີໂຮງຮຽນມັດທະຍົມຢູ່ໃນບ້ານ ແລະ ພໍ່ແມ່ເປັນຫວ່າງເລື່ອງຄວາມປອດໄພຂອງລູກສາວໃນການເດີນທາງໄປໂຮງຮຽນ. ປະຊາຊົນໃນບ້ານເຫັນວ່າເດັກຍິງບໍ່ຈຳເປັນຕ້ອງມີການສຶກສາສູງຍ້ອນວ່າ ເມື່ອພວກເຂົາໃຫຍ່ຂຶ້ນມາກໍ່ຕ້ອງແຕ່ງດອງ ແລະ ເປັນແມ່ເຮືອນ, ນີ້ແມ່ນຄວາມເຊື່ອຕາມປະເພນີ. ຍັງມີບາງຫາງສຽງທີ່ວ່າ ຖ້າຫາກພວກເຂົາໄດ້ໄປໂຮງຮຽນ, ເມື່ອຈົບແລ້ວພວກເຂົາອາດຫາວຽກບໍ່ໄດ້. ເດັກຍິງບາງຄົນທີ່ພວກເຮົາສຳພາດບອກว่าພວກເຂົາຢາກຮຽນຕໍ່ ແລະ ບາງຄົນໄດ້ຮຽນຕໍ່ຮອດຊັ້ນມັດທະຍົມ ຍ້ອນໄດ້ຮັບການສະໜັບສະໜູນຈາກພໍ່ແມ່ ແລະ ຍາດພີ່ນ້ອງທີ່ຢູ່ໃນເມືອງ ສຳລັບອຳນວຍຄວາມສະດວກບ່ອນຢູ່ອາໃສ. ເດັກຍິງເຫຼົ່ານີ້ຈົບມັດທະຍົມໃນອາຍຸລະຫว่าງ 19-20 ປີ, ເວລາພວກເຂົາກັບມາບ້ານ ພໍ່-ແມ່ ແລະ ຄົນອື່ນໆ ໃນບ້ານ, ທັງແມ່ຍິງ ແລະ ຜູ້ຊາຍ ເຫັນວ່າມັນຊ້າໂພດສຳລັບການແຕ່ງດອງ. ຕໍ່ກັບບັນຫາດັ່ງກ່າວ ເດັກຍິງເຫຼົ່ານີ້ຮູ້ສຶກວ່າມັນເປັນເລື່ອງປົກກະຕິສຳລັບຕົນເອງທີ່ ບໍ່ໄດ້ແຕ່ງດອງໄວ ແຕ່ກໍ່ຮູ້ສຶກບໍ່ສະບາຍໃຈໃນການອາໃສຢູ່ໃນບ້ານ[8]. ດ້ວຍເຫດນັ້ນ ພວກເຂົາຈຶ່ງອອກຈາກບ້ານ ແລະ ອາສາເຮັດວຽກເອົາຄ່າແຮງໃນບ້ານໃກ້ຄຽງ ເພື່ອສົ່ງລາຍຮັບເພີ່ມໃຫ້ແກ່ຄອບຄົວ. ພວກເຂົາກັບມາບ້ານເລື້ອຍໆ ແລະ ຍັງສາມາດເຂົ້າເຖິງ ທີ່ດິນເຂດປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອເປັນອາຫານ ແລະ ສ້າງລາຍໄດ້ເພີ່ມຊ່ວຍຄອບຄົວໃຫ້ມີເສດຖະກິດທີ່ດີຂຶ້ນ.

ເປັນເລື່ອງໜ້າເສົ້າ, ແຕ່ບໍ່ແປກໃຈ, ພວກເຮົາພົບว่าເດັກຍິງບໍ່ມີໂອກາດເທົ່າກັບເດັກຊາຍ ຍ້ອນເດັກຊາຍສາມາດໄປຮຽນຢູ່ ວັດ ຫຼື ສາມາດສືບທອດມໍລະດົກຈາກພໍ່. ເດັກຍິງຖືກຄາດຫວັງໃຫ້ອອກໂຮງຮຽນແຕ່ຍັງນ້ອຍ ເພື່ອຊ່ວຍເປັນແຮງງານໃຫ້ຄອບຄົວ ແລະ ລໍຖ້າຜູ້ຊາຍທີ່ເໝາະສົມມາແຕ່ງດອງນຳ. ແມ່ຍິງທີ່ບໍ່ໄດ້ຮຽນຈົບປົກກະຕິແລ້ວຈະແຕ່ງດອງໃນອາຍຸລະຫว่าງ 15 ຫຼື 16 ປີ. ຫຼັງຈາກແຕ່ງດອງແລ້ວ, ຄູ່ແຕ່ງດອງມັກຈະສ້າງເຮືອນໃນ 'ດິນສະຫງວນຂອງບ້ານ' ແລະ ເຮັດການຜະລິດໃສ່ທີ່ດິນທີ່ຄອບຄົວຝ່າຍຜົວເປັນເຈົ້າຂອງ. ໃນອີກກໍລະນີໜຶ່ງ ຫຼັງຈາກແຕ່ງດອງແລ້ວ, ຄູ່ຜົວເມຍໃໝ່ຈະຢູ່ກັບຄອບຄົວຂອງຜົວກ່ອນ, ເຊິ່ງອາດຈະແມ່ນຢູ່ບ້ານອື່ນ ແຕ່ອີງຕາມລະບົບການຍ້າຍໄປຢູ່ກັບຝ່າຍຊາຍ.

ປະຊາຊົນໃນບ້ານ ຫາດຈາ ຍັງຄົງສືບຕໍ່ເຂົ້າເຖິງປ່າໄມ້ສຳລັບປະຕິບັດ ກິດຈະກຳການດຳລົງຊີວິດປະຈຳວັນ, ລວມທັງການເຮັດໄຮ່ໝູນວຽນ, ການລ່າສັດ ແລະ ເກັບຜັກປ່າ. ການຂຸດຄົ້ນເຄື່ອງປ່າ

7 ແມ່ນບັນທັດຖານຄວາມເຊື່ອໃນການແຕ່ງດອງນອກກຸ່ມສັງຄົມໂຕເອງ.

8 ທາງທີມງານມີຂໍ້ມູນຈຳກັດ; ພວກເຮົາໄດ້ສຳພາດເດັກຍິງ 2 ຄົນ ແລະ ເດັກຊາຍໜຶ່ງຄົນທີ່ກັບມາບ້ານໃນໄລຍະເວລາທີ່ເຮົາຢູ່ບ້ານ. ຈຳເປັນຕ້ອງມີການສຶກສາເພີ່ມເພື່ອເຂົ້າໃຈບັນທັດຖານ, ການປະຕິບັດ, ການໃຫ້ຄວາມໝາຍໃນທາງລົບ ແລະ ຜົນສະທ້ອນທີ່ເກີດຂຶ້ນຕໍ່ເດັກຊາຍ ແລະ ເດັກຍິງ ທີ່ບໍ່ແຕ່ງດອງແຕ່ຍັງໜຸ່ມ.

ຕົ້ນໄມ້ໃກ້ບ້ານ ທີ່ຊາວບ້ານ ເລືອກສຳລັບແຂວນບັ້ງສາຍແຫ່ສຳລັບເດັກ ເກີດໃໝ່. ບ້ານ ຝົນຫໍ

ຂອງດົງ (NTFP) ສ່ວນຫຼາຍເພື່ອຂາຍ ແລະ ໃນບ້ານຍັງມີການ ລ້ຽງສັດໃຫຍ່ເພື່ອເປັນ ລາຍໄດ້ເປັນກ້ອນ. ພາຍໃນບ້ານ ບໍ່ມີ ກິດຈະກຳໂຄງການຫຼາຍ, ໃນສິບປີຜ່ານມາມີພຽງແຕ່ໂຄງການ ກ່ຽວກັບ ວຽກງານໂພສະນາການ ຈັດຕັ້ງ ປະຕິບັດໂດຍອົງການ ຫ່ວງໃຍຮ່ວມໃຈພັດທະນາ (World Renew) ແລະ ກອງທຶນ ສາກົນເພື່ອການພັດທະນາກະສິກຳ (IFAD) ເຂົ້າມາ ເຮັດວຽກຢູ່ ບ້ານ ຫາດຈາ.

4.1.2. ບ້ານ ຝົນຫໍ: ການປະຕິບັດຕາມປະເພນີ ແລະ ຄວາມ ເຊື່ອ

ບ້ານ ຝົນຫໍ ເປັນບ້ານຊົນເຜົ່າ ໄຕຂາວ ມີປະຊາກອນ 185 ຄົນ, 98 ຄົນ ແມ່ນແມ່ຍິງ. ໃນບ້ານມີ 28 ຄົວເຮືອນ 41 ຄອບຄົວ. ຊົນເຜົ່າ ໄຕຂາວ ໃນບ້ານນີ້ແມ່ນຍ້າຍມາຈາກ ແຂວງ ໄລຈົວ ປະເທດ ຫວຽດນາມ ແລະ ມາໄດ້ຫຼາຍທົດສະວັດແລ້ວ. ບ້ານດັ້ງເດີມແມ່ນ ຕັ້ງຢູ່ໃນປ່າໄມ້ໃກ້ຊາຍແດນ ສປປ ລາວ-ຫວຽດນາມ, ແຕ່ປະຊາຊົນ ໄດ້ຍ້າຍມາຕັ້ງຖິ່ນຖານຢູ່ບ້ານປະຈຸບັນຕັ້ງແຕ່ປີ 1995. ທີ່ດິນບ້ານ ບໍ່ໄດ້ນອນຢູ່ໃນສາມປະເພດປ່າໄມ້. ພວກເຂົາໃຫ້ເຫດຜົນຂອງການ ຍົກຍ້າຍ ເພາະວ່າເປັນຍ້ອນນ້ຳຖ້ວມ ແລະ ມັກມີພະຍາດຢູ່ເລື້ອຍໆ ຈຶ່ງເຮັດໃຫ້ຕ້ອງຍ້າຍບ້ານ. ປະຈຸບັນນີ້ບ້ານຕັ້ງຢູ່ຫ່າງຈາກຊາຍແດນ ຫວຽດນາມ 26 ກິໂລແມັດ ແລະ ຈາກຕົວເມືອງ ໃໝ່, ແຂວງ ຜົ້ງ ສາລີ ປະມານ 85 ກມ. ເນື້ອທີ່ດິນຂອງບ້ານຄາດວ່າມີປະມານ 10,000 ເຮັກຕາ. ກິດຈະກຳການດຳລົງຊີວິດຂອງປະຊາຊົນສ່ວນ ຫຼາຍແມ່ນເຮັດນາ, ລ້ຽງສັດ ທັງສັດປີກ ແລະ ງົວ-ຄວາຍ ແລະ ຫາ ເຄື່ອງປ່າຂອງດົງເພື່ອບໍລິໂພກໃນຄອບຄົວ ແລະ ຂາຍ. ປະຊາຊົນ ເຜົ່າໄຕຂາວໃນບ້ານ ຝົນຫໍ ກໍ່ຄືກັບຫຼາຍຊົນເຜົ່າໃນ ສປປ ລາວ ມີ ປະຫວັດສາດທາງວັດທະນະທຳອັນຍາວນານ ແລະ ມີຮີດຄອງ ປະເພນີທີ່ຮັກສາມາຈົນຮອດປະຈຸບັນ[9].

ຊົນເຜົ່າໄຕຂາວ ສາມາດຮູ້ຈາກເຄື່ອງນຸ່ງຂອງເຜົ່າ ເຊິ່ງເຮັດໂດຍຜູ້ຍິງ ທີ່ຜະລິດຈາກຝ້າຍຍ້ອມຄາມສີເຂັ້ມກ່ອນນຳໄປຕໍ່ຕ້ຳ. ແມ່ຍິງໄຕຂາວ ເປັນຜູ້ເຮັດເຄື່ອງຫັດຖະກຳຂອງຊົນເຜົ່າເຊັ່ນ ແພມົນ, ຜ້າພັນຄໍ ແລະ ຜ້າເອຕ່າງໆ. ຜະລິດຕະພັນຫັດຖະກຳ ບາງຢ່າງເຮັດເປັນພິເສດເພື່ອ ເສນຫວ້ານໃຫ້ແກ່ເຈົ້າປ່າເຈົ້າເຂົາ. ໃນຮູບທີ 1 ແມ່ນຕົວຢ່າງຜ້າແສ່ວ ທີ່ເຮັດສະເພາະສຳລັບວາງໄວ້ເທິງໂລງສົບ. ຕາມປະເພນີແລ້ວຊາວໄຕ ຂາວຈະຝັງສົບຄົນເສຍຊີວິດ ເຊິ່ງແຕກຕ່າງຈາກປະເພນີການເຜົາສົບ ຂອງຊາວພຸດທີ່ເຫັນໄດ້ທົ່ວໄປໃນລາວ. ວັດທະນະທຳຂອງໄຕຂາວ ອຸດົມສົມບູນ ແລະ ເຕັມໄປດ້ວຍພິທີທາງສາດສະໜາ, ງານບຸນ ແລະ ພິທີກຳມ່ວນຊື່ນຕ່າງໆ, ພິທີກຳເຫຼົ່ານີ້ມີບົດບາດສຳຄັນໃນຊຸມຊົນຂອງ ພວກເຂົາຫຼາຍ. ງານສະເຫຼີມສະຫຼອງທີ່ໃຫຍ່ທີ່ສຸດແມ່ນບຸນປີໃໝ່ ທີ່ ຈັດໃນລະຫວ່າງເດືອນກຸມພາ, ເຊິ່ງຊາວບ້ານຫຼີ້ນກົນເປັນເວລາຫ້າມື້ ແລະ ເປັນເວລາດຽວກັນກັບ ບຸນປີໃໝ່ ຫຼື 'ເຕດ' ຂອງຫວຽດນາມ.

ສຳລັບບຸນບ້ານ ຫຼື ເສນບ້ານ, ປົກກະຕິແລ້ວຈະຈັດຂຶ້ນໃນທ້າຍ ເດືອນ ເມສາ ຂອງແຕ່ລະປີ, ກ່ອນລະດູການປູກຝັງ ເຊິ່ງເປັນພິທີການໃຫ້ ຄວາມເຄົາລົບ ດ້ານຄວາມເຊື່ອໃນການໃຊ້ຊີວິດຮ່ວມກັນຢ່າງສັນຕິ, ເຄົາລົບ, ສະຫງົບສຸກ ແລະ ປອງດອງກັບທຳມະຊາດ. ສິ່ງນີ້ສະທ້ອນ ໃຫ້ເຫັນການເຊື່ອມໂຍງກັບປ່າໄມ້ ແລະ ພື້ນທີ່ ອ້ອມຮອບ ໃນການ ສະຫຼອງບຸນບ້ານ ຫຼື ເສນບ້ານ. ໃນພິທີນີ້ ທັງຜູ້ຊາຍ ແລະ ແມ່ຍິງ ຈາກແຕ່ລະຄົວເຮືອນຈະກຽມອາຫານ ແລະ ຖະຫວາຍໄກ່ຕົ້ມ ຄອບຄົວລະໂຕ ໃຫ້ກັບວິນຍານເຈົ້າປ່າດົງຜູ້ສັກສິດ. ຕາມຄວາມເຊື່ອ ພິທີກຳນີ້ຈະນຳມາເຊິ່ງຄວາມໂຊກດີ, ສຸຂະພາບທີ່ແຂງແຮງ ແລະ ຄວາມສຸກມາໃຫ້ແກ່ບ້ານ ລວມທັງເປັນການປົກປັກຮັກສາປະຊາຊົນ ເວລາເຂົ້າປ່າ ໃນການເກັບອາຫານ ແລະ ຫາເຄື່ອງປ່າຂອງດົງ. ໄກ່

ຮູບທີ 1. ຜ້າແສ່ວຮູບຕົ້ນໄມ້ ເຜົ່າໄຕຂາວທີ່ໃຊ້ວາງໄວ້ເທິງໂລງສົບ

9 ໄຕຂາວເອີ້ນໂຕເອງว่า ไตด่อน. ໄຕຂາວ (ຜ້ອມທັງ ໄຕດຳ, ໄຕແດງ, ລາວ, ສະຍາມ, ພວນ, ຢວນ, ລື້, ຊານ, ຄຳຕິ ແລະ ອະຣົມ) ແມ່ນເຜົ່າໄຕ ສາຍຕາເວັນຕົກສຽງ ໃຕ້, ທີ່ເວົ້າວ່າມາຈາກແມ່ນ້ຳແດງທາງຕາເວັນອອກ ຫາ ອາຊັມທາງຕາເວັນຕົກ. ສ່ວນຫຼາຍຊົນເຜົ່າທີ່ເວົ້າພາສາໄຕ ມັກອາໄສຢູ່ທີ່ງພຽງ ແລະ ຖືອາຊີບເຮັດນາ. ພວກ ເຂົາກ່ຽວຂ້ອງກັບໄຕ ສາຍພາກກາງໃນຕອນເໜືອຂອງປະເທດຫວຽດນາມ (Nung, Thô) ແລະ ທາງໃຕ້ເມືອງກວາງຊີ ແລະ ຍັງກ່ຽວຂ້ອງກັບໄຕສາຍເໜືອ ທີ່ມີ ຄົນເວົ້າວ່າຢູ່ໃນເມືອງ ກວາງຊີ ແລະ ກູຍຊູ (Northern Zhuang, Pu Yi).

ຕົ້ມຈະເອົາໄປປ່າ ໂດຍຜູ້ຊາຍສູງອາຍຸພາຍໃນບ້ານ ແລະ ຜູ້ນຳການເຮັດພິທີທາງສາດສະໝາຂອງບ້ານ. ແມ່ຍິງບໍ່ໄດ້ເຂົ້າຮ່ວມໃນພິທີກຳນີ້ເພາະເປັນສິ່ງຂະລຳສຳພວກເຂົາໃນການສື່ສານກັບເຈົ້າວິນຍານແຫ່ງປ່າສັກສິດ ແລະ ຊາວບ້ານເຊື່ອວ່າຫາກຜູ້ຍິງນຳເອົາໄກ່ເຂົ້າໄປຖວາຍອາດເຮັດໃຫ້ເຈົ້າວິນຍານໃນປ່າສັກສິດບໍ່ພໍໃຈ ແລະ ອາດນຳໄປສູ່ຄວາມໂຊກຮ້າຍໄດ້, ການລະເລີຍການປະຕິບັດຕາມປະເພນີນີ້ອາດນຳຄວາມເສຍຫາຍມາໃຫ້ແກ່ບ້ານ, ຄອບຄົວ ແລະ ບຸກຄົນ. ດັ່ງນັ້ນການເຊື່ອຖືວິນຍານເຈົ້າປ່າເຂົາໃນບ້ານຍັງປະຕິບັດຢູ່ທຸກວັນນີ້.

ເຮືອນຂອງຊົນເຜົ່າ ໄຕຂາວ ຈະມີບ່ອນພິເສດທີ່ສະຫງວນໄວ້ເປັນບ່ອນບູຊາວິນຍານບັນພະຊົນຝ່າຍຜູ້ຊາຍ ຫຼື ພໍ່ ເຊິ່ງຕ້ອງໄດ້ມີພິທີຮັກສາບູຊາເປັນປະຈຳ. ແມ່ຍິງບໍ່ສາມາດເຂົ້າໃນເຂດບ່ອນບູຊານີ້ເພາະຖືເປັນເລື່ອງຂະລຳ. ສຳລັບສານຂອງບັນພະຊົນຝ່າຍແມ່ຍິງ ຫຼື ສານພະພູມສຳລັບວິນວານຂອງ 'ແມ່' ແມ່ນສ້າງຢູ່ໃນເຂດປ່າໃກ້ບ້ານ ແລະ ຊາວບ້ານເຊື່ອວ່າ ຈິດວິນຍານ ຂອງຝ່າຍແມ່ໄດ້ຮັກສາພວກເຂົາໃຫ້ປອດໄພເວລາເຂົ້າປ່າ.

ປະເພນີການເກີດຂອງຊາວໄຕຂາວ ຍັງສະແດງໃຫ້ເຫັນສາຍພົວພັນອັນແໜ້ນແຟ້ນ ລະຫວ່າງ ແມ່ຍິງກັບປ່າໄມ້. ຫຼັງຈາກເດັກນ້ອຍເກີດ ຜູ້ເປັນພີ່ ຫຼື ພໍ່ປູ່ຈະເອົາສະໝູນໄພຈາກປ່າໄມ້ມາໃສ່ບັ້ງໄມ້ໃຜ່ໃສ່ກັບສາຍແຮ່ເດັກ. ຈາກນັ້ນຈະນຳບັ້ງໄມ້ໃຜ່ນັ້ນໄປປ່າໃກ້ບ້ານ ແລ້ວຫ້ອຍໃສ່ຕົ້ນໄມ້ທີ່ຄັດເລືອກເປັນພິເສດວ່າ ມີຄວາມທົນທານ ແລະ ສັກສິດ. ການປະຕິບັດແບບນີ້ແມ່ນເພື່ອແຈ້ງໃຫ້ຜູ້ຮັກສາວິນຍານຕາມທຳມະຊາດຮູ້ວ່າ ມີເດັກເກີດໃໝ່ ແລະ ເພື່ອໃຫ້ເດັກນ້ອຍໄດ້ຮັບການອວຍພອນ ແລະ ປົກປ້ອງລາວໃນອະນາຄົດ.

4.1.3. ຄວາມຄ້າຍຄື ແລະ ຄວາມແຕກຕ່າງລະຫວ່າງ: ບ້ານ ຝົນຫໍ ແລະ ບ້ານ ຫາດຈາ

ປະຊາຊົນ ຊົນເຜົ່າໄຕຂາວໃນ ບ້ານ ຝົນຫໍ ຍັງຄົງສືບຕໍ່ວິຖີ ແລະ ປະເພນີແບບດັ່ງເດີມຂອງຊົນເຜົ່າທີ່ເຊື່ອໃນເລື່ອງ 'ຄວາມເປັນໜຶ່ງດຽວ, ຮັກສາຄວາມສະງົບສຸກ ແລະ ຄວາມສາມັກຄີລະຫວ່າງສະມາຊິກໃນສັງຄົມ'. ເຖິງແມ່ນວ່າຈະມີຄວາມຄ້າຍຄືກັນລະຫວ່າງ ບ້ານ ຫາດຈາ ແລະ ບ້ານ ຝົນຫໍ. ຈາກມຸມມອງຂອງຄົນນອກບ້ານ ເຫັນວ່າ ບ້ານ ຝົນຫໍ ຍັງຮັກສາປະເພນີດັ່ງເດີມໄດ້ຫຼາຍກວ່າ ບ້ານ ຫາດຈາ. ທັງສອງບ້ານມີການສືບທອດມໍລະດົກຜ່ານທາງສາຍພໍ່. ຄວາມແຕກຕ່າງທີ່ເຫັນໄດ້ຊັດເຈນລະຫວ່າງສອງບ້ານແມ່ນ ສັງຄົມ ກົມມຸຖືກຈັດຕັ້ງໂດຍກຸ່ມເຄືອຍາດຝ່າຍຊາຍ-ຝ່າຍພໍ່, ປົກກະຕິແລ້ວຈະມັກຕັ້ງຊື່ກຸ່ມເຄືອຍາດຕາມຊື່ໂຕສັດ ແລະ ຕົ້ນໄມ້ ທີ່ພົວພັນກັບເລື່ອງຊາດກຳເນີດ ໃນເລື່ອງຄວາມເຊື່ອທີ່ກ່ຽວຂ້ອງກັບສັດ ຫຼື ຕົ້ນໄມ້ ແລະ ລວມທັງການຕາຍຂອງຄົນ, ສັດ ຫຼື ຕົ້ນໄມ້ທີ່ເຄືອຍາດນັບຖື ສະມະຊິກຂອງເຄືອຍາດດຽວກັນ ຈະບໍ່ສາມາດກິນ ຫຼື ຂ້າໄດ້. ຊາວໄຕຂາວມີລະບົບວົງຕະກຸນ (ເອີ້ນວ່າ ຊິງ, ໂຮ) ທີ່ກຳນົດບົດບາດຂອງຄົນໃນບ້ານ, ເປັນອຳນາດການປົກຄອງ, ຜູ້ນຳໃນການປະຕິບັດພິທີກຳທາງຄວາມເຊື່ອ (ມົດ, ມໍ), ແລະ ອື່ນໆ, ແຕ່ລະບ້ານມີສັດ ຫຼື ຕົ້ນໄມ້ທີ່ເປັນສັນຍາລັກຂອງຕົນເອງ ທີ່ຫ້າມສະມາຊິກໃນບ້ານກິນ ຫຼື ຂ້າ, ທັງສອງຊົນເຜົ່າແມ່ນມັກເລືອກທີ່ຈະແຕ່ງດອງກັບຄົນພາຍໃນເຜົ່າດຽວກັນ.

ການຈັດຕັ້ງໃນສັງຄົມໄຕຂາວ ມີສູນກາງຢູ່ທີ່ການສືບເຊື້ອສາຍຜ່ານທາງພໍ່ ຫຼື ນັບຖືບັນພະຊົນຝ່າຍຊາຍ ແລະ ການຢູ່ອາໃສ ຫຼັງຈາກແຕ່ງດອງແລ້ວ ແມ່ນໄປຢູ່ກັບຄອບຄົວຝ່າຍຊາຍ, ໝາຍຄວາມວ່າ ເຈົ້າສາວຕ້ອງຍ້າຍຈາກຄອບຄົວໂຕເອງມາຢູ່ກັບຄອບຄົວເຈົ້າບ່າວ. ການສືບມໍລະດົກແມ່ນປະຕິບັດຜ່ານພໍ່ສູ່ລູກຊາຍ ໄດ້ແກ່ ທີ່ດິນ, ສັບສິນບັດ, ການສືບທອດຄວາມເປັນຜູ້ນຳ ແລະ ນັບຖືອຳນາດຂອງຜູ້ຊາຍເປັນຫຼັກໃນການປົກຄອງຄອບຄົວ.

ໃນດ້ານການແບ່ງວຽກ, ແມ່ຍິງຖືກມອບໃຫ້ເປັນຜູ້ຮັບຜິດຊອບວຽກທີ່ຄົນໃນສັງຄົມຄິດວ່າເປັນວຽກ 'ເບົາ' ເຊັ່ນ ການລ້ຽງລູກ ແລະ ວຽກໃນເຮືອນ, ໃນຂະນະທີ່ຜູ້ຊາຍເຮັດວຽກ 'ໜັກ' ເຊັ່ນ ຕັດຕົ້ນໄມ້ໃຫຍ່. ຜູ້ຊາຍຍັງມີໜ້າທີ່ຮັບຜິດຊອບຫຼັກໃນເລື່ອງຂອງການພົວພັນກັບທາງການ. ບາງໜ້າວຽກເຊັ່ນ ເຂົ້າປ່າເພື່ອເກັບເຄື່ອງປ່າຂອງດົງຖືວ່າເປັນວຽກເຮັດຮ່ວມກັນ ລະຫວ່າງຍິງ-ຊາຍ. ການແບ່ງວຽກນີ້ຈະເວົ້າເຖິງລາຍລະອຽດໃນພາກຕໍ່ໄປ.

ກ່ຽວກັບຄວາມສຳພັນ ລະຫວ່າງ ແມ່ຍິງ ແລະ ປ່າໄມ້, ຊົນເຜົ່າກົມມຸ ໃນບ້ານ ຫາດຈາ ຈະຕ່າງຈາກ ຊົນເຜົ່າ ໄຕຂາວ ໃນບ້ານ ຝົນຫໍ, ເຊິ່ງກໍ່ເປັນສິ່ງບໍ່ແປກເພາະວ່າ ວັດທະນະທຳຂອງທັງສອງເຜົ່າຕ່າງກັນຫຼາຍ. ເຜົ່າກົມມຸມີຄວາມສຳພັນກັບປ່າໄມ້ທີ່ສະຫຼັບຊັບຊ້ອນຫຼາຍ ແລະ ການປະຕິບັດຍັງຖືເປັນຄວາມລັບ. ເນື່ອງຈາກເວລາທີ່ຈຳກັດໃນການສຶກສາຄັ້ງນີ້ ເຮັດໃຫ້ນັກຄົ້ນຄວ້າບໍ່ສາມາດສ້າງຄວາມໄວ້ໃຈກັບຊຸມຊົນ ບ້ານ ຫາດຈາ ໄດ້ເຕັມທີ່ ດັ່ງນັ້ນຈຶ່ງບໍ່ສາມາດຮຽນຮູ້ລາຍລະອຽດກ່ຽວກັບສິ່ງນີ້ໄດ້ຫຼາຍ. ສິ່ງທີ່ສຳຄັນແມ່ນ ແມ່ຍິງເຜົ່າ ກົມມຸ ບໍ່ມີຂໍ້ຫ້າມທາງຄວາມເຊື່ອໃນການເຂົ້າໄປໃນປ່າ ແລະ ແມ່ຍິງບາງຄົນໃຊ້ເວລາໃນປ່າຫຼາຍກວ່າຜູ້ຊາຍ. ສະນັ້ນ, ການຄົ້ນຄວ້າກ່ຽວກັບການຄຸ້ມຄອງປ່າໄມ້ຕາມປະເພນີຂອງຊົນເຜົ່າ ກົມມຸ, ໂດຍສະເພາະແມ່ນສຶກສາບົດບາດຂອງແມ່ຍິງໃນເລື່ອງນີ້, ຈຳເປັນທີ່ຈະຕ້ອງໄດ້ເຮັດການສຶກສາເພີ່ມເຕີມ ເພື່ອສ້າງຄວາມເຂົ້າໃຈເລິກເຊິ່ງທີ່ເປັນປະໂຫຍດ ແລະ ເພື່ອປົກປ້ອງສິດໃນການຄຸ້ມຄອງປ່າໄມ້ຕາມປະເພນີຂອງແມ່ຍິງ.

ສານວິນຍານແມ່ທີ່ສ້າງຂຶ້ນໃນປ່າໃກ້ໝູ່ບ້ານຝົນຫໍ

4.2. ການຮັບຮູ້ ກ່ຽວກັບສິດທີ່ດິນຕາມປະເພນີ

ແມ່ຍິງ ເຜົ່າ ໄຕຂາວ ຈາກບ້ານ ຝົນຫໍ

ໃນພາກນີ້ຈະສະເໜີລາຍລະອຽດ ຄວາມເຂົ້າໃຈຂອງປະຊາຊົນ ຕໍ່ກັບນິຍາມຄຳວ່າ 'ສິດທິກ່ຽວກັບທີ່ດິນຕາມປະເພນີ'. ໃນສ່ວນຂອງທີ່ດິນສ່ວນຕົວ, ຜູ້ຊາຍ ແລະ ແມ່ຍິງ ບໍ່ວ່າຈະອາຍຸຊ່ວງໃດກໍ່ຕອບຄ້າຍຄືກັນວ່າ ແມ່ນສິດໃນການເປັນເຈົ້າຂອງທີ່ດິນ ລວມທັງເຮືອນ, ດິນ ແລະ ດິນກະສິກຳ (*ໄຮ່, ສວນ ແລະ ນາ*) ທີ່ສືບທອດຈາກພໍ່ແມ່ ຫຼື ບຸກເບີກທີ່ດິນດ້ວຍໂຕເອງ. ແມ່ຍິງ ເຜົ່າກຶມມຸ-ອູ ອາຍຸ 47 ປີ ເຊິ່ງໃນຊີວິດຂອງລາວໄດ້ອອກຈາກບ້ານພຽງແຕ່ ສອງຄັ້ງ ລາວບໍ່ມີ ຄວາມລັງເລເລີຍທີ່ຈະຕອບຄຳຖາມ ເວລາຖາມວ່າສິດໃນການຄອບຄອງທີ່ດິນຕາມປະເພນີແມ່ນຫຍັງ ລາວຕອບດ້ວຍສຽງທີ່ດັງ ແລະ ຈະແຈ້ງໃນພາສາຂອງໂຕເອງວ່າ, '*ຕຣອດມູນ ເດີ ຍິງມະ*'. ທີ່ໝາຍ ຄວາມວ່າ '*ສືບທອດມາແຕ່ພໍ່ແມ່*. ໃນການສົນທະນາກຸ່ມກັບ ຜູ້ຊາຍ ແລະ ແມ່ຍິງໃນບ້ານ ຫາດຈາ ແລະ ບ້ານ ຝົນຫໍ ໄດ້ສະແດງຄວາມ ຮູ້ສຶກດຽວກັນຄື: '*ສິດໃນການຄອບຄອງທີ່ດິນຕາມປະເພນີ ແມ່ນ ກຳມະສິດຕໍ່ທີ່ດິນທີ່ສືບທອດມາຈາກແມ່ ແລະ ພໍ່ ຂອງພວກເຮົາ, ພວກເຮົາມີສິດຕໍ່ດິນນັ້ນ ແລະ ຜູ້ອື່ນບໍ່ສາມາດເອົາໄປຈາກເຮົາ, ມີ ແຕ່ລູກຂອງເຮົາເທົ່ານັ້ນທີ່ຈະໄດ້*'. ຜູ້ເຂົ້າຮ່ວມຢືນຢັນວ່າ 'ລູກ' ໃນທີ່ນີ້ໝາຍເຖິງ ລູກຊາຍ, ແລະ 'ແມ່' ຖືວ່າແມ່ນການຖືສິດໃນທີ່ດິນຮ່ວມ ກັນກັບພໍ່

ສິດໃນການຄອບຄອງດິນກະສິກຳຕາມປະເພນີ (ລວມທັງໄຮ) ອາດ ໝາຍເຖິງການສືບທອດຂອງບຸກຄົນຈາກປູ່ ຫາ ພໍ່ ແລະ ຫາລູກ ຊາຍ. ການປະຕິບັດແບບນີ້ຍັງຄົງສືບຕໍ່ ແລະ ປະຊາຊົນກໍ່ຕອບວ່ານີ້ ເປັນສິ່ງທີ່ຍອມຮັບຈາກທັງ ຜູ້ຊາຍ ແລະ ແມ່ຍິງ. ການສືບທອດທີ່ ດິນຂອງລູກສາວເປັນສິ່ງທີ່ບໍ່ພົບເຫັນໃນການສຶກສານີ້, ສິ່ງນີ້ຖືກ ຢືນຢັນໃນການປະຊຸມບ້ານກອນອອກຈາກການຄົ້ນຄວ້າໃນພາກສະ ໝາມ.

ສິດຕາມປະເພນີ ຕໍ່ດິນລວມໝູ່ໃນເຂດປ່າ ແມ່ນເທົ່າທຽມກັນ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ. 'ປ່າໄມ້ບ້ານ', ໃນກໍລະນີນີ້ແມ່ນຖືກ ຈັດຢູ່ໃນປະເພດທີ່ດິນ ທີ່ເປັນປ່າໄມ້ ແລະ ບໍ່ເຄີຍໃຊ້ໃນການເຮັດໄຮ່ ຫຼື ກະສິກຳອື່ນໆ. ໃນພື້ນທີ່ນີ້ໃຊ້ເພື່ອການເກັບເຄື່ອງປ່າຂອງດົງ, ຕັກ ນ້ຳ (ແຫຼ່ງນ້ຳ) ແລະ ອື່ນໆ. ສິດນີ້ບໍ່ໄດ້ຖືກສືບທອດແຕ່ຖືກຈັດລະ ດັບໃຫ້ເປັນ 'ຂອງລວມໝູ່' ທີ່ສາມາດເຂົ້າເຖິງໄດ້ຢ່າງເທົ່າທຽມກັນ ທັງແມ່ຍິງ ແລະ ຜູ້ຊາຍ. ໃນນີ້ບໍ່ໄດ້ລວມເອົາປ່າສັກສິດ (ບໍ່ແມ່ນ ປ່າຊ້າ) ຫຼື ປ່າດົງດິບທີ່ເປັນພື້ນທີ່ໃນການເຮັດພິກຳທາງສາດສະໝາ ທີ່ສັກສິດ ຕາມທີ່ໄດ້ອະທິບາຍໄວ້ຂ້າງເທິງໃນກໍລະນີບ້ານ ຝົນຫໍ.

ເພື່ອໃຫ້ເຫັນໄດ້ແຈ້ງ ກ່ຽວກັບ ຮູບແບບຂອງປ່າໄມ້ ທີ່ກ່ຽວຂ້ອງກັບ ສິດໃນການສືບທອດຕາມປະເພນີໃນທີ່ດິນເຂດປ່າ, ແຜນວາດຂ້າງ ລຸ່ມນີ້ແມ່ນປະເພດຂອງປ່າໄມ້ທີ່ມີຢູ່ໃນບ້ານທີ່ພວກເຮົາສຶກສາ. ຮູບພາບສະແດງໃຫ້ເຫັນການຈັດລຽງປະເພດທີ່ດິນເປັນຫ້າປະເພດ ທີ່ຮັບຮູ້ໂດຍປະຊາຊົນໃນບ້ານ ແລະ ຈັດລະດັບຕາມປະເພດຂອງ

ລະບົບທີ່ດິນ ແລະ ສິດໃນການສືບທອດທີ່ດິນປ່າໄມ້ ໃນບ້ານທີ່ລົງເກັບກຳຂໍ້ມູນ



ການສືບທອດ, ຜ່ານລະບົບເຄືອຍາດ ຫຼື ການເປັນເຈົ້າຂອງແບບລວມໝູ່.

ສະຫຼຸບແລ້ວ, ທີ່ດິນທັງໝົດຖືກຄຸ້ມຄອງໂດຍຫົວໜ່ວຍຄອບຄົວ ຫຼື ຊຸມຊົນໂດຍລວມ. ທີ່ດິນສາມາດໂອນໃຫ້ຜູ້ສືບທອດໃນແຕ່ລະຮຸ່ນຄົນ ທັງໃນການເປັນເຈົ້າຂອງໂດຍບຸກຄົນ ຫຼື ສິດການເປັນເຈົ້າຂອງລວມໝູ່. ສຳລັບການເປັນເຈົ້າຂອງແບບບຸກຄົນ, ຜູ້ທີ່ໄດ້ຮັບສິດສືບທອດແມ່ນຜູ້ຊາຍ. ຜູ້ຍິງທີ່ຢູ່ພາຍໃຕ້ລະບົບການຄອບຄອງນີ້ ບໍ່ສາມາດເປັນເຈົ້າຂອງທີ່ດິນໄດ້ຢ່າງເປັນເອກະລາດຈາກຜູ້ຊາຍ ຫຼື ຈາກຊຸມຊົນ.

4.3 ການປະຕິບັດກຳມະສິດຕາມປະເພນີຂອງແມ່ຍິງຕໍ່ກັບປ່າໄມ້

ໃນພາກນີ້ຈະເວົ້າເຖິງ ສິດຕາມປະເພນີຂອງແມ່ຍິງ ກ່ຽວກັບປ່າໄມ້ ໃນທາງປະຕິບັດຕົວຈິງ ແລະ ຜົນປະໂຫຍດກັບພວກເຂົາ ແລະ ຊຸມຊົນຂອງພວກເຂົາ, ໂດຍນຳໃຊ້ຊຸດຂອບເຂດສິດໃນການວິເຄາະ ໂດຍຈະເນັ້ນໃສ່ສາມສິດໄດ້ແກ່: ສິດໃນການເຂົ້າເຖິງ, ສິດໃນການເອົາມາໃຊ້ ແລະ ສິດໃນການຕັດສິນໃຈ ເຊິ່ງໝາຍເຖິງການຄຸ້ມຄອງ. ນອກນີ້ຍັງຈະໄດ້ສົນທະນາລະດັບການມີສ່ວນຮ່ວມຂອງແມ່ຍິງ ໃນຂະບວນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແລະ



ຮູບທີ 2: ການນຳໃຊ້ທີ່ດິນແບ່ງຕາມເພດ, ແຜນວາດການນຳໃຊ້ປ່າໄມ້ ຈາກກຸ່ມແມ່ຍິງ ບ້ານ ຫາດຈາ.



ຮູບທີ 3: ການນຳໃຊ້ທີ່ດິນແບ່ງຕາມເພດ, ແຜນວາດການນຳໃຊ້ປ່າໄມ້ ຈາກກຸ່ມຜູ້ຊາຍ ບ້ານ ຫາດຈາ.

ແຜນຄຸ້ມຄອງປ່າໄມ້ບ້ານ (VFMP), ເຊິ່ງທັງສອງຮູບແບບນີ້ ເປັນສ່ວນໜຶ່ງໃນການຍອມຮັບສິດໃນທີ່ດິນ ແລະ ປ່າໄມ້ຕາມປະເພນີ ທີ່ເປັນທາງການ ໃນການຄຸ້ມຄອງທີ່ດິນ ແລະ ປ່າໄມ້. ຮູບທີ 2 ແລະ 3 ແມ່ນແຜນທີ່ປ່າໄມ້ບ້ານ ຫາດຈາ ທີ່ແຕ້ມໂດຍ ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ ໃນລະຫວ່າງການສົນທະນາກຸ່ມ, ລາຍລະອຽດຈະອະທິບາຍໃນພາກຕໍ່ໄປ[1] . ສັນຍາລັກ ຊາຍ ແລະ ຍິງ ໃນຮູບແຕ້ມ ແມ່ນໃຊ້ເພື່ອເບິ່ງບອກເຂດປ່າໄມ້ ທີ່ຜູ້ຊາຍ ແລະ ແມ່ຍິງເຂົ້າເຖິງ ແລະ ເປັນບ່ອນທີ່ພວກເຂົາສາມາດນຳໃຊ້ ແລະ ຄຸ້ມຄອງ. ສັນຍາລັກສີແດງສະແດງເຖິງພື້ນທີ່ ທີ່ມີສິດເຂົ້າເຖິງ, ສັນຍາລັກສີຟ້າອ່ອນແມ່ນສະແດງເຖິງພື້ນທີ່ທີ່ມີສິດໃນການເອົາມາໃຊ້ ແລະ ສັນຍາລັກສີຟ້າແກ່ ແມ່ນສະແດງເຖິງພື້ນທີ່ ທີ່ມີສິດໃນການຄວບຄຸມ ຫຼື ການຄຸ້ມຄອງຖືກຮັບຮູ້.

4.3.1. ສິດໃນການເຂົ້າເຖິງ

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ການນຳໃຊ້ທີ່ດິນທີ່ເປັນຂອງລວມໝູ່ ແມ່ນສິດທີ່ມີມາແຕ່ເກີດ ທັງຜູ້ຊາຍ ແລະ ແມ່ຍິງ. ຜົນຈາກການສົນທະນາກຸ່ມຈາກທັງສອງບ້ານທີ່ລົງເຮັດວຽກ ສະແດງໃຫ້ເຫັນວ່າ ສິ່ງນີ້ເປັນຄວາມຈິງ. ການເຂົ້າໄປປ່າໄມ້ແມ່ນບໍ່ຈຳເປັນຕ້ອງໄດ້ຂໍອະນຸຍາດ ຫຼື ແຈ້ງໃຫ້ໃຜຮູ້ (ຍົກເວັ້ນອາດຕ້ອງແຈ້ງສິ່ງສັກສິດທີ່ຮັກສາປ່າ). ແມ່ຍິງເຜົ່າ ກົມມຸ-ອູ ກ່າວວ່າ: *'ແມ່ຍິງມີສິດໄປທຸກບ່ອນຢູ່ປ່າ ...ຄືກັນກັບຜູ້ຊາຍ...ໂດຍບໍ່ຕ້ອງຂໍອະນຸຍາດ ...ພວກເຮົາເຂົ້າປ່າທຸກມື້ ແລະ ບາງຄັ້ງແມ່ຍິງໄປໄກກວ່າຜູ້ຊາຍ."* (ນ. ໄລ ແມ່ລ້ຽງ ດ່ຽວທີ່ມີລູກສາມຄົນ, ອາຍຸ 28 ປີ)

ໂດຍທົ່ວໄປແລ້ວ ເກືອບບໍ່ມີຂໍ້ຫ້າມໃດທີ່ບໍ່ໃຫ້ແມ່ຍິງ ຫຼື ຜູ້ຊາຍ ເຂົ້າປ່າ: ດັ່ງທີ່ໄດ້ອະທິບາຍໄວ້ກ່ອນໜ້ານີ້ວ່າ ບໍ່ແມ່ນເລື່ອງປົກກະຕິທີ່ຜູ້ຊາຍ ແລະ ແມ່ຍິງໃນບ້ານ ຝົນຫໍ ບໍ່ເຂົ້າໄປໃນປ່າສັກສິດ. ປ່າສັກສິດຂອງ ບ້ານ ຝົນຫໍ ແມ່ນມີກອນທີ່ປະຊາຊົນຍ້າຍມາຢູ່ໃນບ້ານ ແລະ ກໍ່ເປັນປ່າດົງດິບແຫ່ງດຽວທີ່ເຫຼືອໃນເຂດບ້ານ. ປ່ານີ້ຢູ່ໃນເຂດອ່າງໂຕ່ງທີ່ມີໂຄງການພັດທະນາໄປ ກໍ່ສ້າງອ່າງເກັບນ້ຳ ແລະ ສ້າງລະບົບນ້ຳລົນທີ່ສະໜອງນ້ຳໃຫ້*ຄົວເຮືອນ*ໃນ ບ້ານ ຝົນຫໍ, ປ່າສັກສິດເຕັມໄປດ້ວຍຊີວະນາງາມ, ທັງສັດປ່າ, ພືດທີ່ເປັນຢາ, ເຄື່ອງປ່າຂອງດົງ ແລະ ຕົ້ນໄມ້ໃຫຍ່. ປົກກະຕິແລ້ວ ຜູ້ຊາຍ ແລະ ແມ່ຍິງ ບໍ່ເຂົ້າໄປໃນປ່າສັກສິດນີ້ ຍ້ອນມີຄວາມເຊື່ອວ່າ ຈະເຮັດໃຫ້ພວກເຂົາເຈັບປ່ວຍ ແລະ ນຳໂຊກຮ້າຍມາສູ່ພວກເຂົາ ແລະ ຄົນທັງໝູ່ບ້ານ. ເຖິງຢ່າງໃດກໍ່ຕາມ, ຜູ້ຊາຍຈະເຂົ້າປ່ານີ້ ກໍ່ຕໍ່ເມື່ອຕ້ອງການເກັບພືດທີ່ເປັນຢາທີ່ຫາບ່ອນອື່ນບໍ່ໄດ້ ແລະ ຕ້ອງໄດ້ເຮັດພິທີກຳບາງຢ່າງທີ່ຜູ້ເຖົ້າຜູ້ແກ່ເປັນຜູ້ພາເຮັດ ໂດຍທີ່ພວກເຂົາບໍ່ຕ້ອງຂໍອະນຸຍາດຈາກອຳນາດການປົກຄອງບ້ານກ່ອນເຂົ້າໄປ.

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ປະຊາຊົນ ບ້ານ ຝົນຫໍ ໃຫ້ຄວາມເຄົາລົບຕໍ່ປ່າສັກສິດຫຼາຍ ແລະ ການອຸທິດຕົນ ແລະ ການເຄົາລົບຂອງພວກເຂົາສະແດງອອກໃນງານປະຈຳປີ 'ເສນ ບ້ານ' ຫຼື ການເຄົາລົບຕໍ່ສິ່ງສັກສິດທີ່ປົກປັກຮັກສາບ້ານ ເຊິ່ງສິ່ງສັກສິດດັ່ງກ່າວອາໄສຢູ່ເຂດປ່າສັກສິດ. ສິ່ງສັກສິດນີ້ປົກປັກຮັກສາປະຊາຊົນ ເມື່ອພວກເຂົາເຂົ້າເຂດປ່າໃນບ້ານ ແລະ ບ່ອນອື່ນເພື່ອຫາອາຫານໃນຊີວິດປະຈຳວັນ. ພວກເຮົາພົບວ່າ ແມ່ຍິງ ຊາວໄຕຂາວມີຄວາມສຳພັນທີ່ສະໜິດແໜ້ນກັບປ່າໄມ້ ແລະ ພວກເຂົາບອກว่า ປ່າເຮັດໃຫ້ພວກເຂົາຮູ້ສຶກສະບາຍໃຈ ແລະ ປອດໄພ. ຕໍ່ກັບເລື່ອງນີ້, ກຸ່ມສົນທະນາຈາກອຳນາດການປົກຄອງບ້ານ ແລະ ຜູ້ຊາຍ ກ່າວສະໜັບສະໜູນວ່າ *'ແມ່ຍິງສາມາດເຂົ້າໄປໃນປ່າເລິກໄດ້ ແລະ ພວກເຂົາກໍ່ບໍ່ຢ້ານ... ວິນຍານຂອງແມ່ຈະປົກປ້ອງພວກເຂົາ'*. ປະຊາຊົນບອກว่า ນີ້ເປັນຍ້ອນວິນ

1 ຜົນຂອງການເຮັດວຽກກຸ່ມບ້ານ ຝົນຫໍ ສາມາດເບິ່ງໄດ້ທີ່ເອກະສານຊ້ອນທ້າຍທີ 4.

ຍານຂອງແມ່ສະຖິດຢູ່ສານພະພູມທີ່ສ້າງໄວ້ໃນປ່າໄມ້: *'ພວກເຮົາເຊື່ອว่า ວິນຍານແມ່ເຮົາສະຖິດຢູ່ປ່າໄມ້ ...ພວກເຮົາສ້າງສານສຳລັບເພີ່ນ... ໃນຂະນະທີ່ວິນຍານຝ່າຍພໍ່ແມ່ນຢູ່ໃນເຮືອນ.'*

ດ້ານຄວາມສຳພັນ ລະຫວ່າງແມ່ຍິງ ແລະ ປ່າໄມ້, ວັດທະນະທຳ ກຶມມຸ ໃນບ້ານ ຫາດຈາ ຕ່າງຈາກຊົນເຜົ່າໄຕຂາວ, ເຊິ່ງເປັນສິ່ງຄາດການໄດ້ເນື່ອງຈາກວັດທະນະທຳຂອງສອງຊົນເຜົ່າຕ່າງກັນ. ຊົນເຜົ່າ ກຶມມຸ ມີຄວາມສຳພັນກັບປ່າໄມ້ທີ່ຊັບຊ້ອນຫຼາຍ, ແຕ່ການປະຕິບັດຫຼາຍຢ່າງກ່ຽວກັບປ່າໄມ້ຍັງເປັນຄວາມລັບ. ຍ້ອນມີເວລາຈຳກັດໃນການສຶກສາຄັ້ງນີ້ ຊຶ່ງໝາຍຄວາມວ່າຜູ້ຄົ້ນຄວ້າບໍ່ສາມາດສ້າງຄວາມໄວ້ໃຈຈາກຊຸມຊົນໃນບ້ານ ຫາດຈາ ໄດ້ໃນເວລາສັ້ນ, ດັ່ງນັ້ນຈຶ່ງບໍ່ສາມາດສຶກສາເຖິງຄວາມຊັບຊ້ອນຂອງຄວາມສຳພັນລະຫວ່າງ ຊົນເຜົ່າ ກຶມມຸ ກັບປ່າໄມ້ໄດ້ຫຼາຍກວ່ານີ້. ແຕ່ແກ່ນສານສຳຄັນແມ່ນແມ່ຍິງກຶມມຸ ບໍ່ໄດ້ຖືກຫ້າມໃນການເຂົ້າປ່າໄມ້ ແລະ ເບິ່ງຄືວ່າຈະໃຊ້ເວລາໃນປ່າໄມ້ຫຼາຍກວ່າຜູ້ຊາຍ. ຫາກມີການສຶກສາເພີ່ມເຕີມກ່ຽວກັບການຄຸ້ມຄອງປ່າໄມ້ຕາມປະເພນີ, ໂດຍສະເພາະບົດບາດຂອງແມ່ຍິງໃນລະບົບການຄຸ້ມຄອງປ່າໄມ້ຕາມປະເພນີ, ຈະເປັນປະໂຫຍດຫຼາຍເພື່ອຄວາມເຂົ້າໃຈທີ່ເລິກເຊິ່ງ ແລະ ປົກປ້ອງສິດໃນການຄຸ້ມຄອງທີ່ດິນປ່າໄມ້ຕາມປະເພນີຂອງແມ່ຍິງ.

ກ່ຽວກັບການເຂົ້າເຖິງປ່າໄມ້, ສາມາດເວົ້າໄດ້ວ່າທັງຜູ້ຊາຍ ແລະ ແມ່ຍິງ ມີສິດເກືອບສະເໝີພາບກັນໃນການເຂົ້າເຖິງພື້ນທີ່ ແລະ ຈົນຮອດຕອນນີ້ພວກເຂົາກໍ່ຍັງເຮັດຕາມສິດນີ້ຢູ່ ໂດຍບໍ່ມີການແຊກແຊງຈາກພາຍນອກຫຼາຍ. ເຖິງຢ່າງໃດກໍ່ຕາມສິດໃນການນຳໃຊ້ຊັບພະຍາກອນປ່າໄມ້ ແມ່ນອີກເລື່ອງໜຶ່ງເຊິ່ງຈະລາຍງານໃນພາກຕໍ່ໄປ.

4.3.2. ສິດໃນການເອົາມາໃຊ້ ແລະ ຜົນປະໂຫຍດ

ໃນລະຫວ່າງການເຮັດແຜນທີ່ ການນຳໃຊ້ປ່າໄມ້, ທີມງານຄົ້ນຄວ້າພົບວ່າ ມີຄວາມແຕກຕ່າງໃນການໃຊ້ທາງດ້ານພື້ນທີ່ ລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ ໃນເລື່ອງຂອງການຫາອາຫານ. ແມ່ຍິງຈະໃຊ້ປ່າໃກ້ກັບເຮືອນເພື່ອເກັບອາຫານທຳມະຊາດມາບໍລິ�โພກປະຈຳວັນ (ເຊັ່ນ: ສະໝຸນໄພ, ຜັກປ່າ, ເຫັດ...). ໃນການສົນທະນາກຸ່ມ, ແມ່ຍິງໄດ້ບອກว่า ພວກເຂົາຮັບຜິດຊອບໃນການເກັບພືດຜັກຈາກປ່າເພື່ອການບໍລິ�โພກປະຈຳວັນ ແລະ ເປັນກິດຈະກຳທີ່ສຳຄັນ ທີ່ສະ

ຜູ້ຊາຍຢູ່ບ້ານ ຝົນຫໍ ກຳກັບມາຈາກການຫາໝາກດຸກເດືອ

ແດງໃຫ້ເຫັນສະຖານະຂອງພວກເຂົາໃນຖານະທີ່ເປັນ 'ແມ່ຍິງທີ່ດີ' ແລະ ສະມາຊິກຂອງສັງຄົມ.ໃນຮູບທີ 2 ແລະ 3, ແມ່ຍິງຍັງເຂົ້າໄປປ່າເລິກ ໂດຍການຢ່າງເພື່ອເກັບເຄື່ອງປ່າຂອງດົງໄປຂາຍ. ອີກດ້ານໜຶ່ງ, ຜູ້ຊາຍ ແມ່ນຜູ້ອອກລ່າສັດໃນປ່າທີ່ໄກຈາກບ້ານ, ແຕ່ວ່າພວກເຂົາເດີນທາງດ້ວຍການຢ່າງ ແລະ ລົດຈັກ. ຍັງມີອຸປະສັກຫຼາຍຢ່າງທີ່ເປັນສິ່ງກີດຂວາງ ແມ່ຍິງໃນດ້ານການເຂົ້າເຖິງປ່າໄມ້, ການເດີນທາງຂອງຜູ້ຊາຍດ້ວຍລົດຈັກ ເຮັດໃຫ້ພວກເຂົາສາມາດໄປໄດ້ໄກກວ່າ ແລະ ເຮັດໃຫ້ພວກເຂົາສາມາດເຂົ້າເຖິງເຄື່ອງປ່າຂອງດົງ ແລະ ຜະລິດຕະພັນຈາກປ່າໃນຈຳນວນທີ່ຫຼາຍ ແລະ 'ມີຄ່າ' ກວ່າ. ສິ່ງນີ້ສົ່ງຜົນກະທົບດ້ານລົບຕໍ່ແມ່ຍິງໃນການເຂົ້າເຖິງຕະຫຼາດ ແລະ ຄວາມສາມາດໃນການເພີ່ມລາຍໄດ້ຈາກເຄື່ອງປ່າຂອງດົງ ແລະ ເຮັດໃຫ້ຄົວເຮືອນ ແລະ ຄອບຄົວຂອງຍິງຮ້າງ ຫຼື ໝາຍ ຫຼື ໂສດ ທີ່ດ້ອຍໂອກາດໃນຊຸມຊົນຢູ່ແລ້ວຍິ່ງມີລາຍໄດ້ໜ້ອຍລົງ.

ຊີ້ນທີ່ໄດ້ຈາກການລ່າສັດສ່ວນໜຶ່ງແມ່ນໃຊ້ບໍລິ�โພກປະຈຳວັນ, ປ່າໄມ້ເປັນແຫຼ່ງອາຫານ (ເຊັ່ນ: ສັດປ່າ ແລະ ພືດຜັກຈາກປ່າ) ຂອງຄົນທັງບ້ານ. ປະຊາຊົນບອກว่า ການຊື້ອາຫານຈາກຕະລາດບໍ່ເປັນທີ່ໜ້າພໍໃຈສຳລັບພວກເຂົາ, ຍ້ອນພວກເຂົາເຊື່ອว่า ອາຫານຈາກປ່າໃຫ້ພະລັງງານຫຼາຍກວ່າ ແລະ ໄດ້ລົດຊາດອາຫານ 'ທີ່ແທ້ຈິງ' ແລະ ປອດໄພກວ່າ.

ເຄື່ອງປ່າຂອງດົງແມ່ນຖືກເກັບກ່ຽວ ເພື່ອໃຫ້ສາມາດຂະຫຍາຍໂຕໄດ້ ແລະ ຮັບປະກັນຄວາມຍືນຍົງ. ແຕ່ເປັນທີ່ໜ້າເສຍດາຍ, ປະຊາຊົນບາງຄົນໃນບ້ານ ແລະ ນອກບ້ານ ເລີ່ມນຳໃຊ້ປ່າຢ່າງບໍ່ລະມັດລະວັງ ເຮັດໃຫ້ປະຊາຊົນມີຄວາມກັງວົນກັບການລຸດລົງຂອງຊັບພະຍາກອນນີ້, ໂດຍສະເພາະແມ່ຍິງທີ່ອາໄສຊັບພະຍາກອນເຫຼົ່ານີ້ໃນການເຮັດໜ້າທີ່ ຕາມບົດບາດທາງເພດຂອງພວກເຂົາ. ຕາຕະລາງ ຢູ່ເອກະສານຊ້ອນທ້າຍ 3 ສະແດງໃຫ້ເຫັນ ການນຳໃຊ້ຊັບພະຍາກອນຕາມເພດໃນບ້ານສຶກສາ.

ການສຶກສານີ້ພົບว่า ໃນບ້ານ ຝົນຫໍ ແລະ ບ້ານ ຫາດຈາ, ແມ່ຍິງເປັນຜູ້ຫຼັກໃນການນຳໃຊ້ປ່າໄມ້ເພື່ອການບໍລິ�โພກໃນຄອບຄົວ. ຫຼັກຖານສາມາດເຫັນໄດ້ຢ່າງຈະແจ້ງໃນເອກະສານຊ້ອນທ້າຍ 3 ว่า ແມ່ຍິງແມ່ນຜູ້ຫຼັກໃນການເກັບເຄື່ອງປ່າຂອງດົງເພື່ອບໍລິ�โພກ ແລະ ຂາຍ, ປ່າເປັນແຫຼ່ງລາຍໄດ້ເສີມທີ່ສຳຄັນຂອງຄົນທັງບ້ານ ນອກຈາກການຂາຍໝູ, ໄກ່ ແລະ ງົວ-ຄວາຍ. ແມ່ຍິງເຜົ່າ ກຶມມຸ ຈາກບ້ານ ຫາດຈາ ໄດ້ເນັ້ນໃຫ້ເຫັນຄວາມສຳຄັນນີ້ໂດຍເວົ້າว่า, *'ການຂາຍຫຍ້າແຂມ [Thysanolaena latifolia] ແລະ ເຄື່ອງປ່າຂອງດົງອື່ນໆ ເປັນລາຍໄດ້ໃນການລ້ຽງຊີບສຳລັບຄອບຄົວ...ຂ້ອຍບໍ່ມີແຫຼ່ງລາຍໄດ້ອື່ນ...ຖ້າບໍ່ມີປ່າໄມ້ພວກເຮົາກໍ່ບໍ່ມີອາຫານ'.*

ໃນຊຸມຊົນເຫຼົ່ານີ້, ແມ່ຍິງແມ່ນຜູ້ຮັກສາເງິນ 'ບັນຊີ' ຂອງຄອບຄົວ. ເຖິງຢ່າງໃດກໍ່ຕາມ, ການຕັດສິນໃຈກ່ຽວກັບການໃຊ້ເງິນຈະແຕກຕ່າງກັນລະຫວ່າງ ບ້ານ ຫາດຈາ ແລະ ຝົນຫໍ: ຈາກການລາຍງານຂອງຜູ້ເຂົ້າຮ່ວມສົນທະນາ ຈາກບ້ານ ຫາດຈາ ພົວ ແລະ ເມຍ ຕັດສິນໃຈຮ່ວມກັນສຳລັບຄ່າໃຊ້ຈ່າຍໃນຄອບຄົວ ທັງນ້ອຍ ແລະ ໃຫຍ່, ເຊັ່ນ ການປັບປຸງເຮືອນ ແລະ ຊື້ປັດໃຈການຜະລິດກະສິກຳ. ໃນທາງກົງກັນຂ້າມ, ແມ່ຍິງໃນບ້ານ ຝົນຫໍ ເປັນຜູ້ຮັກສາເງິນ ແຕ່ຕ້ອງແจ້ງພົວກ່ອນว่าจะใช้จ่ายอันใด. ພົວຕ້ອງຂໍເງິນຈາກເມຍເມື່ອຕ້ອງການຊື້ສິ່ງທີ່ຕ້ອງການເຖິງว่าจะเป็นสิ่งเล็กน้อย. ຜູ້ຊາຍໃນສອງບ້ານນີ້ລາຍງານແບບດຽວກັນว่า ຖ້າພວກເຂົາເປັນຄົນເກັບເງິນໄວ້ເອງ ເງິນຈະໝົດກັບການ ຊື້ເບຍ, ຢາສູບ ແລະ ສິ່ງຕ່າງໆ ທີ່ບໍ່ຈຳເປັນ. ເຖິງຢ່າງໃດກໍ່ຕາມ ແມ່ຍິງສາມາດຕັດສິນໃຈໄດ້ว่าจะซื้อหยังใช้โตเอง ລວມທັງເຄື່ອງນຸ່ງ, ເຖິງແມ່ນว่าผู้ยิง ไตขาว ต้องใช้ผิวรู้ และ เห็นดี

ນຳວ່າ ສີເຄື່ອງນຸ່ງທີ່ຈະຊື້ເປັນສີຫຍັງ. ການປະຕິບັດຕາມປະເພນີນີ້ ເປັນການຮັກສາຄວາມສຳພັນລະຫວ່າງຜົວເມຍ ເພື່ອຫຼີກລ່ຽງຄວາມ ຂັດແຍ່ງໃນຄອບຄົວ.

ເມື່ອສົນທະນາກັບຜູ້ໃຫ້ຂໍ້ມູນ ກ່ຽວກັບການນຳເຄື່ອງປ່າຂອງດົງມາ ໃຊ້, ທັງແມ່ຍິງ ແລະ ຜູ້ຊາຍລາຍງານວ່າ ພວກເຂົາສາມາດເອົາ ຊັບພະຍາກອນປ່າໄມ້ມາໃຊ້ໄດ້ເທົ່າທຽມກັນໂດຍບໍ່ຕ້ອງຂໍອະນຸຍາດ. ຍົກເວັ້ນເວລາຕ້ອງການຕັດຕົ້ນໄມ້ຂະໜາດໃຫຍ່ເພື່ອສ້າງເຮືອນ: ປະຊາຊົນເນັ້ນວ່າພວກເຂົາມີຄວາມຮັບຜິດຊອບໃນການປົກປັກຮັກ ສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ເຖິງຢ່າງໃດກໍ່ຕາມ, ມີຄວາມ ໝັ່ນກັງວົນໃຈว່າ ຊັບພະຍາກອນປ່າໄມ້ມີໜ້ອຍລົງເນື່ອງຈາກການ ຂຸດຄົ້ນເກີນຂອບເຂດ. ສິ່ງນີ້ສົ່ງຜົນກະທົບຕໍ່ແມ່ຍິງ, ເພາະຫາກປ່າ ຖືກທຳລາຍ ພວກເຂົາຕ້ອງໄດ້ຢ່າງໄກກວ່າ ເພື່ອເກັບອາຫານປ່າ ແລະ ເຄື່ອງປ່າຂອງດົງ ສົ່ງຜົນໃຫ້ພວກເຂົາຕ້ອງໃຊ້ເວລາຫຼາຍຊົ່ວ ໂມງໃນການເດີນທາງ, ເກັບກ່ຽວ ແລະ ຂົນກັບເຮືອນ ແລະ ຍັງຕ້ອງ ຮັບຜິດ ຊອບວຽກໃນຄອບຄົວ (ເຊັ່ນ: ເຮັດຄວາມສະອາດ ແລະ ລ້ຽງລູກ). ສິ່ງນີ້ສົ່ງຜົນກະທົບໂດຍກົງຕໍ່ການເຂົ້າຮ່ວມວຽກງານລັດ ຖະການ, ການປະຊຸມ ແລະ ກິດຈະກຳຕ່າງໆ ໃນບ້ານ, ເມື່ອພວກ ເຂົາມີວຽກໜັກ ແລະ ມີເວລານ້ອຍໃນການເຂົ້າຮ່ວມກອງປະຊຸມ. ແມ່ຍິງເຫຼົ່ານີ້ພົບຄວາມທຸກຈົນທາງດ້ານເວລາ[1] ກໍ່ເນື່ອງຈາກว່າ ພວກເຂົາແມ່ນຜູ້ຮັບຜິດຊອບຫຼັກໃນການເບິ່ງແຍງລູກ ແລະ ຮັບຜິດ ຊອບວຽກເຮືອນ. ເມື່ອແມ່ຍິງໄດ້ເຂົ້າຮ່ວມກອງປະຊຸມ ແລະ ການ ມີສ່ວນຮ່ວມຂອງພວກເຂົາເຂົ້າຮ່ວມໃນການຕັດສິນບັນຫາ ຫຼື ບໍ່ນັ້ນ ແມ່ນບັນຫາຫຼັກຢ່າງໜຶ່ງທີ່ການສຶກສາຄັ້ງນີ້ໄດ້ໃຫ້ຄວາມສຳຄັນ. ລາຍລະອຽດຈະນຳສະເໜີໃນພາກຕໍ່ໄປ.

ສະຫຼຸບແລ້ວ, ພວກເຮົາເຫັນว່າແມ່ຍິງ ແລະ ຜູ້ຊາຍ ມີສິດເທົ່າທຽມ ກັນໃນການນຳເອົາເຄື່ອງປ່າຂອງດົງມາໃຊ້ ຊຶ່ງເປັນສິ່ງຈຳເປັນສຳລັບ ອາຫານ ແລະ ຄວາມເປັນຢູ່ທີ່ດີຂອງແມ່ຍິງ, ຄອບຄົວ ແລະ ຄົນທັງ ບ້ານ. ເຖິງว່າຜູ້ຊາຍ ແລະ ແມ່ຍິງສາມາດເຂົ້າເຖິງປ່າໄມ້ໄດ້ຄືກັນ, ແຕ່ກໍ່ຍັງມີຄວາມບໍ່ເທົ່າທຽມກັນຢູ່ ຍ້ອນການປະຕິບັດບົດບາດທາງ ເພດຕາມປະເພນີ. ສະນັ້ນ, ເຮົາເຫັນว່າແມ່ຍິງ ເຮັດວຽກຫຼາຍຊົ່ວ ໂມງກວ່າໃນການເດີນທາງໂດຍການຍ່າງ ແລະ ໄລຍະທາງທີ່ໄກ, ໃນ ຂະນະດຽວກັນ ຊັບພະຍາກອນປ່າໄມ້ກໍ່ຫຼຸດໜ້ອຍລົງຍ້ອນການເພີ່ມ ຂອງປະຊາກອນ ແລະ ການຂຸດຄົ້ນຫຼາຍຂຶ້ນ. ການຄຸ້ມຄອງຊັບພະ ຍາກອນທຳມະຊາດທີ່ດີຂຶ້ນ, ລວມທັງການເອົາແມ່ຍິງມາມີສ່ວນຮ່ວມ ໃນການຕັດສິນໃຈ ຢ່າງນ້ອຍຈະເປັນການຫຼຸດຜ່ອນພາລະຂອງແມ່ຍິງ ທີ່ມີຢູ່.

4.4. ບົດບາດຂອງແມ່ຍິງໃນການຄຸ້ ມຄອງ ປ່າໄມ້

ໃນພາກນີ້ຈະອະທິບາຍຂໍ້ຄົ້ນພົບ ກ່ຽວກັບ ການຄຸ້ມຄອງປ່າໄມ້, ເປັນຕົ້ນແມ່ນກວດສອບ ສິດຕັດສິນໃຈໃນການຄຸ້ມຄອງ ແລະ ບັນຫາກ່ຽວກັບການຕັດສິດ ແລະ ສິດໃນການໂອນກຳມະສິດ. ໃນ ພາກກ່ອນໄດ້ເວົ້າເຖິງຊັບພະຍາກອນປ່າໄມ້ ທີ່ກ່ຽວກັບການເຂົ້າເຖິງ ແລະ ການນຳມາໃຊ້ ແລະ ສິ່ງທີ່ຕິດພັນກັບການເປັນເຈົ້າຂອງ. ການ ເປັນເຈົ້າຂອງໃນກໍລະນີສຶກສານີ້ໝາຍເຖິງລະບົບຄວາມສຳພັນທາງ ສັງຄົມລະຫວ່າງສະມາຊິກໃນບ້ານ ແລະ ສະຖາບັນໃນທ້ອງຖິ່ນ ທີ່ ເປັນຜູ້ຄຸ້ມຄອງທີ່ດິນ ແລະຊັບພະຍາກອນປ່າໄມ້.

ແມ່ຍິງ ຂົນຫຍ້າແຂມຈາກປ່າກັບບ້ານ

1 ການໃຊ້ເວລາຂອງແມ່ຍິງແມ່ນສຳຄັນທາງດ້ານສັງຄົມ, ການຍອມຮັບຂອງແມ່ຍິງຈາກສັງຄົມ, ແມ່ຍິງຕ້ອງສະແດງອອກว່າເຮັດວຽກ ໝັກເພື່ອໃຫ້ມີຄຸນຄ່າ. ເຊັ່ນ ດຽວກັນກັບຜູ້ຊາຍທີ່ຕ້ອງສະແດງໃຫ້ສາທາລະນະເຫັນว່າພວກເຂົາເປັນຫົວໜ້າຄອບຄົວທີ່ດີ.

4.4.1. ການມີສ່ວນຮ່ວມແມ່ຍິງໃນການຄຸ້ມຄອງທີ່ດິນໃນປ່າ ແລະ ຊັບພະຍາກອນຕາມປະເພນີ

ຊົນເຜົ່າໄຕຂາວຈາກ ບ້ານ ຝົນຫໍ ແລະ ຊົນເຜົ່າ ກົມມຸ-ອູ ຈາກ ບ້ານ ຫາດຈາ ມີລະບົບການສືບເຊື້ອສາຍທາງພໍ່, ຊົນເຜົ່າໄຕຂາວ ຈາກ ບ້ານ ຝົນຫໍ ມີລະບົບການສືບເຊື້ອສາຍທາງພໍ່ ແລະ ຊົນເຜົ່າ ກົມມຸ ຈາກບ້ານ ຫາດຈາ ມີລະບົບການແຕ່ງດອງນອກຊົນເຜົ່າ. ທັງສອງບ້ານແມ່ນສືບທອດມໍລະດົກຜ່ານທາງຜູ້ຊາຍ. ແຕ່ຢ່າງໃດ ກໍ່ຕາມໃນການແຕ່ງດອງຝ່າຍເຈົ້າສາວ ເປັນຜູ້ນຳສິ່ງມີຄ່າເຂົ້າມາຫາ ຜູ້ຊາຍ ບໍ່ວ່າຈະເປັນໃນຮູບແບບເຄື່ອງຂອງ ແລະ ສັດລ້ຽງ. ໃນ ຂະນະດຽວກັນທາງຄອບຄົວເຈົ້າສາວກໍ່ຈະໄດ້ຄ່າດອງເປັນສັດລ້ຽງ, ເຄື່ອງເງິນ ແລະ ສິ່ງຂອງມີຄ່າອື່ນໆ. (ເຊິ່ງບ້ານ ຫາດຈາ ຕັ້ງຄ່າດອງ ໄວ້ສູງສຸດ 5 ລ້ານກີບ ແລະ ບ້ານ ຝົນຫໍ ແມ່ນບໍ່ມີກຳໜົດ).

ການຄຸ້ມຄອງທີ່ດິນມີຄວາມກ່ຽວຂ້ອງກັບເຄືອຍາດ ຫຼື ການແຕ່ງ ດອງ[1] ແລະ ສະຖາບັນອື່ນໆ ໃນບ້ານ (ເບິ່ງຕາມຮູບ 4). ກ່ອນອື່ນ ໝົດ, ສະຖາບັນຕາມປະເພນີທີ່ສຳຄັນທີ່ສຸດ ສຳລັບການຄຸ້ມຄອງ ທີ່ດິນແມ່ນກຸ່ມເຄືອຍາດ. ນີ້ແມ່ນໂຄງສ້າງຕາມປະເພນີ, ໂດຍຜູ້ຊາຍ ເປັນຜູ້ນຳໃນການປົກຄອງ ເຊິ່ງປົກກະຕິແລ້ວແມ່ນຜູ້ເຖົ້າຜູ້ແກ່ທີ່ ສຳຄັນໃນວົງຕະກຸນ ຫຼື ເຄືອຍາດ. ສິ່ງທີ່ຮອງລົງມາແມ່ນ, ສະຖາບັນ ຄອບຄົວແມ່ນປັດໃຈຫຼັກໃນການຄຸ້ມຄອງທີ່ດິນຕາມປະເພນີ ໂດຍ ສະເພາະແມ່ນ ທີ່ດິນ ແລະ ຊັບສິນສ່ວນຕົວ. ສະຖາບັນນີ້ ສາມາດ ກຳນົດສິດໃນການແຈກຢາຍທີ່ດິນ ແລະ ຊັບສິນ, ຄວາມເປັນເຈົ້າ ຂອງ, ການນຳໃຊ້ ແລະ ການແບ່ງປັນຜົນປະໂຫຍດລະຫວ່າງ ສະມາຊິກໃນຄອບຄົວ, ສະມາຊິກໃນເຄືອຍາດ ແລະ ຊຸມຊົນພາຍໃນ ບ້ານ, ສິ່ງທີສາມ, ໂຄງສ້າງໃນການຄຸ້ມຄອງແມ່ນ ການບໍລິຫານບ້ານ ຕາມປະເພນີທີ່ປະສົມປະສານກັບໂຄງສ້າງອຳນາດການປົກຄອງ ບ້ານໃນປະຈຸບັນ. ສະຖາບັນນີ້ແມ່ນຄຸ້ມຄອງໂດຍຜູ້ເຖົ້າຜູ້ແກ່ຜູ້ຊາຍ ໂດຍນຳໃຊ້ຣິດຄອງປະເພນີ ເພື່ອເປັນແນວທາງໃນການປະຕິບັດທາງ ສາດສະໜາ ແລະ ເປັນທີ່ຍອມຮັບຈາກສະມາຊິກທັງໝົດໃນຊຸມຊົນ. ດ້ວຍເຫດນີ້, ໂຄງສ້າງທີ່ສາມໃນການຄຸ້ມຄອງທີ່ດິນບ້ານແມ່ນການ ປະສານລະຫວ່າງການປະຕິບັດຕາມປະເພນີ ແລະ ຕາມນະໂຍບາຍ ພາກລັດ ກ່ຽວກັບການຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນ.

ຄຳຖາມທີ່ສຳຄັນ ກ່ຽວກັບອົງປະກອບຂອງສະຖາບັນຕ່າງໆ ໃນການ ແຈກຢາຍຊັບພະຍາກອນຄື: ໃຜເປັນຜູ້ຕັດສິນໃຈວ່າຈະແບ່ງປັນແນວ ໃດ ແລະ ຂະບວນການຕັດສິນໃຈມີຄືແນວໃດ? ໃຜເປັນຜູ້ຮັບ ຊັບພະຍາກອນ ແລະ ປະຊາຊົນມີສິດ ແລະ ຄວາມຮັບຜິດຊອບຫຍັງ ແນ່? ແລະ ແມ່ນໃຜມີພາລະບົດບາດໃນການຄວບຄຸມ ແລະ ຄຸ້ມຄອງ ສິດຂອງແມ່ຍິງໃນທຸກມິຕິ ແລະ ທຸກຂະບວນການ? ຈາກຮູບ 4 ເຫັນ ໄດ້ຊັດເຈນວ່າ ຜູ້ສ້າງກົດລະບຽບທັງໝົດແມ່ນຜູ້ຊາຍ ແລະ ຜູ້ຊາຍ ເປັນຜູ້ນຳຂອງເຄືອຍາດ ແລະ ວົງຕະກຸນ. ຜູ້ເຂົ້າຮ່ວມທີ່ພວກເຮົາ ສົນທະນານຳທັງໝົດຕ່າງກໍ່ບອກວ່າ ຜູ້ເຖົ້າຜູ້ແກ່ພາຍໃນບ້ານ ແລະ ອຳນາດການປົກຄອງບ້ານແມ່ນຜູ້ສ້າງກົດລະບຽບ. ພວກເຂົາແມ່ນ ຜູ້ແຈ້ງລະບຽບຕໍ່ປະຊາຊົນ, ຕິດຕາມການປະຕິບັດຂອງປະຊາຊົນ ແລະ ເປັນຜູ້ລົງໂທດຜູ້ທີ່ເຮັດຜິດກົດລະບຽບ. ແຕ່ຍ້ອນແມ່ຍິງບໍ່ໄດ້ ມີສ່ວນຮ່ວມ ໃນການລິເລີ່ມການສົນທະນາທີ່ກ່ຽວຂ້ອງກັບການສ້າງ ກົດລະບຽບ, ພວກເຂົາເຂົ້າຮ່ວມແຕ່ຕອນສຸດທ້າຍ ເຊິ່ງເປັນຕອນທີ່ ຜູ້ນຳປະກາດກ່ຽວກັບກົດລະບຽບ. ໃນບ້ານ ຫາດຈາ, ບໍ່ມີຜູ້ເຖົ້າຜູ້ ແກ່ທີ່ເປັນຜູ້ຍິງ ແລະ ແມ່ຍິງຍັງຢູ່ນອກໂຄງສ້າງຂອງການຄຸ້ມຄອງນີ້; ໃນບ້ານ ຝົນຫໍ ກໍ່ຢູ່ໃນສະຖານະການຄ້າຍຄືກັນ. ແມ່ຍິງຊົນເຜົ່າ ກົມມຸ-ອູ ຈາກບ້ານ ຫາດຈາ ເວົ້າວ່າ:

> *ພໍ່ເຖົ້າຂອງຂ້ອຍ, ພໍ່ຂອງຂ້ອຍ ແລະ ອ້າຍຂອງຂ້ອຍ ເປັນນາຍບ້ານສືບກັນມາຫຼາຍຮຸ່ນຄົນ. ຕອນນີ້ ນ້ອງຊາຍຂ້ອຍເປັນນາຍບ້ານ. ຄົນນັບຖືລາວ ແລະ ເລືອກລາວສະເໝີເມື່ອມີການເລືອກຕັ້ງ. ຫົວໜ້າໝ່ວຍ ກໍ່ເປັນຫຼານຊາຍລາວ ແລະ ຈະເປັນນາຍບ້ານຄົນຕໍ່ໄປ - ພວກເຂົາແມ່ນຜູ້ນຳພາການສົນທະນາກັບຜູ້ເຖົ້າຜູ້ ແກ່ຄົນອື່ນວ່າ ບ່ອນໃດທີ່ປະຊາຊົນຈະເຮັດໄຮ່, ເກັບ ໝາກໄມ້, ເກັບໝາກແໜ່ງ ແລະ ເຄື່ອງປ່າຂອງດົງອື່ນໆ. ເມື່ອພວກເຂົາຕົກລົງເຫັນດີກັນແລ້ວ, ພວກເຂົາກໍ່ຈະ ຈັດກອງປະຊຸມບ້ານເພື່ອປະກາດໃຫ້ປະຊາຊົນຮູ້. ແມ່*

ຮູບ 4: ການຄຸ້ມຄອງປ່າໄມ້ຕາມປະເພນີໃນບ້ານສຶກສາ

1 ສຳລັບຊົນເຜົ່າ ກົມມຸ ແລະ ຊົນເຜົ່າອື່ນໆ ໃນຕະກຸນພາສາ ມອນ-ຂະແມ, ຮູບແບບການແຕ່ງດອງແມ່ນຜູ້ຊາຍແຕ່ງກັບລູກອ້າຍລູກນ້ອງຝ່າຍແມ່ໄດ້, ໂດຍສະເພາະ ແມ່ນລູກສາວຂອງອ້າຍ ຫຼື ນ້ອງຊາຍຂອງແມ່, ເປັນທີ່ຊັດເຈນວ່າສິ່ງທີ່ກ່ຽວຂ້ອງກັບທີ່ດິນແມ່ນມີຄວາມຊັບຊ້ອນ ເປັນຕົ້ນແມ່ນການຄອບຄອງທີ່ດິນໃນລະບົບການ ເຮັດໄຮ່ໝູນວຽນ ຊຶ່ງເປັນສິ່ງທີ່ຍັງຫາຄຳຕອບບໍ່ໄດ້.

ຍິງເຂົ້າຮ່ວມໃນກອງປະຊຸມເພື່ອຟັງຂໍ້ມູນນີ້ ຫຼື ຮັບຂໍ້ມູນຈາກຜົວ ແລະ ເຮັດຕາມກົດລະບຽບນີ້. ທັງແມ່ຍິງ ແລະ ຜູ້ຊາຍ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດກົດລະບຽບໂດຍບໍ່ຕ້ອງຖາມ ແລະ ເຮັດຕາມທີ່ບອກ. ພວກເຮົາບອກກ່ຽວກັບກົດລະບຽບນີ້ໃຫ້ຄົນອື່ນທີ່ເຂົ້າມາໃຊ້ປ່າໄມ້ບ້ານຂອງພວກເຮົາຮູ້ເຊັ່ນດຽວກັນ.

ໃນຂະນະທີ່ພວກເຮົາສົນທະນາກ່ຽວກັບການສ້າງກົດລະບຽບນີ້ ຜູ້ເຂົ້າຮ່ວມຜູ້ຊາຍຄົນໜຶ່ງໄດ້ກ່າວເຖິງການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນໃຈ ແລະ ລະບຽບການນຳໃຊ້ໄມ້ວ່າ: *'ປະເພນີສ່ວນໜຶ່ງຂອງເຜົ່າໄຕຂາວແມ່ນການເຮັດເຮືອນ: ໃນການເຮັດເຮືອນພວກເຮົາຕ້ອງເລືອກຕົ້ນໄມ້ໃນປ່າຢ່າງລະມັດລະວັງ, ເພື່ອໃຫ້ໄດ້ໄມ້ປຸກເຮືອນພຽງພໍ ຕ້ອງໃຊ້ເວລາ ສີ່ຫາຫ້າປີ. ໃນການເລືອກຕົ້ນໄມ້ແມ່ນ ພວກເຮົາໝາຍຕົ້ນໄມ້ທີ່ມັກ ແລ້ວແຈ້ງນາຍບ້ານ ແລະ ສະມາຊິກພາຍໃນບ້ານຄົນອື່ນຮູ້ນຳ. ພວກເຮົາເຮັດແບບນີ້ຍ້ອນວ່າມັນແມ່ນກົດລະບຽບທີ່ສ້າງຂຶ້ນໂດຍຜູ້ເຖົ້າຜູ້ແກ່ ແລະ ອຳນາດການປົກຄອງຂອງບ້ານ. ຜູ້ເຖົ້າຜູ້ແກ່ບ້ານບອກພວກເຮົາວ່າ ພວກເຮົາສາມາດຕັດຕົ້ນໄມ້ມາເຮັດເຮືອນໄດ້, ແຕ່ບໍ່ສາມາດເອົາໄມ້ໄປຂາຍ ເພາະຕ້ອງຮັກສາໄວ້ໃຫ້ລູກຫຼານ. ແມ່ຍິງບໍ່ໄດ້ມີສ່ວນຮ່ວມໃນການສ້າງກົດລະບຽບ, ມັນບໍ່ແມ່ນບົດບາດຂອງພວກເຂົາ ແລະ ພວກເຂົາກໍ່ບໍ່ສາມາດອ່ານ ຫຼື ຂຽນໄດ້. ພວກເຂົາບໍ່ຮູ້ເຮັດວຽກທາງການ ແລະ ຄຸ້ມຄອງບໍ່ລິຫານວຽກບໍ່ເປັນ ເຖິງແມ່ນວ່າພວກເຂົາຈະເຂົ້າໄປໃນປ່າແລະ ນຳໃຊ້ຊັບພະຍາກອນປ່າໄມ້ຄືກັບຜູ້ຊາຍ.'*

ຍ້ອນວ່າ ໂດຍທົ່ວໄປແລ້ວ ແມ່ຍິງໄດຮັບການສຶກສາບໍ່ສູງ ຫຼື ບໍ່ໄດ້ຮຽນເລີຍ ແລະ ມີປະສົບການເຮັດວຽກໃນພື້ນທີ່ສາທາລະນະໜ້ອຍ, ມັນຈຶ່ງເປັນເລື່ອງທຳມະດາ ທີ່ແມ່ຍິງຈາກທັງສອງບ້ານທີ່ພວກເຮົາສຶກສາ ມີຄວາມໝັ້ນໃຈໜ້ອຍໃນການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ ຫຼື ຕັດສິນໃຈກ່ຽວກັບການນຳໃຊ້ປ່າໄມ້, ແຕ່ເຖິງຢ່າງໃດກໍ່ຕາມ, ແມ່ຍິງອາຍຸໄວກາງຈາກບ້ານ ຫາດຈາ ສອງສາມຄົນ ກ່າວວ່າ ພວກເຂົາສາມາດເຮັດວຽກຄຸ້ມຄອງໄດ້ຄືກັບຜູ້ຊາຍຫາກຜົວສະໜັບສະໜູນ ແລະ ຊ່ວຍພວກເຂົາເຮັດວຽກເຮືອນ ລວມທັງການດູແລລູກນ້ອຍ, ແຕ່ວ່າແມ່ຍິງຈາກບ້ານ ຝົນຫໍ ມີຄວາມລັງເລທີ່ຈະມີສ່ວນຮ່ວມໃນການເຮັດວຽກຄຸ້ມຄອງປ່າໄມ້. ສິ່ງໜຶ່ງທີ່ຄວນຮັບຮູ້ໄວ້ຄື ວັດທະນະທຳຂອງຊົນເຜົ່າໄຕຂາວ ແລະ ກົມມຸ ຕ່າງກັນຫຼາຍ ໂດຍສະເພາະແມ່ນການເຮັດກະສິກຳ, ແມ່ຍິງເຜົ່າກົມມຸຮັບຜິດຊອບວຽກສ່ວນໃຫຍ່ໃນການເຮັດໄຮ່, ເຮັດໃຫ້ພວກເຂົາມີຄວາມໃກ້ຊິດກັບປ່າຫຼາຍ ແລະ ຮູ້ວ່າແມ່ນຫຍັງມີຄວາມຈຳເປັນໃນການຄຸ້ມຄອງປ່າໄມ້. ໃນຂະນະທີ່ແມ່ຍິງເຜົ່າໄຕຂາວສ່ວນຫຼາຍແມ່ນເຮັດນາ. ສັງຄົມ ແລະ ການປະຕິບັດຕາມປະເພນີຂອງທັງສອງບ້ານແມ່ນໃຫ້ຄຸນຄ່າກັບຜູ້ຊາຍໃນຖານະເປັນຫົວໜ້າຄອບຄົວ ແລະ ຫົວໜ້າທາງສາທາລະນະ ໃນຖານະເປັນຜູ້ຕັດສິນໃຈ.

ການສຶກສາຄັ້ງນີ້ພົບວ່າ ລະບົບການຄຸ້ມຄອງຕາມປະເພນີແມ່ນມອບອຳນາດໃຫ້ຜູ້ຊາຍໃນການສ້າງກົດລະບຽບ ແລະ ເປັນຜູ້ຕັດສິນໃຈກ່ຽວກັບດິນເຂດປ່າ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້, ລວມທັງການຈັດຕັ້ງປະຕິບັດກົດລະບຽບ, ການຈັດສັນ, ສຶບທອດ, ການໂອນທີ່ດິນ, ການຕັດສິນຂໍ້ຂັດແຍ່ງ ແລະ ລົງໂທດຜູ້ທີ່ເຮັດຜິດກົດລະບຽບ, ແມ່ຍິງບໍ່ມີສ່ວນຮ່ວມ ໃນລະບົບໂຄງສ້າງການຄຸ້ມຄອງບໍລິຫານຕາມປະເພນີນີ້ເລີຍ.

4.4.2. ການມີສ່ວນຮ່ວມຂອງແມ່ຍິງ ໃນການຄຸ້ມຄອງ ບໍລິຫານກ່ຽວກັບສິດການນຳໃຊ້ໃນປ່າ

ໃນ ສປປລາວ, ການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແມ່ນເຮັດຜ່ານຂະບວນການຄື: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແລະ ການວາງແຜນຄຸ້ມຄອງປ່າໄມ້ບ້ານ (VFMP). ຜົນຈາກທັງສອງຂະບວນການນີ້ ເປັນການປະກອບສ່ວນໃນການເຮັດໃຫ້ໄດ້ໃບຢັ້ງຢືນສິດການນຳໃຊ້ທີ່ດິນ (ຈາກ PLUP) ຫຼື ສັນຍາການຄຸ້ມຄອງ ແລະ ສະຫງວນປ່າໄມ້ບ້ານ (VFMCC). ທັງ PLUP ແລະ VFMP ຖືວ່າເປັນສ່ວນໜຶ່ງຂອງຂະບວນການຮັບຮູ້ສິດການນຳໃຊ້ທີ່ດິນສຳລັບຊຸມຊົນໃນທ້ອງຖິ່ນ.

ໃນບ້ານ ຫາດຈາ ໄດ້ຈັດຕັ້ງກິດຈະກຳ PLUP ນຳໂດຍຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ໂດຍການສະໜັບສະໜູນດ້ານການເງິນຈາກ ອົງການຫ່ວງໂຍຮ່ວມໃຈພັດທະນາ (World Renew). ກົງກັນຂ້ານ ບ້ານ ຝົນຫໍ ບໍ່ໄດ້ເຮັດທັງກິດຈະກຳ PLUP ຫຼື VFMP, ແຕ່ຫ້ອງການກະສິກຳເມືອງ ໄດ້ສົ່ງຈົດໝາຍແຈ້ງການໃຫ້ບ້ານຮູ້ວ່າ ເມືອງມີແຜນຈະເພີ່ມຈຳນວນພື້ນທີ່ປ່າໄມ້. ກົດລະບຽບ ແລະ ນະ�โยบายທາງການ ທີ່ຈັດຕັ້ງປະຕິບັດ ແລະ ນຳມາໃຊ້ໃນບ້ານ ເຮັດໃຫ້ມີການປ່ຽນແປງວິທີການຄຸ້ມຄອງທີ່ດິນ ແລະ ປ່າໄມ້ໃນຊຸມຊົນ. ທັງແມ່ຍິງ ແລະ ຜູ້ຊາຍໃນສອງບ້ານທີ່ສຶກສາຮັບຮູ້ເຖິງຄວາມປ່ຽນແປງນີ້ດີ. ສິດຕໍ່ຊັບພະຍາກອນກໍ່ປ່ຽນແປງໃນດ້ານຂອງການເປັນເຈົ້າຂອງ, ໂດຍສະເພາະ ກ່ຽວກັບສິດລວມໝູ່ຕາມປະເພນີໃນເຂດພື້ນທີ່ປ່າໄມ້. ການປົກຄອງໂດຍລວມກໍ່ມີການປ່ຽນແປງ, ເປັນຕົ້ນແມ່ນຜູ້ທີ່ມີບົດບາດໃນການສ້າງກົດລະບຽບ (ເບິ່ງ ຮູບ 5). ໃນການປ່ຽນແປງນີ້, ສະຖາບັນການປົກຄອງແມ່ນທາງພາກລັດ ແລະ ຫ້ອງການບ້ານ. ຜູ້ສ້າງກົດລະບຽບແມ່ນພະນັກງານລັດ ທີ່ເຮັດວຽກຢ່າງໃກ້ສິດກັບອຳນາດການປົກຄອງບ້ານ ເຊິ່ງສ່ວນຫຼາຍແມ່ນຜູ້ຊາຍ.

ໃນບ້ານ ຫາດຈາ, ແມ່ຍິງເຂົ້າຮ່ວມຂະບວນການຈັດສັນທີ່ດິນແບບມີສ່ວນຮ່ວມ, ແຕ່ບໍ່ໄດ້ເຂົ້າຮ່ວມທຸກໆ ຂະບວນການ ແລະ ບໍ່ທັນແມ່ນການເຂົ້າຮ່ວມທີ່ມີຄວາມໝາຍຢ່າງເລິກເຊິ່ງ. ກ່ອນຈະດຳເນີນກິດຈະກຳ PLUP, ທ່ານເຈົ້າເມືອງເອີນປະຊຸມກັບນາຍບ້ານ (ສ່ວນຫຼາຍແມ່ນຜູ້ຊາຍ) ມາປະຊຸມນີ້ຢູ່ຂັ້ນເມືອງ, ແລ້ວວິຊາການຈາກຫ້ອງການກະສິກຳ ແລະ ຫ້ອງການຊັບ ຈຶ່ງຈັດການປະຊຸມກັບປະຊາຊົນໝົດບ້ານ ເຊິ່ງມີທັງແມ່ຍິງ ແລະ ຜູ້ຊາຍເຂົ້າຮ່ວມ ແລະ ແຍກກຸ່ມຍິງ-ຊາຍເພື່ອເກັບກຳຂໍ້ມູນດ້ານສັງຄົມ ແລະ ເສດຖະກິດ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນເກືອບທັງໝົດແມ່ນມາຈາກຜູ້ຊາຍ ເພາະວ່າອຳນາດການປົກຄອງບ້ານເປັນຜູ້ບັນທຶກຂໍ້ມູນເຫຼົ່ານີ້. ແມ່ຍິງຖືກເອີ້ນເຂົ້າມາຮ່ວມຂະບວນການອີກເທື່ອໜຶ່ງ ເມື່ອທີມວິຊາການເອີ້ນມາຮ່ວມປະຊຸມຮອບສຸດທ້າຍ ເພື່ອອະທິບາຍກົດລະບຽບ, ເຊິ່ງພະນັກງານເມືອງເປັນຜູ້ຮ່າງ ແລະ ລະບຸໄວ້ໃນບົດລາຍງານ PLUP. ແມ່ຍິງບໍ່ໄດ້ມີສ່ວນຮ່ວມໃນກອງປະຊຸມຕັດສິນໃຈໃນການແບ່ງເຂດດິນ, ການເດີນສຳຫຼວດ ແລະ ພັດທະນາກົດລະບຽບ, ເນື່ອງຈາກວ່າການເຮັດວຽກກັບທີມງານເມືອງ ແມ່ນເຮັດວຽກຮ່ວມກັບອຳນາດການປົກຄອງ ແລະ ເຖົ້າແກ່ແນວໂຮມບ້ານໂດຍກົງ.

ຜູ້ຊາຍ ຂົນຫຍ້າແຂມຈາກປ່າກັບບ້ານ

ຮູບ 5 – ການຄຸ້ມຄອງບໍລິຫານປ່າໄມ້ຢ່າງເປັນທາງການໃນບ້ານສຶກສາ



ກົດຈະກຳ PLUP ເມື່ອເບິ່ງໄປແລ້ວ ເປັນກົດຈະກຳທີ່ນຳຜົນປະໂຫຍດມາໃຫ້ຊຸມຊົນ ໃນດ້ານຂອງບົດບາດຍິງ-ຊາຍ ແລະ ກຳມະສິດຕໍ່ທີ່ດິນ ແລະ ປ່າໄມ້. ບ້ານ ຫາດຈາ ສຳເລັດການເຮັດກົດຈະກຳ PLUP ໃນປີ 2017, ເຊິ່ງມີສ່ວນເຮັດໃຫ້ປະຊາຊົນພາຍໃນບ້ານເຂົ້າໃຈກ້ຽວກັບກົດລະບຽບຕາມປະເພນີ ແລະ ສິດຂອງເຂົາເຈົ້າຕໍ່ດິນເຂດປ່າ ແລະ ຊັບພະຍາກອນປ່າໄມ້[1] . ບົດຮຽນທີ່ໄດ້ຈາກບ້ານນີ້ແມ່ນທີ່ດິນ ແລະ ປ່າໄມ້[1] ໃນບ້ານໄດ້ແບ່ງອອກເປັນແປດປະເພດໂດຍລວມ. ປ່າໄມ້ບ້ານຖືກແບ່ງອອກເປັນປ່າສາມປະເພດ (ບໍ່ໄດ້ຢູ່ໃນສາມປະເພດປ່າຕາມທາງການ): ປ່າຜະລິດບ້ານ, ປ່າອານຸລັກບ້ານ ແລະ ປ່າປ້ອງກັນບ້ານ. ປ່າແຕ່ລະປະເພດມີກົດລະບຽບການຄຸ້ມຄອງ ທີ່ສ້າງໂດຍທີມ PLUP ຂັ້ນເມືອງ ໂດຍການປຶກສາຫາລືກັບປະຊາຊົນໃນບ້ານ. ໃນລະຫว่ານການດຳເນີນຂະບວນການກົດຈະກຳ PLUP, ທີມວິຊາການປຶກສາຫາລືກັບແມ່ຍິງໃນກຸ່ມແຍກຕ່າງຫາກ ເພື່ອສົນທະນາກ່ຽວກັບຊັບພະຍາກອນປ່າໄມ້ທີ່ພວກເຂົານຳໃຊ້, ແຕ່ແມ່ຍິງບໍ່ໄດ້ຮ່ວມໃນກົດຈະກຳແບ່ງເຂດທີ່ດິນ ແລະ ຕັດສິນໃຈກ່ຽວກັບນະ�โยบาย. ແມ່ຍິງຖືກເອີ້ນມາອີກຄັ້ງໃນເວລາທີມວິຊາການນຳສະເໜີນະโยบาย ແລະ ກົດລະບຽບ, ເຊິ່ງສິ່ງນີ້ໄດ້ລະບຸໄວ້ໃນລາຍງານ PLUP.

ຜູ້ເຂົ້າຮ່ວມທັງໝົດຈາກບ້ານ ຫາດຈາ ລາຍງານວ່າ ດິນປ່າໄມ້ ແລະ ຊັບພະຍາກອນແມ່ນ *'ເຄີຍເປັນຂອງພວກເຮົາ, ມັນແມ່ນປ່າຂອງພວກເຮົາ, ຊັບພະຍາກອນຂອງພວກເຮົາ ແລະ ພວກເຮົາເປັນເຈົ້າຂອງ ແລະ ພວກເຮົາມີສິດເຕັມທີ່ໃນການຄຸ້ມຄອງ ແລະ ຄວບຄຸມ'*. ປະຈຸບັນດິນເຂດປ່າເປັນຂອງປະຊາຊົນ ແຕ່ຢູ່ພາຍໃຕ້ການຄວບຄຸມຂອງລັດຖະບານ ຫຼື ສື່ຕາມຄຳເວົ້າທີ່ວ່າ *'ລັດຄຸ້ມຄອງ ປະຊາຊົນເປັນເຈົ້າ'* ໝາຍຄວາມວ່າ ປະຊາຊົນມີສິດໃນການເຂົ້າເຖິງ, ນຳໃຊ້ ແລະ ປົກປັກຮັກສາປ່າໄມ້, ແຕ່ສິດໃນການໂອນ ຫຼື ໃຫ້ເຊົ່າທີ່ດິນເພື່ອໃຫ້ໄປນຳໃຊ້ໃນຮູບບແບບອື່ນ ຫຼື ປະເພດຂອງປ່າທີ່ອະນຸຍາດໃຫ້ມີ ແມ່ນຕ້ອງໄດ້ຮັບອະນຸຍາດຈາກພາກລັດເທົ່ານັ້ນ. ປະຊາຊົນໃນບ້ານ ຝົນຫໍ ເຂົ້າໃຈເງື່ອນໄຂນີ້ເຖິງວ່າຈະບໍ່ໄດ້ເຮັດກົດຈະກຳ PLUP ໃນບ້ານກໍ່ຕາມ. ເຖິງຢ່າງໃດກໍ່ດີ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄດ້ສົ່ງໜັງສືແຈ້ງການໃຫ້ກັບບ້ານໃນສອງສາມປີກ່ອນເພື່ອແຈ້ງກ່ຽວກັບນະ�โยบายนี้, ຈົດໝາຍໄດ້ລະບຸว่า ປະຊາຊົນຄວນປົກປັກຮັກສາປ່າໄມ້ໃນເຂດທີ່ທາງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງກຳນົດໄວ້. ເຂດປ່າໄມ້ສ່ວນໃຫຍ່ແມ່ນຢູ່ເຂດຊາຍແດນຂອງບ້ານ, ເຂດອ່າງໂຕ່ງ ແລະ ປ່າສັກສິດ. ໃນໜັງສືແຈ້ງການບໍ່ໄດ້ສົ່ງກົດລະບຽບ ຫຼື ນະ�โยบายมานำ ແລະ ແມ່ຍິງທັງໝົດທີ່ສົນທະນານຳບໍ່ມີໃຜຮູ້ກ່ຽວກັບແจ้ງການນີ້.

ໃນການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ແບບມີສ່ວນຮ່ວມ, ໃນທາງປະຕິບັດແລ້ວບ້ານທີ່ສຶກສາຍັງສືບຕໍ່ປະຕິບັດຕາມປະເພນີທີ່ໃຫ້ຄວາມນັບຖືປ່າໄມ້ ແລະ ສິ່ງສັກສິດທີ່ຮັກສາປ່າໄມ້. ຍັງມີການຮັກສາ ແລະ ເຮັດພິທີກຳຢ່າງກວ້າງຂວາງ. ບັນຫາ ໜຶ່ງທີ່ໜ້າເປັນຫ່ວງ ຄືລະບົບການປົກຄອງໃນປະຈຸບັນແມ່ຍິງຍັງບໍ່ໄດ້ມີສ່ວນຮ່ວມໃນຂະບວນການເຕັມທີ່ ແລະ ເຮັດໃຫ້ປະຊາຊົນຮູ້ສຶກພວກເຂົາຖືກລິດທອນສິດໃນການຄວບຄຸມທີ່ດິນເຂດປ່າ ແລະ ຊັບພະຍາກອນ. ການສູນເສຍການເປັນເຈົ້າຂອງລວມໝູ່ ແລະ ສິດລວມໝູ່ເຮັດໃຫ້ປະຊາຊົນເກີດຄວາມລັງເລ ທີ່ຈະປະຕິບັດມາດຕະການເພື່ອປົກປັກຮັກສາທີ່ດິນເຂດປ່າ ແລະ ຊັບພະຍາກອນ.

1 ເພື່ອຮັບປະກັນວ່າບໍ່ໄດ້ສ້າງຄວາມສັບສົນລະຫว่ານັກຄົ້ນຄວ້າ ແລະ ຜູ້ເຂົ້າຮ່ວມ ເມື່ອເວົ້າເຖິງລະບຽບການປະຕິບັດຕາມປະເພນີ ແລະ ເປັນທາງການ, ພວກເຮົາແຍກວິທີການເຮັດວຽກກັບຜູ້ເຂົ້າຮ່ວມເປັນສອງຮູບແບບ ເພື່ອສົນທະນາກ່ຽວກັບກົດລະບຽບ ແລະ ການປະຕິບັດກ່ອນ ແລະ ຫຼັງເຮັດກົດຈະກຳ PLUP.

1 ກ່ອນເຮັດກົດຈະກຳ PLUP, ເຂດປ່າໄມ້ແມ່ນລວມເຖິງບ່ອນທີ່ປະຊາຊົນເຮັດໄຮ່ນຳ.

5. ຂໍ້ແນະນຳສຳລັບບາດກ້າວຕໍ່ໜ້າ

ເພື່ອປັບປຸງ ສິດໃນການເຂົ້າເຖິງທີ່ດິນປ່າໄມ້ ແລະ ຊັບພະຍາກອນທຳມະຊາດທີ່ໝັ້ນຄົງ ແມ່ນຮຽກຮ້ອງໃຫ້ມີການປ່ຽນແປງມາດຖານການປະຕິບັດທາງສັງຄົມທີ່ສື່ເຖິງຄວາມບໍ່ເທົ່າທຽມກັນລະຫວ່າງ ຍິງ-ຊາຍ ເພື່ອໃຫ້ເປັນມາດຖານທີ່ຍອມຮັບເລື່ອງສິດທິຂອງແມ່ຍິງ ແລະ ຄວນມີການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງໄປພ້ອມໆ ກັນ. ຄຳແນະນຳຕໍ່ໄປນີ້ສາມາດ ນຳໄປພິຈາລະນາ ໃນການສົ່ງເສີມຄວາມເທົ່າທຽມ ແລະ ຄວາມເປັນທຳທາງເພດໃນເລື່ອງທີ່ດິນ:

1. **ຄວນມີການຄົ້ນຄວ້າເພີ່ມກ່ຽວກັບຊົນເຜົ່າອື່ນໆ ເພື່ອສ້າງຄວາມເຂົ້າໃຈການນຳໃຊ້ທີ່ດິນ ແລະ ປ່າໄມ້ຕາມ ປະເພນີຂອງເຂົາເຈົ້າ ແລະ ເຂົ້າໃຈຄວາມຮູ້ຂອງຊົນເຜົ່າ ແລະ ຄວາມເຊື່ອທາງສາດສະໜາທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນ ແລະ ປ່າໄມ້.** ການສຶກສານີ້ໄດ້ພົບວ່າ ຂໍ້ມູນກ່ຽວກັບການຄຸ້ມຄອງທີ່ດິນຕາມປະເພນີຂອງແມ່ຍິງ ແມ່ນມີໜ້ອຍທີ່ສຸດ, ການສຶກສາຄົ້ນຄວ້າເພີ່ມເຕີມ ຈະຊ່ວຍໃນການສະໜອງຂໍ້ມູນສຳລັບການປັບປຸງກົດໝາຍ, ນະ�โยบาย ແລະ ກົດລະບຽບຕ່າງໆ ໃນລະດັບຊາດຕໍ່ກັບການຄຸ້ມຄອງທີ່ດິນຕາມປະເພນີ. ບາງບັນຫາທີ່ຄວນພິຈາລະນາໃນການສຶກສາຄົ້ນຄວ້າຄວນເລັ່ງໃສ່ບັນຫາຕໍ່ໄປນີ້:
   - ສຶກສາລະບົບການປະຕິບັດຕາມປະເພນີ ທີ່ມີກົນໄກສະໜັບສະໜູນການບໍລິຫານຄຸ້ມຄອງທີ່ດິນ ແລະ ຄວາມສຳພັນທາງອຳນາດທີ່ເທົ່າທຽມກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍ ໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
   - ສຶກສາການປະຕິບັດທີ່ດີ ກ່ຽວກັບກົນໄກການຕໍ່ລອງ ທີ່ສະຫະພັນແມ່ຍິງບ້ານສາມາດນຳໃຊ້ໄດ້ ເພື່ອສົ່ງເສີມ ແລະ ປົກປ້ອງກຳມະສິດທີ່ດິນຕາມປະເພນີ, ສິດຕ່າງໆ ໃນຂອບເຂດທີ່ດິນປ່າໄມ້ ແລະ ສິດໃນຊັບສິນ ທັງໃນນາມສ່ວນບຸກຄົນ ແລະ/ຫຼື ສິດນຳໃຊ້ລວມໝູ່ ໃນລະບົບການຄຸ້ມຄອງທີ່ດິນຂອງບ້ານ;
   - ສຶກສາກ່ຽວກັບເຕັກນິກວິທີການ ແລະ ກົນໄກ ໃນການຮັບມືທີ່ແມ່ຍິງນຳໃຊ້ ໃນກໍລະນີທີ່ພວກເຂົາເສຍສິດໃນທີ່ດິນ ແລະ ຊັບສິນຂອງເຂົາ;
   - ສ້າງຄວາມເຂົ້າໃຈຕໍ່ສະຖານະການ ຫຼື ຂໍ້ຂັດແຍ່ງ ລະຫວ່າງ ຜົວ ແລະ ເມຍ ທີ່ມີສາເຫດພົວພັນກັບເລື່ອງທີ່ດິນ, ທີ່ດິນປ່າໄມ້ ແລະ ຊັບສິນ;
   - ສ້າງຄວາມເຂົ້າໃຈປັດໃຈດ້ານປະເພນີ ແລະ ທາງການທີ່ເປັນສິ່ງກີດກັ້ນສິດການຄອບຄອງທີ່ດິນຂອງແມ່ຍິງ ແລະ ການປະຕິບັດທີ່ສົ່ງຜົນສະທ້ອນຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ການພັດທະນາສັງຄົມ ແລະ ເສດຖະກິດ;
2. **ສິດໃນການຄຸ້ມຄອງຊັບພະຍາກອນທຳມະຊາດຂອງຊຸມຊົນ ຄວນຖືກຮັບຮູ້ຢ່າງເທົ່າທຽມ ລະຫວ່າງແມ່ຍິງ ແລະ ຜູ້ຊາຍ.** ໃນມາດຕາ 130 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປັດຈຸບັນ (2019) ຮັບຮູ້ສິດການຄອບຄອງຕາມປະເພນີຂອງຊຸມຊົນ.

ແມ່ຍິງ ເຜົ່າ ກຶມມຸ ກັບມາຈາກ ການເອົາຟືນ ໃກ້ ບ້ານ ຫາດຈາ

ສິ່ງນີ້ສະແດງໃຫ້ເຫັນໂອກາດທີ່ດີເພື່ອຮັບປະກັນສິດຕາມປະເພນີຕໍ່ປ່າໄມ້ ແລະ ທີ່ດິນຂອງຊຸມຊົນ-ຊົນເຜົ່າ, ໂດຍສະເພາະແມ່ນແມ່ຍິງ. ສິດລວມໝູ່ ແລະ ການເປັນເຈົ້າຂອງລວມໝູ່ ທີ່ປະຕິບັດໃນບ້ານສຶກສາຄັ້ງນີ້ ຄວນຖືກຮັບຮູ້ໂດຍກົດໝາຍ ແລະ ນະ�โยบายພາກລັດ, ພ້ອມທັງມີການບັງຄັບໃຊ້ ແລະ ສ້າງລະບົບຕິດຕາມທີ່ເຂັ້ມແຂງ. ບາງຄຳແນະນຳມີດັ່ງນີ້:

- ໂຄງການຂອງລັດ ແລະ ກ່ຽວຂ້ອງກັບທີ່ດິນຄວນສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແມ່ຍິງມີສ່ວນຮ່ວມໃນຂະບວນການບໍລິຫານທີ່ດິນ. ຄວນມີກົນໄກສະໜັບສະໜູນເພື່ອຮັບປະກັນໂຄຕ້າທີ່ເຮັດໃຫ້ເກີດຄວາມສະເໝີພາບ ລະຫວ່າງແມ່ຍິງ ແລະ ຜູ້ຊາຍ ໃນຫ້ອງການຄຸ້ມຄອງ ແລະ ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້, ສ້າງຄວາມສາມາດໃຫ້ກັບແມ່ຍິງໃນການເປັນຜູ້ນຳ ແລະ ຕັດສິນບັນຫາໃນແຕ່ລະລະດັບ. ຕົວຢ່າງ: ຕັ້ງເປົ້າໝາຍຈຳນວນແມ່ຍິງທີ່ຢູ່ໃນຄະນະກຳມະການຄຸ້ມຄອງຊັບພະຍາກອນທຳມະຊາດໃນຂັ້ນແຂວງ ແລະ ຂັ້ນເມືອງ, ລວມທັງຄະນະກຳມະການນຳໃຊ້ ແລະ ຄຸ້ມຄອງເຄື່ອງປ່າຂອງດົງ ແລະ ໃນຄະນະກຳມະການຄຸ້ມຄອງປ່າໄມ້ບ້ານ;
- ການປະຕິບັດຕາມປະເພນີໃນຊຸມຊົນ, ໂດຍສະເພາະການປະຕິບັດຕາມປະເພນີຂອງແມ່ຍິງ, ຄວນຖືກຮັບຮູ້, ຍອມຮັບ ແລະ ປັບເຂົ້າໃນກົດລະບຽບ ແລະ ນະ�โยบายການຄຸ້ມຄອງຊັບພະຍາກອນທຳມະຊາດໃນທຸກຂັ້ນ.

3. **ໂຄງການສ້າງຄວາມເຂັ້ມແຂງໃຫ້ກຸ່ມແມ່ຍິງ ເພື່ອຄວາມຍືນຍົງໃນການຂຸດຄົ້ນເຄື່ອງປ່າຂອງດົງ ແລະ ພັດທະນາຕ່ອງໂສ້ມູນຄ່າເພີ່ມ ຄວນໄດ້ຮັບການສົ່ງເສີມໃນຊຸມຊົນຊົນເຜົ່າ.** ການສຶກສາພົບວ່າ ການຂຸດຄົ້ນ ຊັບພະຍາກອນປ່າໄມ້ ເກີນຂອບເຂດແມ່ນບັນຫາຫຼັກທີ່ໜ້າເປັນຫ່ວງໃນບ້ານທີ່ລົງສຶກສາ ແລະ ເປັນບັນຫາທີ່ກະທົບຕໍ່ຜູ້ຍິງໂດຍກົງ.

4. **ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ (CAW) ສາມາດເຂົ້າຮ່ວມໃນທີມວິຊາການທີ່ດິນ.** ທີມງານວິຊາການ ວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຄວນມີຕົວແທນ ຈາກຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງເຂົ້ານຳ ເພື່ອຮັບປະກັນການມີສ່ວນຮ່ວມຢ່າງມີຄວາມໝາຍຂອງ ແມ່ຍິງ ແລະ ເພື່ອສ້າງຈິດສຳນຶກກ່ຽວກັບສິດຂອງແມ່ຍິງ ກ່ຽວກັບທີ່ດິນເຂດປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ. ການເຮັດ ວຽກ ກັບຊຸມຊົນ ຄວນມີຂະບວນການປຶກສາຫາລື ແລະ ໄດ້ ຮັບການຍິນຍອມເຫັນພ້ອມ ຈາກກຸ່ມແມ່ຍິງ ແລະ ປະຊາຊົນ ພາຍໃນບ້ານ. ບາງສິ່ງທີ່ສາມາດເຮັດໄດ້ຄື:

   » ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງໃນ ລະດັບຊາດ, ໂດຍສະເພາະໜ່ວຍງານເພື່ອຄວາມກ້າວໜ້າ ຂອງແມ່ຍິງໃນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້, ຄວນ ເຂົ້າຮ່ວມທຸກກຸ່ມວິຊາການເຮັດວຽກກ່ຽວກັບທີ່ດິນ ແລະ ປ່າໄມ້, ການສ້າງກົດໝາຍ, ທົບທວນກົດໝາຍ, ນິຕິກຳລຸ່ມ ກົດໝາຍ ແລະ ສົນທະນາກົດລະບຽບ ແລະ ນະໂຍບາຍ ເພື່ອຮັບປະກັນວ່າໄດ້ມີການເຊື່ອມສານຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ ແມ່ຍິງໃນທຸກຊ່ອງທາງ;

   » ຕົວແທນຈາກຄະນະກຳມາທິການເພື່ອຄວາມກ້າວໜ້າຂອງ ແມ່ຍິງໃນລະດັບຊາດ ຄວນໄດ້ຮັບການຝຶກອົບຮົມການ ເປັນຄູຝຶກ ໂດຍການເຮັດວຽກຢ່າງໃກ້ສິດກັບຊ່ຽວຊານ ບົດບາດຍິງ-ຊາຍ ແລະ ສິດທິກ່ຽວກັບທີ່ດິນຂອງແມ່ຍິງ ເພື່ອຈັດຝຶກອົບຮົມໃຫ້ທີມງານຕົນເອງຂັ້ນສູນກາງ ແລະ ແຂວງ. ຂັ້ນແຂວງ ຈັດຝຶກອົບຮົມໃຫ້ທີມງານຂັ້ນເມືອງ, ວິຊາການທີ່ເຮັດວຽກດ້ານທີ່ດິນ ແລະ ປ່າໄມ້ ແລະ ຫ້ອງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກົດຈະກຳ ກ່ຽວກັບ ທີ່ດິນ ແລະ ປ່າໄມ້;

   » ກົດຈະກຳໃນຊຸມຊົນຄວນລວມໃຫ້ມີພາກບົດບາດຍິງ-ຊາຍ ທີ່ມີລັກສະນະເຂົ້າໃຈງ່າຍ ແລະ ໃຫ້ປະຊາຊົນມີສ່ວນຮ່ວມ ແລະ ມີການສົນທະນາກັນຢ່າງທົ່ວເຖິງ.

5. **ຄວນມີການສ້າງຈິດສຳນຶກໃຫ້ກັບຜູ້ນຳທ້ອງຖິ່ນ (ທັງແມ່ຍິງ ແລະ ຜູ້ຊາຍ) ເພື່ອໃຫ້ເຂົ້າໃຈຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຄວາມສຳຄັນດ້ານຄວາມໝັ້ນຄົງທາງດ້ານ ສິດກ່ຽວກັບທີ່ດິນຂອງແມ່ຍິງ.** ການສ້າງຈິດສຳນຶກຄວນເນັ້ນ ໃສ່ການສ້າງມາດຖານການປະຕິບັດໃນສັງຄົມຊຸມຊົນ ທີ່ນຳໄປ ສູ່ການປ່ຽນແປງພຶດຕິກຳໃນທາງບວກ. ຈຳເປັນຕ້ອງມີລະບົບ ການຕິດຕາມທີ່ດີ ແລະ ລະບົບການແລກປ່ຽນຂໍ້ມູນ ທີ່ທຸກຄົນ ສາມາດເຂົ້າເຖິງໄດ້ ແລະ ປະຊາຊົນທ້ອງຖິ່ນສາມາດເຂົ້າໃຈໄດ້ ງ່າຍ ເປັນຕົ້ນແມ່ນສຳລັບແມ່ຍິງທີ່ບໍ່ໄດ້ຮັບການສຶກສາໃນ ລະບົບທາງການ.

6. **ການເຂົ້າເຖິງຄວາມໝັ້ນຄົງ ໃນການຄອບຄອງທີ່ດິນຢ່າງ ສະເໝີພາບສຳລັບແມ່ຍິງ ຄວນຖືກນຳມາສົນທະນາໃນກອງ ປະຊຸມທາງດ້ານນະ�โยບາຍທີ່ກ່ຽວຂ້ອງ.** ມີຄວາມຈຳເປັນທີ່ ຕ້ອງຮ່ວມມືກັນລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອສົນທະນາກ່ຽວກັບບັນຫາ ແລະ ທາງແກ້ໄຂ ທີ່ກ່ຽວຂ້ອງ ກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຕາມປະເພນີຂອງແມ່ຍິງ, ເຊິ່ງອາດຈະເຮັດໃນກຸ່ມເຮັດວຽກຈາກຫຼາຍຂະແໜງການ, ຮ່ວມມືກັບເຄືອຂ່າຍທີ່ມີຢູ່ແລ້ວ, ກຸ່ມເຮັດວຽກຂະແໜງການ ຍ່ອຍ ແລະ ກຸ່ມສະເພາະດ້ານອື່ນໆ ກ່ຽວກັບທີ່ດິນ. ກົດຈະກຳ ທີ່ສາມາດເຮັດໄດ້ຄື:

   » ແບ່ງປັນປະສົບການ ແລະ ສົນທະນາກ່ຽວກັບສະພາບຂອງ ແມ່ຍິງໃນການຄຸ້ມຄອງທີ່ດິນທັງໃນລະບົບທີ່ເປັນທາງການ ແລະ ບໍ່ເປັນທາງການ (ຕາມປະເພນີ ແລະ ກົດໝາຍ) ແລະ ວິທີການປະຕິບັດຕົວຈິງທີ່ຈະເຮັດໃຫ້ແມ່ຍິງມີຄວາມ ໝັ້ນຄົງທາງດ້ານສິດກ່ຽວກັບທີ່ດິນ;

   » ຊຸກຍູ້ທາງດ້ານນະ�โยບາຍໃຫ້ມີການເຊື່ອມສານເລື່ອງສິດ ຂອງແມ່ຍິງກ່ຽວກັບທີ່ດິນເຂົ້າໃນກົດໝາຍ, ກົດລະບຽບ ແລະ ນະ�โยບາຍ;

   » ຮ່ວມກັນສ້າງຄຳແນະນຳໃນການປະຕິບັດຕົວຈິງກ່ຽວກັບ ການເຜີຍແຜ່ກົດໝາຍ ແລະ ນະ�โยບາຍເພື່ອຮັບປະກັນວ່າ ສິດຂອງແມ່ຍິງກ່ຽວກັບທີ່ດິນຖືກເຊື່ອມສານເຂົ້າໃນການ ຈັດຕັ້ງປະຕິບັດໂຄງການທີ່ກ່ຽວກັບທີ່ດິນ ແລະ ປ່າໄມ້.

6. ສະຫຼຸບ

ການເຮັດບົດຄົ້ນຄວ້າກໍລະນີສຶກສານີ້ ແມ່ນໄດ້ດຳເນີນຢູ່ໃນຊຸມຊົນ ຊົນເຜົ່າ ສອງພື້ນທີ່ຄື ບ້ານຂອງເຜົ່າ ກົມມຸ-ອູ ແລະ ບ້ານເຜົ່າໄຕ ຂາວ, ທັງສອງບ້ານຕັ້ງຢູ່ນອກເຂດປ່າໄມ້, ເມືອງໃໝ່ ແຂວງ ຜົ້ງ ສາລີ. ວຽກພາກສະໜາມດຳເນີນໃນທ້າຍເດືອນມັງກອນ ຫາຕົ້ນ ເດືອນກຸມພາ 2021. ເຖິງວ່າທັງສອງບ້ານຈະມີຄວາມແຕກຕ່າງ ທາງດ້ານວັດທະນະທຳ, ທັງສອງບ້ານແມ່ນມີລະບົບການສືບ ເຊື້ອສາຍທາງພໍ່ ຫຼື ຜູ້ຊາຍ ຄົນລະປະເພດ ຄື: ແບບນັບຖືຕາມກຸ່ມ ເຄືອຍາດຂອງເຜົ່າ ແລະ ນັບຖືຕາມເຊື້ອສາຍວົງຕະກຸນ. ຊຸມຊົນນີ້ ສ່ວນຫຼາຍ ແມ່ນປົກຄອງບໍລິຫານ ແລະ ຄຸ້ມຄອງໂດຍຜູ້ຊາຍ, ລວມ ທັງການຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້. ທີ່ດິນ ແລະ ຊັບສິນ ແມ່ນມີການສືບທອດຜ່ານສາຍຜູ້ຊາຍ ຫຼື ຈາກພໍ່ຫາ ລູກຊາຍ. ການຄອບຄອງທີ່ດິນສ່ວນໂຕຂອງແມ່ຍິງແມ່ນຖືກ ປົກປ້ອງຢ່າງເປັນທາງການຜ່ານໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ ທີ່ດິນ. ເຖິງຢ່າງໃດກໍ່ຕາມ, ຍັງມີສິດຕາມປະເພນີຫຼາຍຢ່າງກ່ຽວກັບ ທີ່ດິນເຂດປ່າໄມ້ສຳລັບແມ່ຍິງ ທີ່ຍັງຕ້ອງໄດ້ສຶກສາເພີ່ມເຕີມ. ສຳລັບ ການຄອບຄອງທີ່ດິນຂອງຊຸມຊົນແມ່ນຖືກປົກປ້ອງຜ່ານກຳມະສິດ ລວມໝູ່, ສຳລັບແມ່ຍິງໃນຖານະທີ່ເປັນບຸກຄົນ ແລະ ສະມາຊິກໃນ ຄອບຄົວ ຍັງຂາດຄວາມໝັ້ນຄົງໃນການຄອບຄອງທີ່ດິນ.

ການສຶກສາຄັ້ງນີ້ພົບວ່າ ການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ ແລະ ທີ່ດິນ ຂອງແມ່ຍິງ ໂດຍລວມແລ້ວຍັງມີໜ້ອຍຫຼາຍ. ແມ່ຍິງບໍ່ ໄດ້ມີສ່ວນຮ່ວມໃນກົນໄກການຕັດສິນໃຈ, ທັງໃນທາງປະເພນີ ແລະ ທາງການ ລວມທັງບໍ່ໄດ້ຢູ່ໃນຄະນະກຳມະການຄຸ້ມຄອງ ແລະ ຄວບຄຸມປ່າໄມ້. ມີຫຼາຍເຫດຜົນທີ່ເຮັດໃຫ້ຜູ້ຍິງບໍ່ໄດ້ເຂົ້າຮ່ວມໃນ ການຄຸ້ມຄອງປ່າໄມ້ເຊັ່ນ: ເຫດຜົນທີ່ໜຶ່ງແມ່ນບັນທັດຖານທາງ ສັງຄົມເລື່ອງບົດບາດຍິງ-ຊາຍ ຍັງເປັນອຸປະສັກຫຼັກໃນການມີ ສ່ວນຮ່ວມຂອງແມ່ຍິງ, ໂດຍໃຫ້ເຫດຜົນວ່າມັນບໍ່ແມ່ນພື້ນທີ່ສຳລັບ ແມ່ຍິງ; ເຫດຜົນທີສອງແມ່ນ ລະດັບການສຶກສາຕາມລະບົບ ທາງການ ແລະ ການຮູ້ໜັງສືຂອງແມ່ຍິງຍັງຕ່ຳ ເຊິ່ງເປັນສິ່ງ ກີດຂວາງໃນການເຂົ້າເຖິງກົດໝາຍກ່ຽວກັບທີ່ດິນ ແລະ ປ່າໄມ້ ລວມທັງກົດລະບຽບອື່ນໆ.

ເຖິງວ່າການສຶກສາຄັ້ງນີ້ຈະດຳເນີນການໃນເວລາທີ່ສັ້ນ, ແຕ່ກໍ່ເຫັນ ໄດ້ຢ່າງຈະແจ້ງວ່າ ລະບົບການຄຸ້ມຄອງ ແລະ ຄອບຄອງຕາມ ປະເພນີມີຄວາມຊັບຊ້ອນ, ມີລັກສະນະພິເສດ ແລະ ມີຄວາມໝາຍ ສະເພາະຂຶ້ນກັບສະຖານະການ ແລະ ແມ່ຍິງເປັນສ່ວນສຳຄັນໃນ ການປະຕິບັດຂອງລະບົບນີ້. ການສຶກສານີ້ ສາມາດໃຫ້ເຮົາແນມ ເຫັນບົດບາດຂອງແມ່ຍິງໃນສອງຊຸມຊົນທີ່ຍັງປະຕິບັດການຄຸ້ມຄອງ ທີ່ດິນຕາມປະເພນີ. ໂດຍລວມແລ້ວ ແມ່ຍິງຍັງເປັນກຸ່ມທີ່ມີຄວາມ ສ່ຽງ ແລະ ບໍ່ສາມາດເຂົ້າເຖິງຄວາມ ໝັ້ນຄົງໃນການຄອບຄອງ ທີ່ດິນໄດ້ໂດຍກົງ, ສິ່ງນີ້ເປັນຜົນກະທົບທາງດ້ານລົບໃຫ້ແກ່ຄວາມ ສາມາດໃນການຫາລາຍໄດ້ເພີ່ມ, ການປະຕິບັດກົດຈະກຳປະຈຳວັນ ໃນການດຳລົງຊີວິດ, ເຂົ້າຮ່ວມໃນການຕັດສິນໃຈ ແລະ ຄວາມເປັນ ເອກະລາດຂອງແມ່ຍິງ. ການສຶກສານີ້ອາດເປັນແຮງບັນດານໃຈໃຫ້ ນັກຄົ້ນຄວ້າຄົນອື່ນ ສືບຕໍ່ເຮັດການຄົ້ນຄວ້າເພີ່ມເຕີມກ່ຽວກັບລະບົບ ນີ້ ໃນການຫາຫຼັກຖານທີ່ເປັນທາງ ສຳລັບເພີ່ມຄວາມໝັ້ນຄົງໃນ ການຄອບຄອງທີ່ດິນຕາມປະເພນີຂອງແມ່ຍິງ ໃນ ສປປ ລາວ.

ແມ່ຍິງ ແລະ ຜູ້ຊາຍ ຈາກບ້ານ ຫາດຈາ

ເອກະສານອ້າງອິງ

CGIAR Program on Collective Action and Property Rights (CAPRi). (2010). Understanding property rights. In *Resources, rights, and cooperation: A sourcebook on property rights and collective action for sustainable development,* CGIAR Program on Collective Action and Property Rights (CAPRi). Fundamentals of Collective Action and Property Right, Chapter 1, Pp. 9-12. Washington, DC: International Food Policy Research Institute (IFPRI). **https://ebrary.ifpri.org/digital/collection/p15738coll2/id/133875**

MRLG & LIWG (2021). *Assessment of the new Land Law and Forestry Law in Lao People's Democratic Republic: Focusing on Customary Rights.* MRLG and LIWG Report. Vientiane: LIWG, MRLG.

Larson, A.M. (2012). *Tenure rights and access to forests: A training manual for research.* CIFOR, Bogor, Indonesia.

Qrebech, Peter, Fred Bosselman, Jes Bjarup, David Callies, Martin Chanock & Hanne Petersen. (2005). *The role of customary law in sustainable development.* Cambridge University Press.

Somphongbouthakanh, Schenk-Sandbergen. (2020). *Women's Land Right in Lao PDR: Rural transformation and a dream of secure land tenure.* LIWG, Vientiane, Laos.

Visto, A. (2003). *Customary Law and Women. The Chakhesang Nagas.* New Delhi: Regency Publication.

ເອກະສານຊ້ອນທ້າຍ 1: ລາຍຊື່ຜູ້ໃຫ້ການສໍາພາດ

	ແມ່ຍິງ	ຜູ້ຊາຍ	ລວມ
ຊ່ຽວຊານດ້ານບົດບາດຍິງ-ຊາຍ ແລະ ປ່າໄມ້	1		1
ຊ່ຽວຊານດ້ານພັດທະນາຊຸມຊົນ ແລະ ປ່າໄມ້		1	1
ສະຫະພັນແມ່ຍິງລາວ	2		2
ແນວລາວສ້າງຊາດ	1		1
ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ		3	3
ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ	2	1	3
ປະຊາຊົນບ້ານຫາດຈາ	11	19	30
ປະຊາຊົນບ້ານຝົນຫໍ	15	17	32
ລວມ	32	41	73

ເອກະສານຊ້ອນທ້າຍ 2: ຈັນຍາບັນການຄົ້ນຄວ້າ

- ອະທິບາຍຈຸດປະສົງຂອງການສຶກສາຢ່າງຈະແຈ້ງ ໃຫ້ແກ່ ອຳນາດການປົກຄອງບ້ານ ແລະ ຜູ້ທີ່ກ່ຽວຂ້ອງ;
- ຮັບປະກັນວ່ານາຍບ້ານໄດ້ແຈ້ງລ່ວງໜ້າກັບທາງບ້ານຢ່າງລະອຽດກ່ຽວກັບໄລຍະເວລາທີ່ທີມຄົ້ນຄວ້າຈະອາໃສຢູ່ໃນບ້ານ, ຂະບວນການເກັບກຳຂໍ້ມູນ ແລະ ຈຸດປະສົງຂອງການລົງມາເຮັດວຽກ;
- ແຈ້ງໃຫ້ຜູ້ເຂົ້າຮ່ວມທັງໝົດຮູ້ວ່າພວກເຂົາສາມາດເຂົ້າຮ່ວມການສົນທະນາດ້ວຍຄວາມສະມັກໃຈ ແລະ ພວກເຂົາສາມາດຕັດສິນໃຈໄດ້ວ່າຈະເຂົ້າຮ່ວມ ຫຼື ບໍ່ ແລະ ພວກເຂົາສາມາດອອກຈາກການສົນທະນາໄດ້ທຸກເວລາຖ້າຕ້ອງການ ໂດຍບໍ່ຕ້ອງບອກເຫດຜົນວ່າຍ້ອນຫຍັງ;
- ຄຳຖາມທີ່ມີຄວາມອ່ອນໄຫວຕ້ອງຂໍຄວາມຍິນຍອມກ່ອນຖາມ ໂດຍສະເພາະ ຄຳຖາມກ່ຽວກັບພິທີກຳ ຫຼື ຄວາມເຊື່ອ ແລະ ຂໍອານຸຍາດການເຫັນດີຍິນຍອມກ່ອນຈະຖ່າຍຮູບຜູ້ໃຫຍ່, ກິດຈະກຳກຸ່ມ ແລະ ສິ່ງຂອງຕ່າງໆ ທີ່ຜົວພັນກັບ ການສຶກສາ; ຖ້າບໍ່ໄດ້ຮັບການເຫັນດີຍິນຍອມຈະບໍ່ສາມາດຖ່າຍຮູບໄດ້;
- ບໍ່ຖ່າຍຮູບເດັກນ້ອຍກ່ອນເວັ້ນຈະໄດ້ຮັບການເຫັນດີຍິນຍອມຈາກພໍ່ແມ່ ຫຼື ຜູ້ປົກຄອງ;
- ກວດຄືນຂໍ້ມູນກັບຜູ້ເຂົ້າຮ່ວມ ເພື່ອຮັບປະກັນວ່າຂໍ້ມູນທີ່ໄດ້ນັ້ນຖືກແປຄວາມໝາຍຢ່າງຖືກຕ້ອງ ແລະ ບໍ່ມີອະຄະຕິ ຫຼື ການແປຄວາມໝາຍດ້ວຍໂຕເອງທີ່ອາດຈະເຮັດໃຫ້ມີຄວາມໝາຍຜິດໄປ;
- ປະພຶດຢ່າງເໝາະສົມ, ທີມງານປະຕິບັດຕາມວັດທະນະທຳທີ່ ປະຊາຊົນທ້ອງຖິ່ນແນະນຳຢ່າງເຂັ້ມງວດ
- ເຄົາລົບ ຄວາມຄິດເຫັນ, ຄຳຕອບ, ການປະຕິບັດ ແລະ ພຶດຕິກຳທີ່ແຕກຕ່າງກັນ ຂອງຜູ້ເຂົ້າຮ່ວມ ແລະ ປະຊາຊົນໃນຊຸມຊົນ;
- ບໍ່ໃຫ້ຄຳໝັ້ນສັນຍາໃດໆ ກັບປະຊາຊົນ, ຕ້ອງສະແດງໃຫ້ຈະແຈ້ງວ່າຈຸດປະສົງຂອງການຄົ້ນຄວ້າແມ່ນເພື່ອຮຽນຮູ້ກ່ຽວກັບ ປະເພນີ ແລະ ວັດທະນະທຳຂອງຊຸມຊົນທີ່ກ່ຽວຂ້ອງກັບຫົວຂໍ້ການສຶກສາ;
- ມີການຂໍຢ່າງສຸພາບໃນການນຳໃຊ້ພື້ນທີ່ໃນຄົວເຮືອນຂອງຊາວບ້ານ – ຕົວຢ່າງ, ບ່ອນແຕ່ງກິນ, ບ່ອນອາບນ້ຳ ແລະອື່ນໆ;
- ນຳສະເໜີສິ່ງທີ່ຄົ້ນພົບຫຼັກໃຫ້ປະຊາຊົນໃນບ້ານ ທັງແມ່ຍິງ ແລະ ຜູ້ຊາຍ, ເພື່ອຮັບປະກັນການຍິນຍອມເຫັນດີເຫັນພ້ອມຮ່ວມກັນ ກ່ຽວກັບ ວິທີການນຳສະເໜີຂໍ້ມູນຂອງທີມ.

ເອກະສານຊ້ອນທ້າຍ 3: ລາຍການ ແລະ ເສັ້ນສະແດງການນຳໃຊ້ຊັບພະຍາກອນປ່າໄມ້



ລາຍການຊັບພະຍາກອນທີ່ເອົາຈາກປ່າ	ໄປເອົາໂດຍແມ່ຍິງ	ໄປເອົາໂດຍ ຜູ້ຊາຍ	ແມ່ຍິງ ແລະ ຜູ້ຊາຍ ໄປເອົາ ຮ່ວມກັນ
ໝໍ່ໄມ້	3	1	1
ຜັກປ່າ	3	1	0
ຫຍ້າແຂມ (ຂຶນດ້ວຍການຍ່າງ)	3	1	1
ຫຍ້າແຂມ (ຂຶນດ້ວຍລົດຈັກ)	0	3	2
ສັດປ່າ	0	3	0
ຢານ	3	2	2
ຟືນ (ຂຶນດ້ວຍການຍ່າງ)	3	1	1
ຟືນ (ຂຶນດ້ວຍລົດຈັກ, ລົດຕ້ອກງ)	0	3	1
ໝາກດູກເດືອ	3	1	2
ໝໍ່ຫວາຍ	3	0	1
ເປືອກເມືອກ	3	2	1
ໝາກນ້ຳຕານ	3	2	1
ພືດເປັນຢາ	0	0	3
ໄມ້ປຸກສ້າງເຮືອນ	0	3	0
ລວມ:	27	23	16

ກໍລະນີສຶກສານີ້ແມ່ນການສຳຫຼວດຈຸດຕັດລະຫว่างລະບົບການຄອບຄອງທີ່ດິນຕາມປະເພນີ ແລະ ບົດບາດຍິງ-ຊາຍໃນສອງໝູ່ບ້ານ ໃນແຂວງຜົ້ງສາລີທາງພາກເໜືອຂອງລາວ. ປະເທດລາວເປັນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານປະຊາກອນທີ່ເປັນຊົນເຜົ່າ ເຊິ່ງພວກເຂົາຕ້ອງອາໄສຊັບພະຍາກອນປ່າໄມ້ ແລະ ຊັບພະຍາກອນທຳມາຊາດອື່ນໆໃນການດຳລົງຊີວິດ. ຊຸມຊົນເຫຼົ່ານີ້ມີບົດບາດສຳຄັນໃນການອະນຸລັກພູມສັນຖານທີ່ຊັບຊ້ອນນີ້. ເຖິງຢ່າງໃດກໍ່ຕາມການປະຕິບັດຕາມປະເພນີໃນການຄອບຄອງທີ່ດິນຍັງບໍ່ທັນໄດ້ຮັບການບັນທຶກຢ່າງພຽງພໍ ເຮັດໃຫ້ມີຄວາມເຂົ້າໃຈໃນດ້ານນີ້ໜ້ອຍຫຼາຍ, ແລະ ຍິ່ງມີຄວາມເຂົ້າໃຈໜ້ອຍກວ່າເມື່ອເວົ້າເຖິງຄວາມສຳພັນລະຫว่างເພດ ໃນລະບົບຣິດຄອງປະເພນີ. ອີງຕາມການຄົ້ນຄວ້າພາກສະໜາມ, ບົດຄົ້ນຄວ້ານີ້ໄດ້ສົມທຽບລະຫว่างສອງຊຸມເຜົ່າທີ່ມີຄວາມແຕກຕ່າງກັນ, ໄດ້ແກ່ ຊົນເຜົ່າກົມມຸອູ ແລະ ໄຕຂາວ. ເຖິງວ່າຈະມີຄວາມໃກ້ຄຽງກັນທາງພູມສາດ, ແຕ່ການສຶກສາຄັ້ງນີ້ກໍ່ໄດ້ສະແດງໃຫ້ເຫັນວ່າທັງສອງຊົນເຜົ່າມີຄວາມແຕກຕ່າງກັນແນວໃດ ໃນດ້ານການຄຸ້ມຄອງປ່າໄມ້ ແລະ ບົດບາດຍິງ-ຊາຍ. ການສຶກສາໄດ້ພົບວ່າແມ່ຍິງມີຄວາມສຳພັນຢ່າງໃກ້ຊິດກັບປ່າໄມ້ຫຼາຍກວ່າ ແຕ່ຜົດມີສິດໃນປ່າໄມ້ໜ້ອຍກວ່າຜູ້ຊາຍ (ເຊັ່ນ ສິດໃນການສືບທອດມໍລະດົກ ແລະ ການເຂົ້າເຖິງລາຍຮັບທີ່ມາຈາກປ່າໄມ້)

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນອົງການເຄືອຂ່າຍອົງການຈັດຕັ້ງທາງສັງຄົມທີ່ສ້າງຕັ້ງຂຶ້ນຕັ້ງແຕ່ປີ 2007. ເພື່ອຕອບສະໜອງຕໍ່ປະເດັນທີ່ຊັບຊ້ອນ ແລະ ທ້າທາຍທີ່ກ່ຽວຂ້ອງກັບການປົກຄອງປ່າໄມ້, LIWG ໄດ້ດຳເນີນການເປັນຜູ້ເຊື່ອມຕໍ່ ແລະ ນຳຄວາມຊຳນິຊຳນານທີ່ຫຼາຍມາຮວມກັນ, ມຸມມອງ ແລະ ກົດຈະກຳຂອງສະມາຊິກໃນກຸ່ມແມ່ນເພື່ອເຮັດວຽກໃຫ້ມີປະສິດຕິພາບດີກວ່າ ເພື່ອສົ່ງເສີມຄວາມໝັ້ນຄົງໃນການຄອບຄອງທີ່ດິນໃນ ສປປລາວ. ບົດບາດຂອງ LIWG ແມ່ນເປັນຜູ້ໃຫ້ຄວາມສະດວກ, ຜູ້ເຊື່ອມຕໍ່ ແລະ ຜູ້ລົງມືເຮັດ, ສະໜັບສະໜູນກົດຈະກຳຂອງຄູ່ຮ່ວມງານ ແລະ ສະມາຊິກ, LIWG ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມຈາກໂຄງການກ່ຽວກັບທີ່ດິນ, ໂດຍການເກັບກຳ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກໃຫ້ແກ່ການສົນທະນາ.

ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG) ແມ່ນໂຄງການຂອງລັດຖະບານຊູເອດ, ໂດຍຜ່ານອົງການຊູເອດເພື່ອການພັດທະນາ ແລະ ຮ່ວມມື (SDC), ໂດຍການ ໃຫ້ການສະໜັບສະໜູນທາງການເງິນ ຮ່ວມກັບລັດຖະບານເຢຍລະມັນ ແລະ ລັດຖະລານ ລຸກຊໍາບວກ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ MRLG, ກະລຸນາເບິ່ງຕົ້ນທີ່

www.mrlg.org

ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ
ໜ່ວຍ 11, ເຮືອນເລກທີ່ 262, ບ້ານ ສະພານທອງກາງ,
ເມືອງ ສີສັດຕະນາດ, ນະຄອນຫຼວງ, ສປປ ລາວ. ຕູ້ໄປສະນີ 2973,
ວຽງຈັນ, ສປປລາວ 01000
ໂທລະສັບ : +856 21 454 807
Email: info@mrlg.org

ສະໜັບສະໜູນທຶນໂດຍ:

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

german cooperation
DEUTSCHE ZUSAMMENARBEIT

LUXEMBOURG AID & DEVELOPMENT

ຈັດຕັ້ງປະຕິບັດໂດຍ:

Land Equity International

GRET
Professionals for Fair Development

ສະໜັບສະໜຸນໂດຍ:

giz